ມາດຕະຖານການ ດຳເນີນງານ ການປະສານງານ, ການຄຸ້ມຄອງການປະສານງານ ແລະ ການສົ່ງຕໍ່ ແມ່ຍິງ ແລະ ເດັກຍິງ ທີ່ຖືກຄວາມຮຸນແຮງ



ຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ

ຮ່ວມກັບ ອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ

ສິງຫາ 2022

ສາລະບານ

ຄຳນຳ 3

ພາກທີ I: ສະພາບລວມ 7
1. ຄວາມເປັນມາ 7
2. ນິຕິກຳທີ່ກ່ຽວຂ້ອງໃນການແກ້ໄຂຄວາມຮຸນແຮງ 8
3. ຈຸດປະສົງ ແລະ ຂອບເຂດຂອງມາດຕະຖານດຳເນີນງານ 8

ພາກທີ II: ອະທິບາຍຄຳສັບ, ຄຳນິຍາມ ແລະ ຫຼັກການ 9
1. ອະທິບາຍຄຳສັບ ແລະ ຄຳນິຍາມ ສຳລັບເອກະສານສະບັບນີ້ 9
2. ບັນດາຫລັກການສຳຄັນ 15
3. ລັກສະນະທົ່ວໄປຂອງການປົກປ້ອງ, ການບໍລິການຊ່ວຍເຫຼືອທີ່ຈຳເປັນ ສຳລັບຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ 16

ພາກທີ III: ກົນໄກຄຸ້ມຄອງ ແລະ ປະສານງານຂັ້ນສູນກາງ ແລະ ກົນໄກຂັ້ນທ້ອງຖິ່ນ 18
1. ຄະນະຊີ້ນຳການຄຸ້ມຄອງ ແລະ ການປະສານງານ 18
2. ຄະນະຊີ້ນຳການຄຸ້ມຄອງ, ການປະສານງານ ແລະ ການສົ່ງຕໍ່ 20
3. ກອງເລຂາ 22

ພາກທີ IV: ການລາຍງານ ແລະ ການສົ່ງຕໍ່ 23
1. ການຂໍຄວາມຊ່ວຍເຫຼືອ 23
2. ການໃຫ້ຂໍ້ມູນຂອງແມ່ຍິງ ແລະ ເດັກຍິງທີ່ຖືກຄວາມຮຸນແຮງ 25
3. ການໃຫ້ຄວາມຊ່ວຍເຫຼືອ ແລະ ແກ້ໄຂໃນພາວະສຸກເສີນ 25
4. ການຊ່ວຍເຫຼືອໃນໄລຍະຍາວ 25
5. ຄວາມຮັບຜິດຊອບຂອງພາກສ່ວນທີ່ໃຫ້ການບໍລິການຊ່ວຍເຫຼືອ 28
6. ຂະບວນການສົ່ງຕໍ່ລະຫວ່າງພາກສ່ວນທີ່ກ່ຽວຂ້ອງ 32
7. ເສັ້ນທາງການສົ່ງຕໍ່ 33
8. ການປົກປ້ອງ, ການຊ່ວຍເຫຼືອ ແລະ ການບໍລິການທີ່ຈຳເປັນຕໍ່ກັບກຸ່ມທີ່ມີຄວາມສ່ຽງ/ດ້ອຍໂອກາດ 34
9. ການນຳໃຊ້ວິທີການເອົາຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດເປັນໃຈກາງເພື່ອການສົ່ງຕໍ່ 34
10. ການປັບຕົວໃນເຫດການສຸກເສີນ 38

ພາກທີ V: ການເກັບກຳຂໍ້ມູນ ແລະ ການລາຍງານ 39
1. ຊຸດຂໍ້ມູນພື້ນຖານ 39
2. ການເກັບມ້ຽນຂໍ້ມູນ 40
3. ການແລກປ່ຽນຂໍ້ມູນ 40
4. ການລາຍງານ 41
5. ການວິເຄາະຂໍ້ມູນ 41

ພາກທີ VI: ການຝຶກອົບຮົມ 42

ເອກະສານຊ້ອນທ້າຍ 1: ແບບຟອມການລາຍງານກໍລະນີຄວາມຮຸນແຮງບົນພື້ນຖານທາງເພດແບບຫຼາຍພາກສ່ວນ 43

ດ້ານວິຊາການ

ມາດຕະຖານການດຳເນີນງານ ການປະສານງານ, ການຄຸ້ມຄອງການປະສານງານ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດຊີວິດຈາກຄວາມຮຸນແຮງສະບັບນີ້ ຮ່າງໂດຍ: ທ່ານ ນາງ ໂຣບິນ ເມີນີ, ທີ່ປຶກສາສາກົນ.

ກວດກາດ້ານວິຊາການໂດຍ ທ່ານ ນາງ ສີສຸວັນ ວໍຣະບຸດ ຫົວໜ້າແຜນງານ ການປ້ອງກັນ ແລະ ການແກ້ໄຂຄວາມຮຸນແຮງບົນພື້ນຖານທາງເພດ, ທ່ານ ນາງ ວິກຕໍເຣຍ ດາຣຕ ຜູ້ຊ່ຽງຊານ ໃນດ້ານການປ້ອງກັນ ແລະ ການແກ້ໄຂຄວາມຮຸນແຮງບົນພື້ນຖານທາງເພດ, ແລະ ທ່ານ ນາງ ມາລີສາ ແສງດາຣາ, ອາສາສະໝັກຊາວໜຸ່ມ ສະຫະປະຊາຊາດ, ທ່ານ ນາງ ສີລິໄພທູນ ໄຊຍະມຸງຄຸນ ທີ່ປຶກສາຝ່າຍລາວ, ໂດຍການຊີ້ນຳຈາກ ຜູ້ບໍລິຫານສູງສຸດ ທ່ານນາງ ມາຣຽມ ເອຄານ ຈາກ ອົງການ UNFPA ປະຈຳ ສປປ ລາວ.

ໂດຍການຊີ້ນຳຈາກ ທ່ານ ດຣ ນາງ ອິນລາວັນ ແກ້ວບຸນພັນ ປະທານ ສູນກາງສະຫະພັນແມ່ຍິງລາວ ແລະ ຮອງປະທານ ຜູ້ປະຈຳການ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ (ຄຊກມດ) , ທ່ານ ປອ. ນາງ ຈັນໂສດາ ພອນທິບ ຮອງປະທານ ສູນກາງສະຫະພັນແມ່ຍິງລາວ ແລະ ຮອງປະທານ ຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ (ຄຊກມດ) , ທ່ານ ນາງ ມະນີວອນ ຫຼວງສົມບັດ ຫົວໜ້າຫ້ອງການ ຄຊກມດ, ທ່ານ ນາງ ວິໄລວັນ ບຸບຜານຸວົງ ຮອງຫົວໜ້າຫ້ອງການ ຄຊກມດ, ທ່ານ ນາງ ບຸນເຫຼືອ ຈັນທະພົມມາ ຫົວໜ້າສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກນ້ອຍ ສູນກາງສະຫະພັນແມ່ຍິງລາວ, ທ່ານ ນາງ ສຸດາລັກ ພູນສະຫວັດ ຮອງຫົວໜ້າສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກນ້ອຍ ສູນກາງສະຫະພັນແມ່ຍິງລາວ, ທ່ານ ນາງ ສຸກພາພອນ ຜານິດ, ຫົວໜ້າຫ້ອງການສູນກາງສະຫະພັນແມ່ຍິງລາວ ແລະ ພາກສ່ວນອື່ນໆ ທີ່ປະກອບສ່ວນຈາກ ກະຊວງທີ່ກ່ຽວຂ້ອງ.

ອົງການສະຫະປະຊາຊາດກອງທຶນ ສຳລັບປະຊາກອນ (UNFPA): ແມ່ນ ອົງການສະຫະປະຊາຊາດກອງທຶນ ສຳລັບ ປະຊາກອນ ທີ່ເຮັດວຽກຢູ່ໃນຫຼາຍກວ່າ 150 ປະເທດ ລວມທັງ ສປປ ລາວ, ເພື່ອບັນລຸເປົ້າໝາຍເຮັດ ໃຫ້ການເສຍ ຊີວິດຂອງແມ່ເປັນສູນ, ການບໍ່ຕອບສະໜອງຕໍ່ຄວາມຕ້ອງການ ສຳລັບການວາງແຜນຄອບຄົວ ເປັນສູນ ແລະ ເຮັດ ໃຫ້ຄວາມຮຸນແຮງບົນພື້ນຖານທາງເພດເປັນສູນ.

ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່ - ເດັກ (ຄຊກມດ):
ເປັນອົງການຈັດຕັ້ງຂອງລັດຖະບານທີ່ບໍ່ປະຈຳການ ແລະ ຮັບຜິດຊອບໃນການສ້າງ ນະໂຍບາຍ, ຍຸດທະສາດ, ນິຕິ ກຳ, ແຜນປະຕິບັດງານແຫ່ງຊາດ ແລະ ແຜນງານ ກ່ຽວກັບສິດທິຂອງແມ່ຍິງ ແລະ ເດັກ ລະດັບຊາດ ຢູ່ ສປປ ລາວ, ລວມທັງການຈັດຕັ້ງປະຕິບັດເພື່ອກ້າວໄປສູ່ຄວາມສະເໝີພາບຍິງ-ຊາຍ ແລະ ການລຶບລ້າງທຸກຮູບແບບການ ຈຳແນກ ຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຢູ່ ສປປ ລາວ, ໂດຍສອດຄ່ອງກັບເຄື່ອງມື ສິດທິມະນຸດສາກົນ ເຊັ່ນ: ສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (CEDAW) ແລະ ສົນທິສັນຍາສິດທິເດັກ (CRC) ແລະ ດຳເນີນການຕິດຕາມ, ປະເມີນຜົນ ແລະ ລາຍງານຕໍ່ ລັດຖະບານ ແລະ ສາກົນ.

ສອບຖາມຂໍ້ມູນເພີ່ມເຕີມໄດ້ທີ່: laos.office@unfpa.org

ທ່ານສາມາດເຂົ້າເບິ່ງເວັບໄຊທ໌ UNFPA ສປປ ລາວ ໄດ້ທີ່: https://lao.unfpa.org/en ແລະ **ເວັບໄຊທ໌** ຂອງ ຄຊກມດ: https://ncawmc.gov.la
ຜູ້ອອກແບບປຶ້ມຄູ່ມື: ທ້າວ ທະນຸສອນ ບັນນະວົງ
ສະໜັບສະໜູນການເງິນໂດຍ: ລັດຖະບານອິດສະຕາລີ
ສິງຫາ 2022

ຄຳນຳ



ທ່ານ ດຣ ນາງ ອົນລາອັນ ເທ້ອຸນພັນ,

ປະທານສູນກາງສະຫະພັນແມ່ຍິງລາວ ແລະ ຮອງປະທານ ຜູ້ປະຈຳການ
ຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ

ໃນນາມຂອງຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່ - ເດັກ (ຄຊກມດ), ຂ້າພະເຈົ້າມີຄວາມພາກພູມໃຈຫຼາຍທີ່ຈະນຳສະເໜີມາດຕະຖານຂັ້ນຕອນການດຳເນີນການປະສານງານ,ການຄຸ້ມຄອງ ການປະສານງານ ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດຊີວິດ ກໍລະນີຄວາມຮຸນແຮງ ຕໍ່ແມ່ຍິງ ຖືເປັນບາດກ້າວອັນ ສຳຄັນຂອງ ສປປ ລາວ, ເພື່ອຮັບປະກັນປະເທດພວກເຮົາໄດ້ມີການແກ້ໄຂການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ (VAW) ດ້ວຍວິທີການປະສານງານ ແລະ ຮ່ວມມື.

ຄຊກມດ ໄດ້ເຮັດວຽກຮ່ວມມືກັບ UNFPA, ແລະ ໄດ້ປຶກສາຫາລືຢ່າງໃກ້ຊິດກັບບັນດາຂະແໜງການທີ່ ກ່ຽວຂ້ອງ,ເພື່ອສ້າງຂອບວຽກທີ່ສົມບູນແບບທີ່ຈະນຳພາຜູ້ໃຫ້ບໍລິການດ້ານຄວາມຮຸນແຮງບົນພື້ນຖານທາງເພດຕໍ່ແມ່ ຍິງ ທີ່ມີຄວາມ ຊຳນິຊຳນານໃນທ້ອງປະເທດ. ສິ່ງສຳຄັນແມ່ນໃຫ້ແມ່ຍິງ ຫຼື ເດັກຍິງທີ່ຖືກຄວາມຮຸນແຮງ ທີ່ເຂົ້າມາຂໍ ຄວາມຊ່ວຍເຫຼືອ ຮູ້ສຶກປອດໄພ ແລະ ໄດ້ຮັບການເຄົາລົບການຕັດສິນໃຈ, ທາງເລືອກໃນການດູແລ ແລະ ການບໍລິ ການ ທີ່ເຂົາເຈົ້າຕ້ອງການ.

ມາດຕະຖານການດຳເນີນງານສະບັບເບື້ອງຕົ້ນນີ້ (SOP) ໄດ້ນຳໃຊ້ມາດຕະຖານສາກົນ ແລະ ໄດ້ດັດປັບ ໃຫ້ ເໝາະສົມ ກັບການນຳໃຊ້ຢູ່ ສປປ ລາວ; ການສ້າງມາດຕະຖານການດຳເນີນງານ (SOP) ຍັງໄດ້ຕອບສະໜອງ ການຈັດຕັ້ງປະຕິບັດນະໂຍບາຍແຫ່ງຊາດ ແລະ ການຈັດຕັ້ງປະຕິບັດວຽກບູລິມະສິດ ຂອງ ແຜນດຳເນີນງານແຫ່ງຊາດ ເພື່ອປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ 5 ປີ ຄັ້ງທີ II (2021-2025), ໂດຍສະເພາະການຮຽກຮ້ອງໃຫ້ທຸກຂະແໜງການທີ່ມີການບໍລິການຕ້ອງໄດ້ປະສານງານກັນ ແລະ ມີການປະສານງານ ກັບພາກ ສ່ວນອື່ນ ພ້ອມທັງມີຄວາມຮັບຜິດຊອບໃນການຄຸ້ມຄອງການປະສານງານຢ່າງຮອບດ້ານ. ມາດຕະຖານ ຂັ້ນ ຕອນດຳເນີນ (SOP) ການປະສານງານ, ການຄຸ້ມຄອງ ການປະສານງານ ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດ ຊີວິດ ໃນກໍລະນີຖືກຄວາມຮຸນແຮງຕໍ່ແມ່ຍິງ, ຍັງເປັນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດຄຳໝັ້ນສັນຍາ ດ້ານສິດທິມະນຸດສາ ກົນຂອງ ສປປ ລາວ ອີກດ້ວຍ.

ຂ້າພະເຈົ້າຫວັງວ່າຈະໄດ້ຮັບການຈັດຕັ້ງປະຕິບັດ SOP ນີ້ ແລະ ຝຶກອົບຮົມຜູ້ປະສານງານທີ່ເຮັດວຽກ ການປະສານ ແລະ ການຄຸ້ມຄອງການປະສານງານ ຈາກຂະແໜງສາທາລະນະສຸກ, ຂະແໜງ ສັງຄົມ ແລະ ຂະແໜງ ຍຸຕິທຳ ແລະ ຕຳຫຼວດໃນຂັ້ນສູນກາງ, ບັນດາແຂວງເປົ້າໝາຍ ແລະ ໃນທ້ອງປະເທດ. ພ້ອມນີ້, ພວກເຮົາຍັງຈະໄດ້ສືບ ຕໍ່ປັບປຸງ ການຕອບສະໜອງ ຂອງຄວາມຕ້ອງການທີ່ ເປັນອັນສະເພາະ ແລະ ສະລັບສັບຊ້ອນຂອງຜູ້ເຄາະຮ້າຍ ຫຼື ຜູ້ ລອດຊີວິດໃນກໍລະນີຖືກຄວາມຮຸນແຮງ, ມາດຕະຖານ ການດຳເນີນງານສະບັບນີ້ ແມ່ນຈະຖືກນຳໄປຈັດຕັ້ງປະຕິບັດ ເປັນແຕ່ລະໄລຍະ, ມີການຕິດຕາມ, ສະຫຼຸບ, ຖອດຖອນບົດຮຽນ ແລະ ປັບປຸງໃນຕໍ່ໜ້າ.

ຂໍຂອບໃຈເປັນຢ່າງສູງຕໍ່ການສະໜັບສະໜູນຈາກ ອົງການ UNFPA ແລະ ລັດຖະບານ ອົດສະຕຣາລີ, ຂ້າພະເຈົ້າຈະສືບຕໍ່ຕິດຕາມ ການສ້າງຄວາມອາດສາມາດ ແລະ ການປະຕິບັດ ໂຕຈິງຢ່າງຕັ້ງໜ້າ.



ຄຳນຳ



ທ່ານ ນາງ ມາຣຽມ ເອ ຄານ

ຜູ້ຕ່າງໜ້າ ອົງການ ສປຊ ກອງທຶນສຳລັບປະຊາກອນ ປະຈຳ ສປປ ລາວ

ຂ້າພະເຈົ້າຮູ້ສຶກດີໃຈເປັນຢ່າງຍິ່ງທີ່ໄດ້ເຜີຍແຜ່ມາດຕະຖານການດຳເນີນງານການປະສານງານ,ການຄຸ້ມຄອງ ການປະສານງານ ແລະ ການສົ່ງຕໍ່ແມ່ຍິງ ແລະ ເດັກຍິງທີ່ຖືກຄວາມຮຸນແຮງ (SOP ການປະສານງານ). SOP ນີ້ໄດ້ ຖືກພັດທະນາພາຍ ໃຕ້ການນຳພາຂອງຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່ - ເດັກ (ຄຊກມດ), ການສະໜັບສະໜູນຂອງສູນກາງສະຫະພັນແມ່ຍິງລາວ ແລະ ການປະກອບສ່ວນຈາກຂະແໜງການທີ່ ກ່ຽວຂ້ອງ. ມາດຕະຖານການດຳເນີນງານ (SOP) ນີ້ໄດ້ຖືກພັດທະນາຂຶ້ນໂດຍອີງໃສ່ເຄື່ອງມືທີ່ຖືກຍອມຮັບຂອງສາ ກົນໂດຍສະເພາະແມ່ນຊຸດບໍລິການທີ່ຈຳເປັນສຳລັບແມ່ຍິງ ແລະ ເດັກຍິງທີ່ຖືກຄວາມຮຸນແຮງ,

ການສຳຫຼວດແຫ່ງຊາດກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງໃນປະເທດລາວ ປີ 2014 ສະແດງໃຫ້ເຫັນວ່າ ແມ່ ຍິງ 1 ໃນ 3 ຄົນໄດ້ປະສົບກັບຄວາມຮຸນແຮງຢ່າງໜ້ອຍໜຶ່ງປະເພດ (ທາງກາຍ, ທາງເພດ ແລະ/ຫຼື ທາງອາລົມ) ໃນ ຊ່ວງໄລຍະໃດໜຶ່ງ ຂອງຊີວິດເຂົາເຈົ້າ, ຄືກັນກັບຄ່າສະເລ່ຍທົ່ວໂລກ. ເຖິງຢ່າງໃດກໍຕາມ, ມີແມ່ຍິງລາວປະມານ 10% ເທົ່ານັ້ນທີ່ໄດ້ລາຍງານ ຫຼື ຊອກຫາການບໍລິການຈາກເຈົ້າໜ້າທີ່ ເຊັ່ນ: ສຸກສາລາ, ອົງການແມ່ຍິງ ຫຼື ຕຳຫຼວດ. ນີ້ແມ່ນ ເນື່ອງມາຈາກ ການຂາດຄວາມຮູ້, ຄວາມໄວ້ວາງໃຈ, ແລະ ການຈຳກັດການບໍລິການທີ່ມີຄຸນນະພາບ.

ມາດຕະຖານການດຳເນີນງານ (SOP) ນີ້ມີຈຸດປະສົງເພື່ອຮັບປະກັນວ່າບໍ່ມີ "ປະຕູທີ່ຜິດ" ສຳລັບຜູ້ລອດຊີ ວິດທີ່ຊອກ ຫາການຊ່ວຍເຫຼືອ. ຜູ້ລອດຊີວິດອາດຈະເຂົ້າໄປໃນລະບົບຢູ່ໃນຫຼາຍຈຸດ - ການເຂົ້າໄປດ້ວຍຕົນເອງຢູ່ສຸກ ສາລາ ທີ່ໃກ້ທີ່ສຸດ, ຕຳຫຼວດ, ທີ່ພັກອາໄສທີ່ປອດໄພທີ່ໃກ້ທີ່ສຸດຖ້າມີ, ຫຼື ໂທຫາສາຍດ່ວນຂອງສູນກາງສະຫະພັນແມ່ ຍິງລາວ. ຜູ້ໃຫ້ ບໍລິການທັງໝົດຕ້ອງສາມາດໃຫ້ການດູແລໂດຍອີງໃສ່ບົດບາດຂອງເຂົາເຈົ້າ ແລະ ໄດ້ຮັບການຝຶກຝົນ ເພື່ອອ້າງອີງເຖິງ ການບໍລິການ ແລະ ຂະແໜງການອື່ນໆ.

ມາດຕະຖານການດຳເນີນງານນີ້ຈະຊີ້ນຳການສ້າງຕັ້ງກົນໄກການປະສານງານແຫ່ງຊາດ - ເປັນຄະນະກຳມະ ການຊີ້ນຳລະດັບສູງຂອງກະຊວງທີ່ສຳຄັນທີ່ຕອບສະໜອງ ຄວາມຮຸນແຮງບົນພື້ນຖານທາງເພດ ແລະ ຍັງຕັ້ງເສັ້ນທາງ ການສົ່ງຕໍ່ສຳລັບຜູ້ລອດຊີວິດ ຈາກຄວາມຮຸນແຮງບົນພື້ນຖານທາງເພດ. - ກອບການຕົກລົງທີ່ຊ່ວຍ ໃຫ້ຜູ້ໃຫ້ບໍລິການ ນຳພາຜູ້ລອດຊີວິດຈາກການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ (VAW) / ຄວາມຮຸນແຮງບົນພື້ນຖານທາງເພດ (GBV), ກ່ຽວກັບບ່ອນທີ່ຈະຊອກຫາການຊ່ວຍເຫຼືອ, ມີການບໍລິການໃດແດ່ເຊັ່ນ: ການແພດ, ການຊ່ວຍເຫຼືອທາງດ້ານຈິດໃຈ, ດ້ານສັງຄົມ, ການຊ່ວຍເຫຼືອຂອງຕຳຫຼວດ ແລະ ການສະໜັບສະໜູນຄວາມຍຸຕິທຳທາງດ້ານກົດໝາຍ. ມາດຕະ ຖານການດຳເນີນງານນີ້ ສະໜອງໂຄງສ້າງການປະສານງານລະດັບຊາດ ແລະ ເສີມສ້າງສະໜັບສະໜູນ ມາດຕະຖານ ການດຳເນີນງານ ດ້ານສຸຂະພາບ ແລະ ມາດຕະຖານການດຳເນີນງານ ດ້ານດ້ານສັງຄົມສຳລັບການຕອບສະໜອງຕໍ່ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ (VAW).

UNFPA ສະໜັບສະໜູນ ສປປ ລາວ ໃນການຈັດຕັ້ງປະຕິບັດຄຳໝາຍໝັ້ນດ້ານສິດທິມະນຸດສາກົນທີ່ກ່ຽວຂ້ອງກັບ ຄວາມສະເໝີພາບຍິງ-ຊາຍ ແລະ ການປ້ອງກັນຄວາມຮຸນແຮງບົນພື້ນຖານທາງເພດ. ມາດຕະຖານການດຳເນີນງານການປະສານງານ , ການຄຸ້ມຄອງການປະສານງານ ແລະ ການສົ່ງຕໍ່ແມ່ຍິງ ແລະ ເດັກຍິງທີ່ຖືກຄວາມຮຸນແຮງນີ້ ຍັງສະໜັບສະໜູນການປະຕິບັດ ຄຳໝາຍໝັ້ນສັນຍາຂອງລາວຕໍ່ CEDAW, ແຜນປະຕິບັດງານ ປັກກິ່ງ, ກອງປະຊຸມສາກົນວ່າດ້ວຍ ປະຊາກອນ ແລະ ການພັດທະນາ ຄົບຮອບ 25 ປີ (ICPD25), ແລະ ການບັນລຸເປົ້າໝາຍ ການພັດທະນາແບບຍືນຍົງ SDGs.

ຂ້າພະເຈົ້າຫວັງວ່າດ້ວຍການຈັດຕັ້ງປະຕິບັດມາດຕະຖານການດຳເນີນງານການປະສານງານນີ້, ແມ່ຍິງແລະເດັກຍິງຈະໄດ້ຮັບການດູແລທີ່ທັນເວລາແລະການຕອບສະໜອງທີ່ມີຄຸນນະພາບໃນເວລາທີ່ເຂົາເຈົ້າຍ່າງຜ່ານປະຕູໃດໜຶ່ງ. ຂ້າພະເຈົ້າຂໍຂອບໃຈ ຄຊກມດ ແລະ ລັດຖະບານອິດສະຕຣາລີ ໃນບາດກ້າວອັນສຳຄັນນີ້ໃນການຈັດຕັ້ງໂດຍ ອີງໃສ່ລະບົບໃນການຕອບສະໜອງການບໍລິການແກ່ແມ່ຍິງ ແລະ ເດັກຍິງທີ່ຖືກຄວາມຮຸນແຮງ ໃນ ສປປ ລາວ.



ພາກທີ I: ສະພາບລວມ

1. ຄວາມເປັນມາ

ໃນທົ່ວໂລກ, ແມ່ຍິງ 1 ໃນ 3 ຄົນ ຖືກຄວາມຮຸນແຮງທາງດ້ານຮ່າງກາຍ ຫຼື ທາງເພດ, ສ່ວນຫຼາຍແມ່ນຈາກຜົວ ຫຼື ຄູ່ຮັກຂອງເຂົາເຈົ້າ. ຄວາມຮຸນແຮງຕໍ່ແມ່ຍິງ (VAW) ໄດ້ແຜ່ລາມໃນທົ່ວໂລກ ເຊິ່ງມັນໄດ້ບັ່ນທອນສິດທິມະນຸດ ແລະ ໄດ້ເປັນອຸປະສັກກີດຂວາງຕໍ່ການບັນລຸການພັດທະນາແບບຍືນຍົງ ໂດຍເປົ້າຫມາຍ 'ບໍ່ປະໃຜໄວ້ຂ້າງຫຼັງ'. ໃນທົ່ວໂລກ, ແມ່ຍິງຫຼາຍລ້ານຄົນໄດ້ຮັບຜົນກະທົບຈາກຄວາມຮຸນແຮງ, ເຊິ່ງມີຜົນສະທ້ອນອັນໃຫຍ່ຫຼວງ ແລະ ມີຜົນກະທົບໄລຍະຍາວຕໍ່ສຸຂະພາບ, ສະຫວັດດີພາບ ແລະ ຄວາມຈະເລີນກ້າວໜ້າທາງດ້ານເສດຖະກິດຂອງບຸກຄົນ, ຄອບຄົວ ແລະ ຊຸມຊົນ ແລະ ສັງຄົມ.

ຍ້ອນເຫັນໄດ້ເຖິງຜົນຮ້າຍຂອງຄວາມຮຸນແຮງທີ່ສົ່ງຜົນກະທົບຕໍ່ແມ່ຍິງ ແລະ ເດັກຍິງ ຈຶ່ງຮຽກຮ້ອງໃຫ້ມີການນຳເອົາປະເດັນລຶບລ້າງຄວາມຮຸນແຮງເຂົ້າໃນສົນທິສັນຍາ, ຖະແຫຼງການສາກົນ, ຄຳໝາຍໝັ້ນ ໂດຍສະເພາະແມ່ນ ສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (CEDAW), ຖະແຫຼງການ ແລະ ແຜນປະຕິບັດງານ ປັກກິ່ງ, ສົນທິສັນຍາ ວ່າດ້ວຍສິດທິເດັກ (CRC) ລວມທັງວາລະການພັດທະນາ 2030 ແລະ ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ເພື່ອສົ່ງເສີມ ແລະ ປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກຍິງ.

ສຳລັບ ສປປ ລາວ, ເຫັນວ່າຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ຍັງມີຢູ່ໃນສັງຄົມ. ຜົນການສຶກສາລະດັບຊາດກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ປີ 2014 “ປະສົບການດ້ານສຸຂະພາບ ແລະ ຊີວິດຂອງແມ່ຍິງ” ພົບວ່າ 11,6% ຂອງແມ່ຍິງເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍຈາກຜົວ ຫຼື ຄູ່ນອນ, 26.2% ຖືກຄວາມຮຸນແຮງທາງຈິດໃຈ, 7,2% ຖືກຄວາມຮຸນແຮງທາງເພດ, (12,9% ແມ່ນໄວໜຸ່ມອາຍຸລະຫວ່າງ 15-19 ປີ). 15,3% ຂອງແມ່ຍິງແມ່ນຖືກຄວາມຮຸນແຮງທາງຮ່າງກາຍ ແລະ ທາງເພດ, ໃນນັ້ນ 4,2% ແມ່ນຖືກຄວາມຮຸນແຮງທາງຮ່າງກາຍ ແລະ 5,3% ຂອງເດັກຍິງທີ່ມີອາຍຸຕັ້ງແຕ່ 15 ປີຖືກຄວາມຮຸນແຮງທາງເພດໂດຍບຸກຄົນອື່ນ.[1]

ສັງຄົມທົ່ວໄປມີຄວາມຮັບຮູ້ວ່າແມ່ຍິງກຸ່ມຕ່າງໆຖືກກີດກັ້ນ, ຈຳແນກ ແລະ ບໍ່ໄດ້ຮັບຄວາມສະເໝີພາບ ເຮັດໃຫ້ເຂົາເຈົ້າມີຄວາມສ່ຽງຕໍ່ການຖືກຄວາມຮຸນແຮງໃນຮູບແບບຕ່າງໆຫຼາຍຂຶ້ນ. ແມ່ຍິງເຫຼົ່ານີ້ບໍ່ສະເພາະແຕ່ ແມ່ຍິງພິການ, ແມ່ຍິງທີ່ຕິດເຊື້ອ HIV; ແມ່ຍິງສູງອາຍຸ; ກຸ່ມແມ່ຍິງຫຼາກຫຼາຍທາງເພດ, ແຮງງານເຄື່ອນຍ້າຍເພດຍິງ, ກຳມະກອນແມ່ຍິງ, ພະນັກງານແມ່ຍິງບໍລິການບັນເທີງ ແລະ ແມ່ຍິງກຸ່ມອື່ນໆ. ມາດຕະຖານທາງສັງຄົມ ແລະ ການຈຳແນກ ເຮັດໃຫ້ແມ່ຍິງມີຄວາມສ່ຽງໃນການຖືກຄວາມຮຸນແຮງ ທັງເປັນອຸປະສັກໃນການເຂົ້າເຖິງການປົກປ້ອງ ແລະ ການບໍລິການຕ່າງໆ.

ລັດຖະບານແຫ່ງ ສປປ ລາວ ເຫັນໄດ້ເຖິງຄວາມສຳຄັນຂອງການລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ໂດຍໄດ້ອອກກົດໝາຍ ວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ສະບັບເລກທີ 56/ສພຊ ແລະ ແຜນດຳເນີນງານແຫ່ງຊາດ ເພື່ອປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແຕ່ລະໄລຍະ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

[1] ແຜນດຳເນີນງານແຫ່ງຊາດ 5 ປີ ວ່າດ້ວຍການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ (2021-2025).

ມາດຕະຖານດຳເນີນການດຳເນີນງານການປະສານງານ, ການຄຸ້ມຄອງການປະສານງານ ແລະ ການສົ່ງຕໍ່ ໄດ້ຖືກພັດທະນາຂຶ້ນ ເພື່ອອຳນວຍຄວາມສະດວກ ການປະສານງານ ແລະ ການຄຸ້ມຄອງການບໍລິການ ການຊ່ວຍເຫຼືອ ທາງດ້ານສຸຂະພາບ, ຕຳຫຼວດ, ຍຸຕິທຳ ແລະ ການບໍລິການທາງສັງຄົມ ທີ່ຈຳເປັນ ສາມາດຫຼຸດຜ່ອນຜົນສະທ້ອນຈາກ ຄວາມຮຸນແຮງຕໍ່ກັບສະຫວັດດີພາບ, ສຸຂະພາບ ແລະ ຄວາມປອດໄພຂອງຊີວິດແມ່ຍິງ ແລະ ເດັກຍິງ, ການຊ່ວຍເຫຼືອ ໃນການຟື້ນຟູ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ຢຸຕິການໃຊ້ຄວາມຮຸນແຮງບໍ່ໃຫ້ເກີດຂຶ້ນອີກ. ຫຼັກ ການຂອງ ການປະສານງານ ເພື່ອຕອບໂຕ້ກັບຄວາມຮຸນແຮງຕໍ່ແມ່ຍິງ ແມ່ນບໍ່ມີຂະແໜງການໃດສາມາດຕ້ານຄວາມ ຮຸນແຮງຕໍ່ແມ່ຍິງ ແລະ ເດັກໄດ້ຢ່າງມີປະສິດຕິພາບໂດຍການເຮັດວຽກຜູ້ດຽວໄດ້; ດັ່ງນັ້ນ ການຕອບໂຕ້ແບບມີການ ປະສານສົມທົບກັນ ຈຶ່ງຮຽກຮ້ອງໃຫ້ມີການມີສ່ວນຮ່ວມຂອງຫຼາຍຂະແໜງການ ແລະ ກວມເອົາການບໍລິການທີ່ຈຳ ເປັນ ແລະ ກ່ຽວຂ້ອງທັງໝົດຈາກພາກລັດ ແລະ ເອກະຊົນ.

2. ນິຕິກຳທີ່ກ່ຽວຂ້ອງໃນການແກ້ໄຂຄວາມຮຸນແຮງ

ການປະສານງານດ້ານການບໍລິການ ແລະ ການແກ້ໄຂ ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ແມ່ນອີງໃສ່ ບັນດານິຕິກຳດັ່ງຕໍ່ໄປນີ້:

- ກົດໝາຍ ວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ສະບັບເລກທີ 56/ສພຊ
- ແຜນດຳເນີນງານແຫ່ງຊາດ ເພື່ອປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ ເດັກ (2021-2025).

ກົດໝາຍ ແລະ ນະໂຍບາຍຕ່າງໆທີ່ກ່ຽວຂ້ອງມີດັ່ງນີ້:

- ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການຄ້າມະນຸດ (ສະບັບເລກທີ 73/ສພຊ, ລົງວັນທີ 17 ທັນວາ 2015);
- ກົດໝາຍວ່າດ້ວຍຄົນພິການ (ສະບັບເລກທີ 57/ສພຊ, ລົງວັນທີ 10 ທັນວາ 2018);
- ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ (ສະບັບປັບປຸງ, ເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017);
- ປະມວນກົດໝາຍອາຍາ (ສະບັບເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017);
- ດຳລັດວ່າດ້ວຍການຊ່ວຍເຫຼືອທາງດ້ານກົດໝາຍ ສະບັບເລກທີ 77/ສພຊ, ລົງວັນທີ 28 ກຸມພາ 2018;
- ຍຸດທະສາດການປົກປ້ອງສັງຄົມ.
- ກົດໝາຍວ່າດ້ວຍການປ້ອງກັນ ແລະ ສະກັດກັ້ນອາດຊະຍາກຳທາງຄອມພິວເຕີ 2015

3. ຈຸດປະສົງ ແລະ ຂອບເຂດຂອງມາດຕະຖານດຳເນີນງານ

ຈຸດປະສົງຂອງ ມາດຕະຖານການດຳເນີນງານ ນີ້ ແມ່ນເພື່ອເປັນທິດທາງໃນການສ້າງຄວາມເຂົ້າໃຈໃນຂັ້ນ ຕອນລວມ ຂອງວິທີການປະສານງານ, ການຄຸ້ມຄອງການປະສານງານ ແລະ ການສົ່ງຕໍ່ແມ່ຍິງ ທີ່ໄດ້ຮັບຜົນກະທົບຈາກ ຄວາມຮຸນແຮງຢູ່ໃນ ສປປ ລາວ.

ຂອບເຂດຂອງມາດຕະຖານນີ້ລວມມີ ການປະສານງານ, ການຄຸ້ມຄອງການປະສານງານ ລະຫວ່າງຂະ ແໜງ ສຸຂະພາບ, ຂະແໜງຍຸຕິທຳ ແລະ ຕຳຫຼວດ ແລະ ຂະແໜງສັງຄົມ ທີ່ສຳຄັນໃນລະດັບຊາດ, ຂະແໜງການ ແລະ ທ້ອງຖິ່ນ.

ພາກທີ II: ອະທິບາຍຄຳສັບ, ຄຳນິຍາມ ແລະ ຫຼັກການ

1. ອະທິບາຍຄຳສັບ ແລະ ຄຳນິຍາມ ສຳລັບເອກະສານສະບັບນີ້

ຄຳສັບ ແລະ ຄຳນິຍາມທີ່ໃຊ້ໃນເອກະສານສະບັບນີ້ແມ່ນເພື່ອຈຸດປະສົງຂອງການນຳໃຊ້ SOP ສະບັບນີ້ ເທົ່ານັ້ນ ເຊິ່ງອາດຈະບໍ່ມີໃນກົດໝາຍກ່ຽວຂ້ອງຂອງ ສ ປປ ລາວ. ເມື່ອໃດທີ່ຄຳນິຍາມທີ່ມີໃນກົດໝາຍຂອງ ສ ປປ ລາວ ຖືກນຳໃຊ້ ກໍ່ຈະມີການອ້າງອີງແຫລ່ງທີ່ມາຢ່າງຊັດເຈນ.

ການປະສານງານ: ການປະສານງານເປັນອົງປະກອບຫຼັກຂອງການຕອບໂຕ້ຕໍ່ຄວາມຮຸນແຮງຕໍ່ແມ່ຍິງ ໂດຍ ມີການສົມທົບກັນຢ່າງແໜ້ນແຟ້ນ ໂດຍບັນດາຄະນະວິຊາການ, ພະນັກງານ ແລະ ສະຖາບັນຈາກທຸກພາກສ່ວນທີ່ ກ່ຽວຂ້ອງ ເພື່ອປະຕິບັດກົດໝາຍ, ນະໂຍບາຍ, ລະບຽບການ ແລະ ຂໍ້ຕົກລົງ ເພື່ອປ້ອງກັນ ແລະ ແກ້ໄຂຄວາມຮຸນ ແຮງຕໍ່ແມ່ຍິງ ແລະ ເດັກ.

ການຄຸ້ມຄອງການປະສານງານ: ການຄຸ້ມຄອງການປະສານງານມີສອງອົງປະກອບໃຫຍ່, ອົງປະກອບທຳ ອິດແມ່ນການສ້າງ/ການສະໜັບສະໜູນ ກົດໝາຍ ແລະ ນະໂຍບາຍທີ່ຈຳເປັນເພື່ອປະຕິບັດ ແລະ ສະໜັບສະໜູນຊຸດ ບໍລິການທີ່ຈຳເປັນ ເພື່ອລຶບລ້າງ ແລະ ແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ; ອົງປະກອບທີສອງແມ່ນຂະບວນການ ໃຫ້ພາກສ່ວນກ່ຽວຂ້ອງ ຮັບຜິດຊອບໃນການປະຕິບັດພັນທະຂອງຕົນໃນການປະສານງານຂອງພວກເຂົາຕໍ່ກັບຄວາມ ຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແລະ ການຕິດຕາມ ແລະ ປະເມີນຜົນ ການແກ້ໄຂການປະສານງານຂອງເຂົາເຈົ້າ. ການ ຄຸ້ມຄອງແມ່ນຕ້ອງດຳເນີນໄປທັງລະດັບຊາດ ແລະ ລະດັບທ້ອງຖິ່ນ.[2]

ຄວາມຮຸນແຮງຕໍ່ແມ່ຍິງ: ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແມ່ນພຶດຕິກຳ (ການກະທຳ, ການລະເລີຍ, ການເມີນເສີຍ) ທີ່ກໍ່ໃຫ້ເກີດ ຫຼື ຈະກໍ່ໃຫ້ເກີດຄວາມເສຍຫາຍ, ເປັນອັນຕະລາຍຕໍ່ແມ່ຍິງ ແລະ ເດັກທາງກາຍ, ຈິດໃຈ, ທາງເພດ, ຊັບສິນ ຫຼື ທາງດ້ານເສດຖະກິດ.[3]

ຄຳນິຍາມຂອງອົງການສະຫະປະຊາຊາດ ໄດ້ຂະຫຍາຍຄຳນິຍາມນີ້ຕື່ມອີກ ແລະ ລະບຸວ່າຄວາມຮຸນແຮງຕໍ່ ແມ່ຍິງເປັນດັ່ງການກະທຳປະເພດໃດກໍ່ຕາມບົນພື້ນຖານຄຸນລັກສະນະທາງເພດທີ່ເກີດຂຶ້ນໃນທີ່ສາທາລະນະ ຫຼື ຊີວິດ ສ່ວນຕົວ.[4]

ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ[5] ມີ 4 ປະເພດຄື:

- ຄວາມຮຸນແຮງທາງດ້ານຮ່າງກາຍ
- ຄວາມຮຸນແຮງທາງຈິດໃຈ
- ຄວາມຮຸນແຮງທາງເພດ
- ຄວາມຮຸນແຮງດ້ານຊັບສິນ ຫຼື ເສດຖະກິດ

---

[2] ຊຸດບໍລິການທີ່ຈຳເປັນສຳລັບແມ່ຍິງ ແລະ ເດັກຍິງທີ່ໄດ້ຮັບຜົນກະທົບຈາກຄວາມຮຸນແຮງ, ໂມດູນ 5 ບົດທີ 1 ໜ້າ 7

[3] ກົດໝາຍ ວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ

[4] ຖະແຫຼງການສະພາສະຫະປະຊາຊາດກ່ຽວກັບການລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, 20 ທັນວາ 1993

[5] ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12-16 ຂອງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ

ຄຳນິຍາມຂອງກົດໝາຍໃນ ສ ປປ ລາວ ແມ່ນໄດ້ອະທິບາຍລາຍລະອຽດເພີ່ມເຕີມດ້ານລຸ່ມ.

ຄວາມຮຸນແຮງທາງຮ່າງກາຍ/ການລ່ວງລະເມີດທາງຮ່າງກາຍ: ການໃຊ້ຄວາມຮຸນແຮງທີ່ມີຜົນກະທົບຕໍ່ຮ່າງກາຍ ແມ່ນການກະທຳໂດຍເຈດຕະນາ ເປັນຕົ້ນ ການທາລຸນ, ການທຳລະມານ, ການຕົບຕີ, ການເຕະ, ການຊຸກ, ການໂຍນເດັກຖິ້ມ ຊຶ່ງພາໃຫ້ບາດເຈັບ, ມີຮອຍຊ້ຳ ຫຼື ບາງກໍລະນີອາດຈະບໍ່ເຫັນຮ່ອງຮອຍຂອງການໃຊ້ຄວາມຮຸນແຮງ, ເປັນບ້າເສຍຈິດ, ເສຍອົງຄະ ຫຼື ເສຍຊີວິດ.

ຄວາມຮຸນແຮງທາງຈິດໃຈ/ການລ່ວງລະເມີດທາງຈິດໃຈ: ການໃຊ້ຄວາມຮຸນແຮງທີ່ມີຜົນກະທົບຕໍ່ຈິດໃຈ ແມ່ນການກະທຳ, ການເມີນເສີຍ ຫຼື ລະເລີຍ ທີ່ກໍ່ໃຫ້ເກີດຜົນກະທົບຕໍ່ຈິດໃຈຂອງແມ່ຍິງ ແລະ ເດັກ ເປັນຕົ້ນ ການມີເມຍຫຼາຍຄົນ, ການໝິ່ນປະໝາດ, ການນິນທາ, ການໃສ່ຮ້າຍ, ການປ້ອຍດ່າ, ການປະຈານ, ການບໍ່ໃຫ້ຄວາມສຳຄັນ, ການທຳມິດສະຈານ, ການປ່ອຍປະ, ການລຳອຽງ, ການຈຳແນກ, ການແຍກຈາກໝູ່ເພື່ອນ ຫຼື ຄອບຄົວ, ການບໍ່ໃຫ້ກຽດ, ບໍ່ນັບຖື, ການເຍາະເຍີ້ຍສຽດສີ, ການກີດກັ້ນ, ການບັງຄັບ ຫຼື ການຂົ່ມຂູ່ ຊຶ່ງເຮັດໃຫ້ເສື່ອມເສຍຊື່ສຽງ, ກຽດສັກສີ, ອັບອາຍ, ຂາດຄວາມເຊື່ອໝັ້ນ, ເສຍສຸຂະພາບຈິດ, ຊຶມເສົ້າ, ຂ້າຕົວຕາຍ.

ຄວາມຮຸນແຮງທາງເພດ/ການລ່ວງລະເມີດທາງເພດ: ການໃຊ້ຄວາມຮຸນແຮງທີ່ມີຜົນກະທົບທາງເພດແມ່ນ ການກະທຳ ຫຼື ຄວາມພະຍາຍາມກະທຳທີ່ກໍ່ຄວາມເສຍຫາຍຕໍ່ສິດທິທາງເພດຂອງແມ່ຍິງ ແລະ ເດັກ ເປັນຕົ້ນ ການຂົ່ມຂືນທຳຊຳເລົາ, ການບັງຄັບຮ່ວມເພດ, ການທຳລາມົກ, ການທຳອານາຈານ, ການກະທຳທີ່ຫຍາບຊ້າທາງເພດ, ການເວົ້າ ຫຼື ການສຳຜັດ ໃນລັກສະນະທາງເພດ ຊຶ່ງບໍ່ເປັນທີ່ຕ້ອງການຂອງຜູ້ຮັບຟັງ ຫຼື ຜູ້ຖືກສຳຜັດ ຫຼື ການສົ່ງແມ່ຍິງ ຫຼື ເດັກ ໄປຫາບຸກຄົນອື່ນເພື່ອເປົ້າໝາຍທາງເພດ.

ຄວາມຮຸນແຮງດ້ານຊັບສິນ ແລະ ເສດຖະກິດ: ຄວາມຮຸນແຮງຕໍ່ຊັບສິນ ຫຼື ເສດຖະກິດແມ່ນການກະທຳ, ການເມີນເສີຍ ຫຼື ລະເລີຍທີ່ກໍ່ຄວາມເສຍຫາຍຕໍ່ຊັບສິນຂອງຄອບຄົວ, ຊັບສິນທີ່ເປັນກຳມະສິດຮ່ວມກັນ, ຊັບສິນສ່ວນຕົວຂອງແມ່ຍິງ ແລະ ເດັກ ຫຼື ເຮັດໃຫ້ສູນເສຍໂອກາດໃນການສ້າງລາຍໄດ້ ຫຼື ຜົນປະໂຫຍດອື່ນທາງເສດຖະກິດ ເປັນຕົ້ນ ການທຳລາຍ, ຈູດເຜົາ, ມ້າງເພເຮືອນຊານ, ວັດຖຸສິ່ງຂອງ, ການຊຸກເຊື່ອງ, ການຄອບຄອງ, ໂອນ, ນຳໃຊ້ ຫຼື ແບ່ງປັນຊັບສິນໂດຍບໍ່ຖືກຕ້ອງ, ການໃຫ້ຄ່າແຮງງານ ຫຼື ປະຕິບັດນະໂຍບາຍບໍ່ເທົ່າທຽມກັບເພດຊາຍ, ການກີດກັ້ນບໍ່ໃຫ້ເຂົ້າຮ່ວມ ຫຼື ເຄື່ອນໄຫວວຽກງານໃດໜຶ່ງ ທັງໆທີ່ແມ່ຍິງ ແລະ ເດັກ ມີເງື່ອນໄຂ ແລະ ຄວາມສາມາດ.[6]

ຄວາມຮຸນແຮງຕໍ່ເດັກ: ຄຳນິຍາມຂອງຄວາມຮຸນແຮງຕໍ່ເດັກຂອງອົງການສະຫະປະຊາຊາດ ລວມມີທຸກຮູບແບບຂອງຄວາມຮຸນແຮງທາງຮ່າງກາຍ ຫຼືຈິດໃຈ, ການບາດເຈັບ ແລະ ການທາລຸນ, ລະເລີຍ ຫຼື ການປິ່ນປົວເດັກທີ່ລະເລີຍ, ການຂົ່ມເຫັງ ຫຼື ການຂູດຮີດ, ລວມທັງການລ່ວງລະເມີດທາງເພດເດັກ (ເພດຊາຍ ຫຼື ເພດຍິງທີ່ມີອາຍຸຕ່ຳກວ່າ 18 ປີ).[7] ມັນເປັນສິ່ງສຳຄັນທີ່ຈະຕ້ອງຈຳແນກລະຫວ່າງແມ່ຍິງ ແລະ ເດັກ ຍ້ອນວ່າເດັກ ແລະ ແມ່ຍິງມີຄວາມສາມາດໃນການຕັດສິນໃຈທີ່ແຕກຕ່າງກັນ.

[6] ກົດໝາຍ ວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ

[7] ສົນທິສັນຍາສະຫະປະຊາຊາດກ່ຽວກັບສິດທິເດັກ ມາດຕາ 19

ຄວາມຮຸນແຮງບົນພື້ນຖານຄຸນລັກສະນະທາງເພດ: ເປັນຄຳສັບທີ່ນຳໃຊ້ໃນສາກົນທີ່ຢູ່ໃຕ້ກອບຂອງ ຄວາມຮຸນແຮງທີ່ມີຜົນ ຫລື ສິ່ງຜົນກະທົບທີ່ບໍ່ເໝາະສົມຕໍ່ບຸກຄົນໃດໜຶ່ງ ຍ້ອນເພດທີ່ແທ້ຈິງຫຼື ເພດທີ່ເຂົາເຈົ້າຍອມ ຮັບ. ຄຳວ່າ "ຄວາມຮຸນແຮງບົນພື້ນຖານຄຸນລັກສະນະທາງເພດ" (GBV) ຖືກນຳໃຊ້ເປັນພື້ນຖານ ເພື່ອສະແດງໃຫ້ ເຫັນເຖິງຄວາມຈິງທີ່ວ່າ ຄວາມແຕກຕ່າງທາງດ້ານໂຄງສ້າງ, ຄວາມແຕກຕ່າງດ້ານສິດອຳນາດບົນພື້ນຖານຄຸນລັກສະ ນະທາງເພດໃນທົ່ວໂລກ ເຮັດໃຫ້ແມ່ຍິງ ແລະ ເດັກມີຄວາມສ່ຽງຕໍ່ການຖືກຄວາມຮຸນແຮງໃນຫຼາຍຮູບການ. ໃນນີ້ ປະກອບມີການກະທຳທີ່ສົ່ງຜົນກະທົບທາງຮ່າງກາຍ, ທາງເພດ ຫລື ຕໍ່ຈິດໃຈ ຫລື ຄວາມເຈັບປວດ, ການຂົ່ມຂູ່ຈາກ ການກະທຳດັ່ງກ່າວ ເຊັ່ນ, ການບັງຄັບ, ແລະ ການເຮັດໃຫ້ຂາດເສລີພາບອື່ນໆ, ບໍ່ວ່າການກະທຳນັ້ນຈະເກີດຂຶ້ນໃນທີ່ ສາທາລະນະຫລືໃນຊີວິດສ່ວນຕົວກໍຕາມ. ໃນຂະນະທີ່ແມ່ຍິງ ແລະ ເດັກຍິງໄດ້ຮັບຜົນກະທົບທີ່ບໍ່ເໝາະສົມຈາກຄວາມ ຮຸນແຮງບົນພື້ນຖານຄຸນລັກສະນະທາງເພດ ຜູ້ຊາຍ ແລະ ເດັກຊາຍກໍອາດຈະຕົກເປັນເປົ້າໝາຍໄດ້ເຊັ່ນກັນ. ຄຳສັບນີ້ ຍັງຖືກໃຊ້ກັບກຸ່ມຄົນຈຳນວນໜຶ່ງ ເພື່ອອະທິບາຍເຖິງຄວາມຮຸນແຮງຕໍ່ກຸ່ມຄົນທີ່ມີຄວາມຫລາກຫລາຍທາງເພດ (LGBTI), ໃນກໍລະນີເຫຼົ່ານີ້ຄວາມຮຸນແຮງແມ່ນຜິວພັນກັບຄວາມເຊື່ອຕໍ່ກັບຄວາມເປັນເພດຊາຍ/ ເພດຍິງ ແລະ/ ຫຼື ບັນທັດຖານຂອງບົດບາດຍິງຊາຍ.[8]

ຄວາມຮຸນແຮງຈາກຜົວ/ຄູ່ຮ່ວມຊີວິດ ຂອງຕົນເອງ ແມ່ນ "ຮູບການຂອງຄວາມຮຸນແຮງທີ່ແມ່ຍິງທົ່ວໂລກ ໄດ້ພົບພໍ້ຫຼາຍທີ່ສຸດ ລວມທັງການບັງຄັບທາງເພດ, ທາງຈິດໃຈ ແລະ ທາງຮ່າງກາຍໃນແມ່ຍິງ ແລະ ໄວໜຸ່ມຍິງ ຈາກ ຄູ່ນອນຄົນປະຈຸບັນ ຫຼື ຜ່ານມາ ໂດຍທີ່ແມ່ຍິງບໍ່ຍິນຍອມ. ຄວາມຮຸນແຮງທາງຮ່າງກາຍ ແມ່ນການກະທຳທາງຮ່າງກາຍ ໂດຍເຈດຕະນາ, ໂດຍການໃຊ້ກຳລັງ ຫຼື ອາວຸດບັງຄັບ ເພື່ອກໍ່ໃຫ້ເກີດອັນຕະລາຍຫຼືເຮັດໃຫ້ແມ່ຍິງບາດເຈັບ. ຄວາມ ຮຸນແຮງທາງເພດ ລວມເອົາການລ່ວງລະເມີດທາງເພດ, ເຮັດໃຫ້ແມ່ຍິງມີສ່ວນຮ່ວມໃນການກະທຳທາງເພດໂດຍບໍ່ມີ ການຍິນຍອມຂອງລາວ, ແລະ ພະຍາຍາມຫຼືສຳເລັດການຮ່ວມເພດກັບແມ່ຍິງທີ່ເຈັບປ່ວຍ, ພິການ, ຕົກຢູ່ໃນຄວາມ ກົດດັນ ຫຼື ເມົາເຫຼົ້າ ຫຼື ໃຊ້ຢາເສດຕິດອື່ນໆ. ຄວາມຮຸນແຮງຕໍ່ຈິດໃຈລວມເອົາການຄວບຄຸມ ຫຼື ຕັດແຍກແມ່ຍິງໃຫ້ ຢູ່ໂດດດ່ຽວ ແລະ ເຮັດໃຫ້ລາວອັບອາຍ ຫຼື ເຊື່ອມເສຍສື່ສຽງ. ຄວາມຮຸນແຮງທາງເສດຖະກິດ ລວມເອົາການບໍ່ຍອມ ໃຫ້ແມ່ຍິງເຂົ້າເຖິງ ແລະ ຄວບຄຸມຊັບພະຍາກອນຂັ້ນພື້ນຖານ." [9]

ຄວາມຮຸນແຮງບົນພື້ນທາງເພດ ໂດຍ ການນຳໃຊ້ເຕັກໂນໂລຊີ (Technology-facilitated gender-based violence): ເຖິງວ່າຈະບໍ່ມີຄຳນິຍາມທີ່ຍອມຮັບໄດ້ໃນທົ່ວໂລກກ່ຽວກັບ ຄວາມຮຸນແຮງທາງເພດທີ່ ອຳນວຍຄວາມສະດວກໂດຍເຕັກໂນໂລຊີ ແຕ່ໂດຍທົ່ວໄປແລ້ວ ແມ່ນເຂົ້າໃຈວ່າເປັນຄວາມຮຸນແຮງທີ່ກະທຳໂດຍບຸກ ຄົນຕັ້ງແຕ່ໜຶ່ງຄົນຂຶ້ນໄປ ຫຼື ເປັນກຸ່ມ ທີ່ມີຈຸດປະສົງ ແລະ ຊ່ວຍກັນເຮັດໃຫ້ເກີດຄວາມຮຸນແຮງຂຶ້ນ ແລະ ຮຸນແຮງຂຶ້ນ ໄປເລື້ອຍໆ ໂດຍການນຳໃຊ້ເຕັກໂນໂລຊີ ແລະ ການສື່ສານທາງສື່ດິຈິຕອນ ຕໍ່ບຸກຄົນໃດໜຶ່ງບົນພື້ນຖານທາງເພດ ຂອງເຂົາເຈົ້າ. ຄຳອະທິບາຍນີ້ໃນປະຈຸບັນຍັງບໍ່ທັນໄດ້ກຳນົດໄວ້ໃນກົດໝາຍຂອງ ສ ປປ ລາວ.[10]

ຄວາມຮຸນແຮງທາງເພດທີ່ອຳນວຍຄວາມສະດວກໂດຍເຕັກໂນໂລຊີ ປະກອບມີ ການຂົ່ມຂູ່ທາງອອນໄລ, ການເຜີຍແຜ່ຂໍ້ມູນສ່ວນຕົວຂອງໃຜຜູ້ໜຶ່ງ, ການສະກົດຮອຍຕາມໃນໂລກອອນໄລ, ຈຳກັດ ແລະ ຄວບຄຸມການນຳໃຊ້ ເຕັກໂນໂລຊີຂອງແມ່ຍິງໂດຍຄູ່ຮັກ ຫຼື ຜົວ, ຫຼື ການໃຊ້ໂດຣນ ແລະ ການເຝົ້າລະວັງທາງອີເລັກໂທຣນິກເພື່ອອຳນວຍ ຄວາມສະດວກໃຫ້ການໃຊ້ຄວາມຮຸນແຮງ.

---

[8] ຄະນະກຳມະທິການປະຈຳລະຫວ່າງອົງການ, ຄຳແນະນຳສຳລັບການລວມເອົາການແຊກແຊງຄວາມຮຸນແຮງໂດຍອີງໃສ່ບົດບາດຍິງຊາຍໃນ ການປະຕິບັດດ້ານມະນຸດສະທຳ: ຫຼຸດຜ່ອນຄວາມສ່ຽງ, ສິ່ງເສີມຄວາມຕ້ານທານແລະການຟື້ນຟູການຊ່ວຍເຫຼືອ (2015)

[9] ການສຶກສາຂອງເລຂາທິການໃຫຍ່ສະຫະປະຊາຊາດ, supra note 1, para 111-112

[10] UNFPA, "Making all spaces safe: Technology Facilitated Gender-Based Violence", December 2021.

ສິ່ງທີ່ໜ້າເປັນຫ່ວງເປັນພິເສດແມ່ນເທັກໂນໂລຊີທີ່ອຳນວຍຄວາມສະດວກໃນການລ່ວງລະເມີດທາງເພດ, ລວມທັງການແບ່ງປັນຮູບພາບສ່ວນຕົວໂດຍບໍ່ໄດ້ຮັບຄວາມຍິນຍອມ, ການປອມແປງ (ການຕັດຕໍ່ເນື້ອໃນ, ຮູບພາບ, ພາບເຄື່ອນໄຫວ, ສຽງ ແລະ ວິດີໂອ), ຮູບພາບລາມົກອານາຈານຂອງເດັກ ແລະ ການລັກເບິ່ງ (ການເອົາຮູບພາບທີ່ບໍ່ເຫັນດີເປັນເອກະພາບກ້ອງກະໂປງ/ສິ້ນ)

ຜູ້ຖືກເຄາະຮ້າຍ: ແມ່ນແມ່ຍິງ ຫຼື ເດັກ ທີ່ຖືກທຳຮ້າຍທາງຮ່າງກາຍ, ທາງຈິດໃຈ, ທາງເພດ, ຊັບສິນ ຫຼື ທາງດ້ານເສດຖະກິດ ຈາກການກະທຳ, ການລະເລີຍ ຫຼື ການເມີນເສີຍໂດຍຜູ້ກະທຳຜິດຂອງຄວາມຮຸນແຮງ.[11]

ຜູ້ລອດຊີວິດ: ຜູ້ລອດຊີວິດແມ່ນຄຳສັບທີ່ໃຊ້ສຳລັບບຸກຄົນທີ່ຖືກຄວາມຮຸນແຮງ, ຖືກລ່ວງລະເມີດ. ບາງຄັ້ງເຂົາເຈົ້າຖືກເອີ້ນວ່າຜູ້ຖືກເຄາະຮ້າຍ. ຄຳວ່າ "ຜູ້ລອດຊີວິດ" ຖືກເລືອກໃຫ້ໃຊ້ແທນຄຳວ່າ "ຜູ້ຖືກເຄາະຮ້າຍ" ເພື່ອສ້າງຄວາມເປັນເອກະພາບ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ເດັກ.[12]ເຖິງຢ່າງໃດກໍຕາມ, ຄຳສັບ "ຜູ້ຖືກເຄາະຮ້າຍ" ຄວນນຳໃຊ້ຢູ່ໃນບໍລິບົດຂອງກົດໝາຍ ແລະ ຂັ້ນສານ. ເອກະສານສະບັບນີ້ຈະໃຊ້ຄຳວ່າ "ຜູ້ຖືກເຄາະຮ້າຍ-ຜູ້ລອດຊີວິດ", ເພື່ອໃຫ້ສອດຄ່ອງກັບກົດໝາຍລາວ ແລະ ມາດຕະຖານສາກົນ.

ຜູ້ກະທຳຜິດ: ບຸກຄົນທີ່ມີການກະທຳ, ການລະເລີຍ ຫຼື ເມີນເສີຍ ທີ່ເຮັດໃຫ້ເກີດຄວາມເສຍຫາຍທາງດ້ານຮ່າງກາຍ, ຈິດໃຈ, ທາງເພດ ຫຼື ຊັບສິນຕໍ່ແມ່ຍິງ ແລະ ເດັກ.

ພາກສ່ວນກ່ຽວຂ້ອງ: ແມ່ນ ທຸກໆອົງການຈັດຕັ້ງຂອງລັດຖະບານ ແລະ ອົງການຈັດຕັ້ງທາງສັງ ຄົມທີ່ມີບົດບາດໃນການແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃນທຸກລະດັບຂອງລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມ. ພາກສ່ວນກ່ຽວຂ້ອງທີ່ສຳຄັນປະກອບມີຜູ້ຖືກເຄາະຮ້າຍ ແລະ ຜູ້ລອດຊີວິດ ແລະ ຜູ້ຕາງໜ້າຂອງເຂົາເຈົ້າ, ການບໍລິການສັງຄົມ, ຂະແໜງປິ່ນປົວສຸຂະພາບ, ຜູ້ໃຫ້ບໍລິການທາງກົດໝາຍ, ຕຳຫຼວດ, ໄອຍະການ, ຜູ້ພິພາກສາ, ອົງການປົກປ້ອງເດັກ ແລະ ຂະແໜງການສຶກສາ, ແລະ ອື່ນໆ.[13] ເຊັ່ນ:ຜູ້ທີ່ເຄື່ອນຍ້າຍແຮງງານ, ພະນັກງານກົງສຸນ ແລະ ສູນຂໍ້ມູນຂ່າວສານແຮງງານເຄື່ອນຍ້າຍ.

ຜູ້ໃຫ້ບໍລິການກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ:[14] ຜູ້ໃຫ້ບໍລິການມີສອງປະເພດຄື “ຜູ້ໃຫ້ການບໍລິ ການທົ່ວໄປ” ແລະ “ຜູ້ຊ່ຽວຊານ” ທີ່ໃຫ້ບໍລິການແກ່ຜູ້ເຄາະຮ້າຍ ຫຼື ຜູ້ລອດຊີວິດຈາກຄວາມຮຸນແຮງຕໍ່ແມ່ຍິງ.

- ຜູ້ໃຫ້ບໍລິການທົ່ວໄປແມ່ນການບໍລິການທົ່ວໄປທີ່ບໍລິການໂດຍອຳນາດການປົກຄອງຂອງລັດ ເຊັ່ນ: ການ ບໍລິການສັງຄົມ,ການບໍລິການສຸຂະພາບ,ການບໍລິການດ້ານການຈ້າງງານເຊິ່ງບໍ່ໄດ້ອອກແບບສະເພາະເພື່ອຜົນປະໂຫຍດຂອງຜູ້ເຄາະຮ້າຍເທົ່ານັ້ນ.
- ຜູ້ໃຫ້ບໍລິການພິເສດໄດ້ຖືກອອກແບບ ແລະ ຜ່ານການພິສູດວ່າສາມາດຕອບສະໜອງຄວາມຕ້ອງການໃນຮູບແບບຄວາມຮຸນແຮງຕໍ່ແມ່ຍິງ ແລະ ປະຊາຊົນທົ່ວໄປບໍ່ສາມາດໃຫ້ບໍລິການໄດ້. ການບໍລິການເຫຼົ່ານີ້ສາມາດເປັນການບໍລິການທີ່ດຳເນີນໂດຍລັດ ຫຼື ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ເຊັ່ນ: ທີ່ພັກຫຼົບໄພ, ການຊ່ວຍເຫຼືອທາງດ້ານກົດໝາຍ ຫຼື ການບໍລິການອື່ນໆ

[11] ກົດໝາຍ ວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ

[12] ຄະນະກຳມະການນິຕິສາດສາກົນ. ການເຂົ້າເຖິງຄວາມຍຸຕິທຳຂອງແມ່ຍິງສຳລັບຄວາມຮຸນແຮງທີ່ອີງໃສ່ບົດບາດຍິງຊາຍ: ຄູ່ມືຜູ້ປະຕິບັດ, ສະບັບເລກທີ 12. 2016. (ເຈນີວາ)

[13] UN Women, UNFPA, WHO, UNDP, UNODC ຊຸດບໍລິການທີ່ຈຳເປັນສຳລັບແມ່ຍິງ ແລະເດັກຍິງທີ່ຂຶ້ນກັບຄວາມຮຸນແຮງ ເຂົ້າເຖິງໄດ້ທີ່ https://www.unwomen.org/en/digital-library/publications/2015/12/essential-services-package-for-women-and-girls-subject-to-violence

[14] Kelly, L. (2018). ແຜນທີ່ບໍລິການສະໜັບສະໜຸນຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງຕໍ່ແມ່ຍິງທີ່ສອດຄ່ອງກັບມາດຕະຖານສິນທິສັນຍາອີສຕັນບູນ. ເຂົ້າເຖິງເອກະສານໄດ້ທີ່ 16808ec66b (coe.int)

ການບໍລິການທີ່ຈຳເປັນ: ການບໍລິການທີ່ຈຳເປັນ ກວມເອົາບັນດາຊຸດການບໍລິການຫຼັກທີ່ຂະແໜງສາທາ, ການບໍລິການສັງຄົມ, ຂະແໜງຍຸຕິທຳ ແລະ ຕຳຫຼວດ ສະໜອງໃຫ້. ການບໍລິການຢ່າງຕ່ຳສຸດ ຕ້ອງຮັບປະກັນສິດ ທິ, ຄວາມປອດໄພ ແລະ ສະຫວັດດີພາບຂອງແມ່ຍິງ ຫຼື ເດັກ ຜູ້ປະສົບກັບຄວາມຮຸນແຮງບົນພື້ນຖານຄຸນລັກສະນະ ທາງເພດ.[15]

ໜ່ວຍງານສະຫະວິຊາຊີບເພື່ອການໂຕ້ຕອບ: ແມ່ນພາກສ່ວນທີ່ມີສ່ວນກ່ຽວຂ້ອງ ແລະ ໄດ້ລົງນາມໃນ ຂໍ້ຕົກລົງເຮັດວຽກໃນການປະສານງານ ເພື່ອໂຕ້ຕອບກັບຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກພາຍໃນຊຸມຊົນ. ໜ່ວຍ ງານເຫຼົ່ານີ້ ສຸມໃສ່ຮັບປະກັນການໂຕ້ຕອບທີ່ມີປະສິດທິພາບໃຫ້ແກ່ບຸກຄົນ.[16]

ວິທີການເອົາຜູ້ລອດຊີວິດເປັນໃຈກາງ: ວິທີການເອົາຜູ້ລອດຊີວິດຈາກຄວາມຮຸນແຮງເປັນໃຈກາງ ແມ່ນ ເພື່ອສ້າງຄວາມເຂັ້ມແຂງໃຫ້ຜູ້ລອດຊີວິດໂດຍການໃຫ້ບູລິມະສິດຕໍ່ສິດທິ, ຄວາມຕ້ອງການ ແລະ ຄວາມປາດຖະໜາ ຂອງລາວ. ໝາຍຄວາມວ່າ ວຽກງານຕ່າງໆ (ການໂຕ້ຕອບ ຫຼື ການປ້ອງກັນ) ໃຫ້ບູລິມະສິດແກ່ຄວາມປອດໄພ, ການ ຕັດສິນໃຈຢ່າງເປັນເອກະລາດ, ການຍິນຍອມ ແລະ ການປົດລັບຂອງຜູ້ລອດຊີວິດ. ນອກນັ້ນ ຍັງໝາຍເຖິງການຮັບປະ ກັນວ່າຜູ້ລອດຊີວິດສາມາດເຂົ້າເຖິງການບໍລິການທີ່ເໝາະສົມ, ສາມາດເຂົ້າເຖິງໄດ້ ແລະ ການບໍລິການທີ່ມີຄຸນນະ ພາບດີດັ່ງນີ້:

- ການໃຫ້ບໍລິການດ້ານສຸຂະພາບ.
- ການຊ່ວຍເຫຼືອດ້ານຈິດຕະ-ສັງຄົມ.
- ການເອົາໃຈໃສ່ຄວາມປອດໄພ
- ການບໍລິການດ້ານກົດໝາຍ.[17]

ການສົ່ງຕໍ່: ການສົ່ງຕໍ່ແມ່ນຂະບວນການສົ່ງຜູ້ລອດຊີວິດໄປຮັບການບໍລິການທີ່ເໝາະສົມ. ການສົ່ງຕໍ່ ອາດເກີດຂຶ້ນຢູ່ 2 ລະດັບທີ່ແຕກຕ່າງກັນດັ່ງນີ້:

1) ຜູ້ເຄາະຮ້າຍ/ຜູ້ລອດຊີວິດໄປຂໍຄວາມຊ່ວຍເຫຼືອດ້ວຍຕົນເອງ: ການສົ່ງຕໍ່ນີ້ເກີດຂຶ້ນເມື່ອຜູ້ເຄາະຮ້າຍ/ຜູ້ ລອດຊີວິດຕິດຕໍ່ຫາຜູ້ໃຫ້ບໍລິການໂດຍກົງ ແລະ ບໍ່ໄດ້ຖືກສົ່ງຕໍ່ ຫຼື ສົ່ງໂດຍບຸກຄົນອື່ນ.
2) ການສົ່ງຕໍ່ລະຫວ່າງຂະແໜງການທີ່ກ່ຽວຂ້ອງ: ການສົ່ງຕໍ່ເກີດຂຶ້ນລະຫວ່າງຂະແໜງການທີ່ກ່ຽວຂ້ອງ. ຕົວຢ່າງ: ການສົ່ງຕໍ່ຈາກອົງການຊ່ວຍເຫຼືອທາງດ້ານກົດໝາຍໄປຫາໜ່ວຍງານໃຫ້ຄວາມຊ່ວຍເຫຼືອທາງ ດ້ານສັງຄົມ ຫຼື ສົ່ງຕໍ່ຈາກອົງການຈັດຕັ້ງຂອງລັດໄປຫາອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ.

ຈຸດປະສົງຂອງການສົ່ງຕໍ່ແມ່ນເພື່ອສະໜອງການປົກປ້ອງ ແລະ ການຊ່ວຍເຫຼືອຢ່າງເປັນລະບົບ, ແນໃສ່ ປົກປ້ອງສິດທິແລະຜົນປະໂຫຍດອັນຊອບທຳຂອງຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ.

---

[15] ຄືກັບຂ້າງເທິງ
[16] ຄືກັບຂ້າງເທິງ
[17] UNFPA ການຄຸ້ມຄອງຄວາມຮຸນແຮງທາງເພດໃນເຫດສຸກເສີນ: ຄູ່ມື E-learning Companion, 2012.

ເສັ້ນທາງການສົ່ງຕໍ່: ກອບວຽກທີ່ເຫັນດີເອກະພາບກັນ ໄດ້ເຮັດໃຫ້ພາກສ່ວນກ່ຽວຂ້ອງມີວິທີການ ແລະ ເປັນແນວທາງໃນການແກ້ໄຂກໍລະນີຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ທີ່ຕ້ອງການຄວາມຊ່ວຍເຫຼືອ ແຕ່ບໍ່ສາມາດເຂົ້າເຖິງໄດ້ ເຊັ່ນ: ການບໍລິການປິ່ນປົວດ້ານສຸຂະພາບ, ການຊ່ວຍເຫຼືອທາງດ້ານຈິດຕະ-ສັງຄົມ, ການຊ່ວຍເຫຼືອຈາກຕຳຫຼວດ, ການຊ່ວຍເຫຼືອດ້ານກົດຫມາຍ ແລະ ການຊ່ວຍເຫຼືອເຂົ້າສູ່ຂະບວນການຍຸຕິທຳ.[18]

ການລາຍງານພາກບັງຄັບ: ກົດໝາຍບາງປະເທດ ກຳນົດໃຫ້ບຸກຄົນ ຫຼື ພາກສ່ວນທີ່ກ່ຽວຂ້ອງທີ່ໄດ້ກຳນົດໃນກົດໝາຍຕ້ອງໄດ້ລາຍງານ ເຊັ່ນ: ຜູ້ໃຫ້ບໍລິການດ້ານສຸຂະພາບລາຍງານ (ໂດຍທົ່ວໄປແມ່ນຕໍ່ເຈົ້າໜ້າທີ່ຕຳຫຼວດ ຫຼື ລາຍງານໃນລະບົບຂອງກົດໝາຍ) ເຫດການຕ່າງໆ ທີ່ຮັບຮູ້ ຫຼື ສົງໄສ ຄວາມຮຸນແຮງໃນຄອບຄົວ ຫຼື ຄວາມຮຸນແຮງຂອງຜົວ/ຄູ່ຮ່ວມຊີວິດ. ໃນຫຼາຍປະເທດ ການລາຍງານພາກບັງຄັບແມ່ນໃຊ້ໃນກໍລະນີການລ່ວງລະເມີດ ແລະ ການຂົ່ມເຫັງເດັກ, ແຕ່ໃນບາງປະເທດການລາຍງານພາກບັງຄັບແມ່ນໃຫ້ລາຍງານທັງກໍລະນີຄວາມຮຸນແຮງຕໍ່ແມ່ຍິງຈາກຜົວ/ຄູ່ຮ່ວມຊີວິດ.

ການຍິນຍອມ: ແມ່ນການຕົກລົງເຫັນດີຂອງເຂົາເຈົ້າກັບການບໍລິການບົນພື້ນຖານທີ່ມີຂໍ້ມູນຄົບຖ້ວນ, ລວມທັງຄວາມສ່ຽງ ແລະ ຜົນປະໂຫຍດ; ເຂົາເຈົ້າສາມາດຕັດສິນໃຈເອງ ແລະ ບໍ່ມີການບີບບັງຄັບ, ການຂົ່ມຂູ່ ຫຼື ຄຳສັນຍາເພື່ອນຳມາເປັນຜົນປະໂຫຍດເພື່ອຮັບປະກັນການຍິນຍອມ.[19] ຖ້າມີຄວາມຈຳເປັນທີ່ຕ້ອງມີການລາຍງານໃຫ້ເຈົ້າຫນ້າທີ່ຕຳຫຼວດ ຫຼື ເຈົ້າຫນ້າທີ່ອື່ນໆ ຜູ້ຖືກເຄາະຮ້າຍທີ່ເປັນແມ່ຍິງ ທີ່ເປັນຜູ້ໃຫຍ່ ຄວນໄດ້ຮັບການແຈ້ງໃຫ້ຊາບໃນຂະບວນການນີ້.

ການມອບສິດ: ຕາມກົດໝາຍແລ້ວເດັກບໍ່ສາມາດໃຫ້ການຍິນຍອມດ້ວຍຕົນເອງໄດ້ຈົນກວ່າຈະມີອາຍຸຄົບ 18 ປີ. ເຖິງຢ່າງໃດກໍຕາມ, ອີງຕາມຫຼັກການຂອງການມີສ່ວນຮ່ວມຂອງເດັກ, ເດັກ (ອີງຕາມອາຍຸທີ່ກຳນົດ) ຄວນໄດ້ຮັບຂໍ້ມູນກ່ຽວກັບທາງເລືອກຕ່າງໆ ແລະ ຄວາມຄິດເຫັນຂອງເຂົາເຈົ້າກໍຄວນໄດ້ຮັບການພິຈາລະນາ ເມື່ອມີການສ້າງໂຄງການ ຫຼື ກິດຈະກຳຕ່າງໆ. ຄຳແນະນຳທົ່ວໄປກ່ຽວກັບອາຍຸມີດັ່ງນີ້:

- ໂດຍທົ່ວໄປແລ້ວເດັກອາຍຸ 16 ປີ ແລະ 16 ຂຶ້ນໄປ ເປັນຜູ້ໃຫຍ່ພຽງພໍທີ່ຈະສາມາດສະໜອງຂໍ້ມູນທີ່ສຳຄັນໃນການຕັດສິນໃຈ.
- ເດັກອາຍຸລະຫວ່າງ 14 ຫາ 16 ປີ ຖືວ່າເປັນຜູ້ໃຫຍ່ພຽງພໍທີ່ຈະປະກອບສ່ວນເຂົ້າໃນການຕັດສິນໃຈ ໂດຍການແລກປ່ຽນແນວຄວາມຄິດຂອງເຂົາເຈົ້າ.
- ເດັກອາຍຸລະຫວ່າງ 8 ຫາ 14 ປີ ສາມາດມີສ່ວນຮ່ວມເຂົ້າໃນຂັ້ນຕອນການຕັດສິນໃຈໄດ້ເປັນຢ່າງດີ ແຕ່ຕ້ອງໄດ້ມີການປະເມີນຄວາມເປັນຜູ້ໃຫຍ່ເປັນລາຍບຸກຄົນ.
- ເດັກອາຍຸຕ່ຳກວ່າ 9 ປີ ມີສິດທີ່ຈະອອກຄຳຄິດເຫັນ ແລະ ຮັບຟັງຄຳຄິດເຫັນຂອງເຂົາເຈົ້າ. ເຂົາເຈົ້າອາດຈະສາມາດເຂົ້າຮ່ວມໄດ້ໃນລະດັບໃດໜຶ່ງ, ແຕ່ຄວນລະມັດລະວັງ ບໍ່ໃຫ້ເພີ່ມພາລະໃຫ້ເຂົາເຈົ້າໂດຍເຮັດໃຫ້ເຂົາເຈົ້າມີຄວາມຮູ້ສຶກວ່າເຂົາເຈົ້າມີຄວາມຮັບຜິດຊອບຕໍ່ການຕັດສິນໃຈ.
- ກອບວຽກຂອງ ຂັ້ນຕອນມາດຕະຖານການດຳເນີນງານ.
- ສຸດທ້າຍແລ້ວ, ຂໍ້ແນະນຳກໍຄື ຕ້ອງໄດ້ມີການຊັ່ງຊາງ ແລະ ຕັດສິນຕາມແຕ່ລະກໍລະນີ ອີງຕາມອາຍຸຂອງເດັກ, ຄວາມເປັນຜູ້ໃຫຍ່ ແລະ ການພັດທະນາຂອງເດັກ ແລະ ພິຈາລະນາລວມໄປເຖິງປັດໃຈທາງດ້ານວັດທະນາທຳ, ຮີດຄອງປະເພນີ ແລະ ສະພາບແວດລ້ອມ ແລະ ພິເສດກໍຄື ໃຫ້ຄຳນຶງເຖິງຜົນປະໂຫຍດອັນຊອບທຳຂອງເດັກເປັນສິ່ງສຳຄັນທີ່ສຸດຢູ່ໃນການຕັດສິນໃຈທັງໝົດ.

---

[18] ດັດແປງເອົາຈາກຄະນະປະຈຳອົງການອະນຸກຳມະການດ້ານການກະທຳກ່ຽວກັບບົດບາດຍິງ-ຊາຍ ແລະ ມະນຸດສະທຳ ສ້າງຕັ້ງຂັ້ນຕອນການດຳເນີນງານມາດຕະຖານການໃຊ້ຄວາມຮຸນແຮງໂດຍອີງໃສ່ບົດບາດຍິງ-ຊາຍ (SOPs) ເພື່ອປ້ອງກັນ ແລະ ຕອບສະໜອງຕໍ່ຄວາມຮຸນແຮງທີ່ອີງໃສ່ບົດບາດຍິງຊາຍ, 2008. ຄະນະປະຈຳລະຫວ່າງອົງການ. ແນວທາງການລວມເອົາການແຊກແຊງຄວາມຮຸນແຮງໂດຍອີງໃສ່ບົດບາດຍິງຊາຍໃນການປະຕິບັດດ້ານມະນຸດສະທຳ: ການຫຼຸດຜ່ອນຄວາມສ່ຽງ, ສິ່ງເສີມຄວາມຢືດຢຸ່ນ ແລະການຊ່ວຍເຫຼືອຟື້ນຟູ, 2015.

[19] ເອກະສານຂອງຜູ້ລອດຊີວິດຈາກຄວາມຮຸນແຮງທາງເພດ (GBV) - GSDRC

2. ບັນດາຫລັກການສຳຄັນ

ບັນດາຫຼັກການສຳຄັນເຫຼົ່ານີ້ ໄດ້ເປັນພື້ນຖານໃຫ້ແກ່ການແກ້ໄຂແບບມີການສົມທົບກັນ, ເຊິ່ງແມ່ນຫລັກການລວມ ແລະ ສາມາດນຳໄປໃຊ້ໄດ້ກັບການບໍລິການທັງໝົດ.

ຫຼັກການມະນຸດສະທຳ: ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ເຮັດໜ້າທີ່ໃນການປົກປ້ອງ, ການບໍລິການຊ່ວຍເຫຼືອອັນຈຳເປັນ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ຕ້ອງດຳເນີນຢ່າງຮອບດ້ານ, ຄົບຖ້ວນ, ພາວະວິໄສ ແລະ ທັນເວລາ ໂດຍຖືເອົາຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດຊີວິດ ເປັນໃຈກາງ ລວມທັງນຳເອົາຜູ້ກະທຳຜິດ/ຜູ້ໃຊ້ຄວາມຮຸນແຮງ ມາດຳເນີນຄະດີຕາມກົດໝາຍ. ສຳລັບຜູ້ຖືກເຄາະຮ້າຍ ທີ່ມີອາຍຸເກີນ 18 ປີ ການໃຫ້ບໍລິການຊ່ວຍເຫຼືອອັນຈຳເປັນດ້ານສັງຄົມ ຕ້ອງຍຶນພື້ນຖານຄວາມເຫັນດີຂອງຜູ້ກ່ຽວ.

ຫຼັກການສະເໝີພາບ: ຜູ້ຖືກເຄາະຮ້າຍທຸກຄົນ ມີສິດເທົ່າທຽມກັນທີ່ຈະໄດ້ຮັບການປົກປ້ອງຈາກພາກສ່ວນທີ່ກ່ຽວຂ້ອງຍຶນພື້ນຖານກົດໝາຍພາຍໃນ ແລະ ສາກົນ ໂດຍບໍ່ມີການຈຳແນກສະຖານະພາບທາງດ້ານການເມືອງ, ເສດຖະກິດ-ສັງຄົມ, ສັນຊາດ, ເຊື້ອຊາດ, ສາສະໜາ, ເຜົ່າ, ພາສາ, ເພດ, ໄວ/ອາຍຸ, ແລະ ອື່ນໆ.

ຫຼັກການຖືເອົາຜູ້ຖືກເຄາະຮ້າຍເປັນໃຈກາງ: ໃນການປົກປ້ອງ, ຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງນັ້ນ, ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຖືເອົາສິດ, ຜົນປະໂຫຍດສູງສຸດຂອງຜູ້ຖືກເຄາະຮ້າຍເປັນໃຈກາງ ຍຶນພື້ນຖານຄວາມສະໝັກໃຈ, ການຍິນຍອມ ແລະ ການມີສ່ວນຮ່ວມຂອງຜູ້ຖືກເຄາະຮ້າຍ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ເຊັ່ນ: ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ກົດໝາຍວ່າດ້ວຍການດູແລສຸຂະພາບ ແລະ ອື່ນໆ .

ຜົນປະໂຫຍດສູງສຸດຂອງຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດຊີວິດ ລວມມີ ການຊ່ວຍເຫຼືອດ້ານສັງຄົມສົງເຄາະ, ການໃຫ້ຄຳປຶກສາ, ການພັກເຊົາ, ການເບິ່ງແຍງລ້ຽງດູເດັກ, ການຊ່ວຍເຫຼືອທາງດ້ານກົດໝາຍ, ການຊ່ວຍເຫຼືອດ້ານການແພດ, ການສຶກສາ ແລະ ຝຶກອົບຮົມວິຊາຊີບ, ການຊ່ວຍເຫຼືອດ້ານເສດຖະກິດ ແລະ ການກັບຄືນສູ່ຄອບຄົວ ແລະ ສັງຄົມ.

ຫຼັກການຮັກສາຄວາມລັບ ແລະ ຄວາມປອດໄພ: ເພື່ອຮັບປະກັນຄວາມປອດໄພໃຫ້ແກ່ຜູ້ຖືກເຄາະຮ້າຍ, ເຈົ້າໜ້າທີ່ ແລະ ພາກສ່ວນທີ່ໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຕ້ອງຮັກສາຄວາມລັບຂອງຜູ້ກ່ຽວ ເປັນຕົ້ນ ສະຖານະພາບ, ທີ່ຢູ່, ຂໍ້ມູນສຸຂະພາບ, ສະຖານການສຶກສາ, ສະຖານທີ່ເຮັດວຽກ ແລະ ອື່ນໆ ລວມທັງບໍ່ໃຫ້ເປີດເຜີຍຂໍ້ມູນສ່ວນຕົວຂອງຜູ້ຖືກເຄາະຮ້າຍ ເພື່ອຫຼີກລ່ຽງບໍ່ໃຫ້ເກີດຄວາມເປັນອັນຕະລາຍຕໍ່ຜູ້ຖືກເຄາະຮ້າຍຕາມພາຍຫຼັງ.

ຫຼັກການສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງຜູ້ຖືກເຄາະຮ້າຍ: ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທີ່ເຮັດໜ້າທີ່ໃນການປົກປ້ອງ, ການບໍລິການຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງຕ້ອງຊ່ວຍເຫຼືອເຂົາເຈົ້າໃຫ້ມີສຸຂະພາບຈິດທີ່ດີ, ມີການສຶກສາ, ໄດ້ຮັບການຝຶກອົບຮົມວິຊາຊີບ ແລະ ມີວຽກເຮັດງານທຳ ແລະ ມີລາຍຮັບທີ່ໝັ້ນຄົງ, ຊີວິດການເປັນຢູ່ດີຂຶ້ນ, ສາມາດກັບຄືນສູ່ຄອບຄົວ ແລະ ສັງຄົມ, ດຳລົງຊີວິດຢ່າງເປັນປົກກະຕິ ທັງເປັນການປ້ອງກັນບໍ່ໃຫ້ເຂົາເຈົ້າຕົກເປັນຜູ້ຖືກເຄາະຮ້າຍຊ້ຳອີກ.

ຫຼັກການຄວາມຮັບຜິດຊອບຂອງຜູ້ກະທຳຜິດ: ຜູ້ກະທຳຜິດຕ້ອງຮັບຜິດຊອບການກະທຳຜິດຂອງຕົນຕາມກົດໝາຍ. ສຳລັບຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດຊີວິດ ທີ່ຕ້ອງການທີ່ຈະດຳເນີນການທາງຍຸຕິທຳໃນລະບົບສານ, ຕ້ອງສະໜອງການເຂົ້າເຖິງຄວາມຍຸຕິທຳຢ່າງເຕັມເປົ້າໝາຍ ແລະ ສົ່ງເສີມຄວາມສາມາດຂອງຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ແລະ ໃຫ້ຄວາມເປັນເອກະລາດໃນການກະທຳດັ່ງກ່າວ; ໃນຂະນະດຽວກັນ ຕ້ອງຮັບປະກັນວ່າພາລະ ຫຼື ໜ້າທີ່ໃນການຊອກຫາຄວາມຍຸຕິທຳ ບໍ່ໄດ້ຕົກເປັນໜ້າທີ່ຂອງຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດຊີວິດ ແຕ່ຕ້ອງແມ່ນໜ້າທີ່ຂອງພາກລັດ, ເນື່ອງຈາກວ່າບໍ່ແມ່ນຜູ້ເຄາະຮ້າຍທຸກຄົນຕ້ອງການທີ່ຈະເຂົ້າຮ່ວມໃນລະບົບຍຸຕິທຳທາງອາຍາ, ວິທີການອື່ນໆໃນການຮັກສາດ້ານຄວາມປອດໄພ ແລະ ຄວາມຮັບຜິດຊອບແມ່ນມີຄວາມຈຳເປັນ, ລວມທັງການເຂົ້າເຖິງກົນໄກ ຄຳສັ່ງໃນການປົກປ້ອງຜູ້ຖືກເຄາະຮ້າຍໄດ້ງ່າຍ ແລະ ມີຜົນຕໍ່ຜູ້ກະທຳຜິດ ເພື່ອແນໃສ່ການປ່ຽນແປງລະບົບຄວາມເຊື່ອ ທີ່ເອື້ອຍອຳນວຍຄວາມສະດວກໃນຄວາມຮຸນແຮງ.

ຫຼັກການປະສານງານໃນການໃຫ້ບໍລິການ: ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ເຮັດໜ້າທີ່ປົກປ້ອງ, ການບໍລິການຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຕ້ອງມີການປະສານງານກັນຢ່າງກົມກຽວ ລວມທັງການພົວພັນ ແລະ ການຮ່ວມມືກັບຕ່າງປະເທດ.

3. ລັກສະນະທົ່ວໄປຂອງການປົກປ້ອງ,ການບໍລິການຊ່ວຍເຫຼືອທີ່ຈຳເປັນສຳລັບຜູ້ຖືກເຄາະຮ້າຍ /ຜູ້ລອດຊີວິດ

ໃນການປົກປ້ອງ ແລະ ຊ່ວຍເຫຼືອອັນຈຳເປັນເບື້ອງຕົ້ນແກ່ຜູ້ຖືກເຄາະຮ້າຍນັ້ນ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງດຳເນີນບົນພື້ນຖານການເຫັນດີ ຫຼື ການປະຕິເສດທີ່ຈະຮັບເອົາການຊ່ວຍເຫຼືອຂອງຜູ້ຖືກເຄາະຮ້າຍ ລວມທັງເອົາໃຈໃສ່ຕໍ່ລັກສະນະທົ່ວໄປ ດັ່ງນີ້:

ຄວາມພ້ອມຂອງການບໍລິການ: ການບໍລິການທີ່ຈຳເປັນທາງດ້ານສາທາລະນະສຸກ, ຍຸຕິທຳ ແລະ ຕຳຫຼວດ ແລະ ສັງຄົມ ຕ້ອງຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ ໂດຍບໍ່ໃຫ້ມີການຈຳແນກຖານະທາງດ້ານສັງຄົມ, ຕົ້ນກຳເນີດ, ຊົນຊັ້ນ, ເພດ, ຊົນເຜົ່າ, ອາຍຸ, ສາສະໜາ, ພາສາ, ພູມລຳເນົາ, ບ່ອນຢູ່ອາໄສ ແລະ ອື່ນໆ.

ການເຂົ້າເຖິງການບໍລິການ: ການບໍລິການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຕ້ອງຮັບປະກັນໃຫ້ມີການເຂົ້າເຖິງການບໍລິການຊ່ວຍເຫຼືອທາງດ້ານສັງຄົມ, ສາທາລະນະສຸກ, ຍຸຕິທຳ ລວມທັງດ້ານເສດຖະກິດ ແລະ ຂໍ້ມູນຂ່າວສານໄດ້ຢ່າງສະດວກ, ຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງຂອງຜູ້ຖືກເຄາະຮ້າຍ ໂດຍບໍ່ໃຫ້ມີການຈຳແນກ.

ຄວາມເໝາະສົມ ແລະ ແທດເໝາະຂອງການບໍລິການ: ການບໍລິການຕ້ອງອີງໃສ່ຜົນກະທົບຂອງຄວາມຮຸນແຮງຕໍ່ກຸ່ມຕ່າງໆ, ຕອບສະໜອງຄວາມຕ້ອງການ, ຮັບປະກັນຫຼັກການມະນຸດສະທຳ, ຄວາມລັບ ແລະ ເຄົາລົບກຽດສັກສີ ແລະ ວັດທະນະທຳຂອງຜູ້ເຄາະຮ້າຍ ຫຼື ຜູ້ລອດຊີວິດ.

ຖືຄວາມປອດໄພຂອງຜູ້ຖືກເຄາະຮ້າຍເປັນບຸລິມະສິດ(ການປະເມີນຄວາມສ່ຽງແລະຄວາມປອດໄພຂອງຜູ້ຖືກເຄາະຮ້າຍ): ການຮັກສາຄວາມປອດໄພໃຫ້ຜູ້ຖືກເຄາະຮ້າຍ ທີ່ກຳລັງປະເຊີນໜ້າກັບຄວາມຮຸນແຮງໃນປັດຈຸບັນ ແລະ ຈະສືບຕໍ່ມີຄວາມສ່ຽງໃນອະນາຄົດນັ້ນຕ້ອງມີການປະເມີນ, ການຄຸ້ມຄອງບໍລິຫານກໍລະນີໂດຍອີງໃສ່ລະດັບຂອງຄວາມຮຸນແຮງ, ການກຳນົດວິທີການ ແລະ ການປະສານງານຢ່າງເປັນລະບົບຕໍ່ເນື່ອງ ລະຫວ່າງ ຂົງເຂດສັງຄົມ, ສາທາລະນະສຸກ ແລະ ຍຸຕິທຳ.

ການຍິນຍອມ/ເຫັນດີ ແລະ ການຮັກສາຄວາມລັບຂອງຜູ້ຖືກເຄາະຮ້າຍ: ຜູ້ຖືກເຄາະຮ້າຍຄວນໄດ້ຮັບຂໍ້ມູນ, ຂ່າວສານກ່ຽວກັບການປົກປ້ອງ ແລະ ການບໍລິການຊ່ວຍເຫຼືອ, ລວມທັງປັດໃຈສ່ຽງ ແລະ ຜົນປະໂຫຍດທີ່ຈະໄດ້ຮັບຈາກການບໍລິການດັ່ງກ່າວ ເພື່ອເປັນຂໍ້ມູນໃນການຕັດສິນໃຈຮັບ ຫຼື ປະຕິເສດການຊ່ວຍເຫຼືອ.

ການບໍລິການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຕ້ອງຮັບປະກັນຄວາມເປັນສ່ວນຕົວ ແລະ ການຮັກສາຄວາມລັບ, ຫ້າມເປີດເຜີຍຂໍ້ມູນສ່ວນຕົວໂດຍບໍ່ໄດ້ຮັບການເຫັນດີຈາກຜູ້ຖືກເຄາະຮ້າຍ, ເນື່ອງຈາກຂໍ້ມູນກ່ຽວກັບຄວາມຮຸນແຮງທີ່ຜູ້ກ່ຽວໄດ້ຮັບຜ່ານມານັ້ນ ເປັນບັນຫາລະອຽດອ່ອນທີ່ສຸດ, ຫາກຖືກເປີດເຜີຍໃນທາງທີ່ບໍ່ເໝາະສົມ ອາດຈະນຳໄປສູ່ຄວາມເສຍຫາຍອັນໜັກໜ່ວງ ແລະ ເປັນໄພຂົ່ມຂູ່ ແລະ ເປັນອັນຕະລາຍຮ້າຍແຮງຕໍ່ຜູ້ຖືກເຄາະຮ້າຍ ແລະ ຜູ້ໃຫ້ການຊ່ວຍເຫຼືອ.

ການສື່ສານ ແລະ ການມີສ່ວນຮ່ວມທີ່ມີປະສິດທິພາບຂອງຂະແໜງການທີ່ກ່ຽວຂ້ອງໃນການວາງແຜນ, ການຈັດຕັ້ງປະຕິບັດ ແລະ ປະເມີນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ: ຜູ້ຖືກເຄາະຮ້າຍທຸກຄົນ ລ້ວນແຕ່ຢາກຮູ້ວ່າບັນຫາຄວາມຮຸນແຮງທີ່ເກີດຂຶ້ນກັບຕົນນັ້ນ, ມີຜູ້ຮັບຟັງ, ເຂົ້າໃຈ, ຮູ້ຄວາມຕ້ອງການ ແລະ ໄດ້ຮັບການຕອບສະໜອງ, ການໃຫ້ຂໍ້ມູນ ແລະ ມີວິທີການສື່ສານທີ່ດີ ຈະສາມາດສ້າງຄວາມເຂັ້ມແຂງໃຫ້ຜູ້ຖືກເຄາະຮ້າຍ ຊຶ່ງການສື່ສານດັ່ງກ່າວ ຕ້ອງໃຫ້ກຽດ ແລະ ເຄົາລົບເຂົາເຈົ້າ.


ການເກັບກຳ, ການຄຸ້ມຄອງ ແລະ ຮັກສາຂໍ້ມູນ: ການເກັບກຳຂໍ້ມູນກ່ຽວກັບການບໍລິການຊ່ວຍເຫຼືອທີ່ຖືກຕ້ອງແລະຕໍ່ເນື່ອງເປັນປັດໃຈສຳຄັນຂອງການສືບຕໍ່ປັບປຸງການບໍລິການຊ່ວຍເຫຼືອ. ໃນຂະບວນການຊ່ວຍເຫຼືອຕ້ອງມີການບັນທຶກຂໍ້ມູນຂອງຜູ້ຖືກເຄາະຮ້າຍ ແລະ ຂໍ້ມູນກ່ຽວກັບການບໍລິການຊ່ວຍເຫຼືອ ໃຫ້ຈະແຈ້ງ, ຖືກຕ້ອງ, ປິດລັບ ແລະ ເກັບຮັກສາໄວ້ໃຫ້ປອດໄພ.

ການປະສານງານກັບຂະແໜງການທີ່ກ່ຽວຂ້ອງ ແລະ ການສົ່ງຕໍ່: ບັນດາຂະແໜງການທີ່ເຮັດໜ້າທີ່ປົກປ້ອງ, ການບໍລິການຊ່ວຍເຫຼືອອັນຈຳເປັນດ້ານສັງຄົມ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ຕ້ອງມີການປະສານງານກັນຢ່າງທັນເວລາ, ຮັບປະກັນໃຫ້ການສົ່ງຕໍ່ໄດ້ຕາມມາດຕະຖານທີ່ກຳນົດໄວ້, ໃຫ້ມີການບໍລິການທີ່ຈຳເປັນດ້ານຕ່າງໆ ແລະ ສາມາດເຂົ້າເຖິງການຊ່ວຍເຫຼືອໄດ້ຢ່າງງ່າຍດາຍ. ເພື່ອຮັບປະກັນໃຫ້ໄດ້ສິ່ງທີ່ກ່າວມານີ້ ຕ້ອງມີນິຕິກຳກ່ຽວກັບການປະສານງານທີ່ກຳນົດຄວາມຮັບຜິດຊອບຢ່າງຈະແຈ້ງ ລະຫວ່າງຂະແໜງສັງຄົມ, ສາທາລະນະສຸກ ແລະ ຂະແໜງຍຸຕິທຳ.

ພາກທີ III ກົນໄກຄຸ້ມຄອງ ແລະ ປະສານງານຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ

1. ຄະນະຊີ້ນຳການຄຸ້ມຄອງ ແລະ ການປະສານງານ

ຮູບທີ 1: ໂຄງປະກອບຂອງຄະນະຄຸ້ມຄອງ ແລະ ການປະສານງານ ຈາກຂັ້ນສູນກາງເຖິງຂັ້ນທ້ອງຖິ່ນ



ອີງຕາມກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ກົນໄກທີ່ຮັບຜິດຊອບ ການຄຸ້ມຄອງ, ການປະສານງານ ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງ ແມ່ນ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຫຼື ຄຊກມດ (NCAWMC), ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ (ຄກມດ) ຂັ້ນກະຊວງ, ອົງການອ້ອມຂ້າງສູນກາງ, ແຂວງ, ນະຄອນຫຼວງ ວຽງຈັນ, ນະຄອນ, ເມືອງ, ເທດສະບານ ແລະ ບ້ານ.

ຄະນະຄຸ້ມຄອງປະສານງານຂັ້ນສູນກາງມີໜ້າທີ່ຮັບຜິດຊອບໃນການຄຸ້ມຄອງ, ປະສານ ລະຫວ່າງບັນດາຜູ້ຈັດຕັ້ງປະຕິບັດທີ່ສຳຄັນ ໃນການປ້ອງກັນ ແລະ ການຕອບໂຕ້ຕໍ່ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ. ຄະນະດັ່ງກ່າວມີບົດບາດສຳຄັນຄື:

- ຊີ້ນຳລວມ ຄຸ້ມຄອງ, ການປະສານງານ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກຄວມຮຸນແຮງ ເພື່ອຮັບປະກັນໃຫ້ມີຄວາມກົມກຽວ ແລະ ສອດຄ່ອງກັບ ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແລະ ແຜນດຳເນີນງານແຫ່ງຊາດເພື່ອປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ ໃນແຕ່ລະໄລຍະ ລວມທັງການຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ.
- ຊີ້ນຳຢ່າງໃກ້ຊິດບັນດາຂະແໜງການ ແລະ ທ້ອງຖິ່ນ ທັງສາຍຕັ້ງ ແລະ ສາຍຂວາງ ກ່ຽວກັບການກຳນົດບູລິມະສິດ ແລະ ເຊື່ອມສານວຽກຄວາມຮຸນແຮງເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ ຕາມສະພາບເງື່ອນໄຂຕົວຈິງໃນແຕ່ລະໄລຍະ.
- ລະດົມຂົນຂວາຍການສະໜັບສະໜູນຊ່ວຍເຫຼືອດ້ານເຕັກນິກວິຊາການ ແລະ ທຶນຮອນ ຈາກຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງບໍ່ສັງກັດລັດຖະບານ, ພາກສ່ວນພົນລະເຮືອນ ແລະ ພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ.
- ຄະນະຊີ້ນຳ ຈັດກອງປະຊຸມຢ່າງໜ້ອຍສຸດ 1 ຄັ້ງຕໍ່ປີ ໂດຍທ່ານ ປະທານ ສສຍລ, ຮອງປະທານ ຜູ້ປະຈຳການ ຄຊກມດ ເປັນປະທານຊີ້ນຳ ແລະ ບັນຊາກອງປະຊຸມ.
- ສະຫຼຸບລາຍງານວຽກການປົກປ້ອງ, ຊ່ວຍເຫຼືອ ແລະ ແກ້ໄຂຄວາມຮຸນແຮງ ໃຫ້ ຄຊກມດ ປະຈຳໄຕມາດ, 6 ເດືອນ, 9 ເດືອນ ແລະ ປີ.
- ນຳພາການຄຸ້ມຄອງການຕອບສະໜອງການປະສານງານ ລະຫວ່າງບັນດາພາກສ່ວນທີ່ກ່ຽວຂ້ອງ ເຊັ່ນ: ບັນດາກະຊວງ, ຜູ້ໃຫ້ບໍລິການ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGO) ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງ.
- ຝຶກອົບຮົມກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ລວມທັງຂອບເຂດ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ສາເຫດ ແລະ ຜົນສະທ້ອນຂອງມັນ ແລະ ການນຳໃຊ້ວິທີການທີ່ເອົາຜູ້ລອດຊີວິດ ເປັນໃຈກາງ ແລະ ຫຼັກຖານເພື່ອການຕອບໂຕ້ທີ່ມີປະສິດທິຜົນສຳລັບການຕອບສະໜອງທີ່ມີປະສິດທິພາບ ລະຫວ່າງບັນດາຂະແໜງການທີ່ເປັນກົນໄກໃນການຄຸ້ມຄອງວຽກງານດັ່ງກ່າວ.
- ກຳນົດມາດຕະຖານການຄຸ້ມຄອງ, ປະສານງານ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງໃນລະດັບຊາດ, ຂັ້ນແຂວງ ແລະ ທ້ອງຖິ່ນ.
- ເປັນວິຊາການ ໃນການກຳນົດ/ສົ່ງເສີມມາດຕະຖານດຳເນີນການບໍລິການທີ່ຈຳເປັນທາງດ້ານຄຸນນະພາບ ໃນແຕ່ລະຂະແໜງການ (ຂະແໜງສຸຂະພາບ, ຂະແໜງຍຸຕິທຳ ແລະ ຕຳຫຼວດ ແລະ ຂະແໜງສັງຄົມ) ລວມທັງກຸ່ມຄົນດ້ອຍໂອກາດ ເຊັ່ນ: ແມ່ຍິງພິການ, ແຮງງານເຄື່ອນຍ້າຍ ຫຼື ກຸ່ມອື່ນໆ ທີ່ມີອຸປະສັກໃນການເຂົ້າເຖິງການບໍລິການ ຫຼື ປະເຊີນກັບການຖືກດູຖູກ ແລະ ການຈຳແນກ.

- ຕິດຕາມ ແລະ ປະເມີນຜົນການປະສານງານຂັ້ນສູນກາງ, ແຂວງ ແລະ ເມືອງ, ວິເຄາະຜົນຂອງການປະສານງານ,ການກຳນົດອຸປະສັກຂອງການປະສານງານທີ່ສາມາດປະສົບຜົນສຳເລັດແລະການແກ້ໄຂທີ່ເປັນໄປໄດ້.
- ຕິດຕາມ, ກວດກາ ແລະ ປະເມີນຜົນການ ປົກປ້ອງ, ຊ່ວຍເຫຼືອ, ແກ້ໄຂ ບັນຫາຄວາມຮຸນແຮງຂອງແຕ່ລະ ຂະແໜງການ.
- ການອຳນວຍຄວາມສະດວກໃນການຕິດຕາມ ແລະ ປະເມີນຜົນການປະສານງານລະດັບຊາດ, ແຂວງ ແລະ ເມືອງ, ວິເຄາະຜົນຂອງການຕອບໂຕ້ການປະສານງານ, ການກຳນົດອຸປະສັກຂອງການປະສານງານທີ່ສາ ມາດປະສົບຜົນສຳເລັດ ແລະ ການແກ້ໄຂທີ່ເປັນໄປໄດ້.
- ຄະນະວິຊາການ ຈັດກອງປະຊຸມປຶກສາຫາລືພາຍໃນ ແລະ ກັບສາກົນ ກ່ຽວກັບ ການປົກປ້ອງ, ຊ່ວຍເຫຼືອ ແລະ ແກ້ໄຂຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງຢ່າງໜ້ອຍ 2 ຄັ້ງຕໍ່ປີ ຫຼື ຕາມຄວາມຮຽກຮ້ອງຕ້ອງການ ຂອງວຽກງານ.
- ເຂົ້າຮ່ວມຕິດຕາມກອງປະຊຸມທີ່ກ່ຽວກັບຄວາມຮຸນແຮງ ທີ່ກ່ຽວຂ້ອງກັບພາກສ່ວນຕົ້ນ ຢູ່ພາກພື້ນ ແລະ ສາກົນ ໂດຍສົມທົບກັບກອງເລຂາ ຄະນະຊີ້ນຳຂັ້ນສູນກາງ.

ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ມີສິດ ແລະ ໜ້າທີ່ທີ່ສຳຄັນ ດັ່ງນີ້:

- ເປັນໃຈກາງປະສານງານ, ສະໜັບສະໜູນ ແລະ ຕິດຕາມກວດກາບັນດາກະຊວງ, ອຳນາດການປົກຄອງ ທ້ອງຖິ່ນ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຕ້ານຄວາມຮຸນແຮງຕໍ່ ແມ່ຍິງ ແລະ ເດັກ.
- ດຶງດູດການຊ່ວຍເຫຼືອທາງດ້ານການເງິນ ແລະ ວິຊາການ ຈາກບັນດາປະເທດເພື່ອນມິດ, ອົງການຈັດຕັ້ງ ສາກົນ, ອົງການຈັດຕັ້ງທາງສັງຄົມ, ບຸກຄົນ, ນິຕິບຸກຄົນ ເພື່ອມານຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກ ປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.

2. ຄະນະຊີ້ນຳການການຄຸ້ມຄອງ, ການປະສານງານ ແລະ ການສົ່ງຕໍ່

ມີການປະສານສົມທົບກັນຂອງບັນດາຂະແໜງການໃນການແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ເຊິ່ງກວມ ເອົາທັງພາກລັດ ແລະ ອົງການຈັດຕັ້ງທາງສັງຄົມ ເປັນຕົ້ນ ຂະແໜງສາທາລະນະສຸກ, ຍຸຕິທຳ, ຕຳຫຼວດ, ພາກສ່ວນໃຫ້ ການບໍລິການສັງຄົມ ແລະ ອື່ນໆ ທີ່ມີບົດບາດສຳຄັນໃນການໃຫ້ບໍລິການຊ່ວຍເຫຼືອແມ່ຍິງ ແລະ ເດັກຍິງ ທີ່ຖືກຄວາມ ຮຸນແຮງ.

ຮູບ 2: ກົນໄກການຄຸ້ມຄອງ ແລະ ການປະສານງານຂອງສະມາຊິກໃນຂັ້ນສູນກາງ



ຄະນະຮັບຜິດຊອບປະສານງານ: ກະຊວງສາທາລະນະສຸກ, ກະຊວງຍຸຕິທຳ, ກະຊວງປ້ອງກັນຄວາມສະຫງົບ, ອົງການໄອຍະການ ປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ສູນກາງສະຫະພັນແມ່ຍິງລາວ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະ ຊວງສຶກສາທິການ ແລະ ກິລາ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ສູນກາງແນວລາວສ້າງຊາດ, ສູນກາງສະຫະພັນກຳມະບານລາວ, ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ກະຊວງຊັບພະຍາ ກອນ ແລະ ສິ່ງແວດລ້ອມ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ທະນາຄານແຫ່ງ ສປປ ລາວ.

ພາກສ່ວນອື່ນທີ່ກ່ຽວຂ້ອງ

- ກະຊວງອື່ນໆທີ່ເປັນຕົວແທນກຸ່ມທີ່ມີຄວາມສ່ຽງເພີ່ມຂຶ້ນສຳລັບ ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຫຼືມີອຸປະສັກໃນການເຂົ້າເຖິງການບໍລິການເຊັ່ນ: ແມ່ຍິງພິການ, ແຮງງານເຄື່ອນຍ້າຍເພດຍິງ, ແມ່ຍິງຊົນເຜົ່າ, ແມ່ຍິງໄວໜຸ່ມ ຫຼື ຜູ້ສູງອາຍຸ, ຫຼືກຸ່ມອື່ນໆສາມາດເຂົ້າຮ່ວມໄດ້.
- ອົງການຈັດຕັ້ງທາງສັງຄົມ: ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທາງສັງຄົມລາວ ມີບົດບາດສຳຄັນໃນການສະໜອງທີ່ພັກອາໄສຊົ່ວຄາວທີ່ປອດໄພ, ການບໍລິການທາງດ້ານກົດໝາຍ, ການຊ່ວຍເຫຼືອທາງດ້ານຈິດຕະ-ສັງຄົມ ແລະ ການບໍລິການອື່ນໆ. ບັນດາອົງການຈັດຕັ້ງເຫຼົ່ານີ້ ຄວນເຂົ້າມາມີສ່ວນຮ່ວມໃນເສັ້ນທາງການສົ່ງຕໍ່, ບັນຊີລາຍຊື່ການບໍລິການ ແລະ ກົນໄກການປະສານງານ.

3. ກອງເລຂາ

ຄະນະຊີ້ນຳການປະສານງານ ແລະ ການຄຸ້ມຄອງ ຂັ້ນສູນກາງມີກອງເລຂາຊ່ວຍວຽກ ຊຶ່ງຂຶ້ນກັບຫ້ອງການຄຊກມດ ເປັນຫົວໜ້າ, ກອງເລຂາ ມີໜ້າທີ່ດັ່ງນີ້:

- ຮັບປະກັນໃຫ້ມີການປະຊຸມປະສານງານເປັນປົກກະຕິ, ມີບົດບັນທຶກກອງປະຊຸມ.
- ໃຫ້ການແນະນຳ ແລະ ຝຶກອົບຮົມສະມາຊິກທັງໝົດຂອງກົນໄກການປະສານງານ.
- ຊ່ວຍສະມາຊິກທັງໝົດສ້າງຄວາມເຂົ້າໃຈຮ່ວມກັນກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ແລະ ຂໍ້ແນະນຳຕໍ່ການບໍລິການທີ່ກ່ຽວຂ້ອງ, ກົດໝາຍ ແລະ ນະໂຍບາຍ, ແລະ ຊັບພະຍາກອນຕ່າງໆ.
- ແລກປ່ຽນຂໍ້ມູນກ່ຽວກັບຊັບພະຍາກອນ, ຂໍ້ແນະນຳຕ່າງໆ, ແລະ ເອກະສານອື່ນໆ.
- ປຶກສາຫາລື ແລະ ແກ້ໄຂບັນຫາກ່ຽວກັບບັນດາກິດຈະກຳປ້ອງກັນ ແລະ ໂຕ້ຕອບ, ລວມທັງການວາງແຜນ ກິດຈະກຳເຫຼົ່ານີ້ ແລະ ມີສ່ວນຮ່ວມກັບໜ່ວຍງານປະສານງານ ແລະ ການນຳອື່ນໆທີ່ກ່ຽວຂ້ອງ.
- ຕິດຕາມ ແລະ ປະເມີນຜົນຮ່ວມກັນໃນການຈັດຕັ້ງປະຕິບັດວຽກ.
- ກຳນົດການວາງແຜນງານ ແລະ ຄວາມຕ້ອງການໃນການໂຄສະນາເຜີຍແຜ່, ແລະ ແລກປ່ຽນແຜນ ແລະ ຄວາມຕ້ອງການເຫຼົ່ານີ້ກັບບັນດາຂະແໜງການຕ່າງໆ, ໜ່ວຍງານປະສານງານ, ແລະ ບັນດາການນຳ.
- ຮັບປະກັນການສ້າງກົດໝາຍ ແລະ ນະໂຍບາຍຕ່າງໆໄດ້ພິຈາລະນາເຖິງຄວາມສະເໝີພາບຍິງ-ຊາຍ, ການບໍ່ຈຳແນກ ແລະ ປະສິບການຂອງແມ່ຍິງທີ່ລອດຊີວິດຈາກຄວາມຮຸນແຮງ.
- ອຳນວຍຄວາມສະດວກ ແລະ ປະກອບສ່ວນເຂົ້າໃນການພັດທະນາແຜນງານແຫ່ງຊາດ, ຂໍ້ແນະນຳ, ອະນຸສັນຍາຕ່າງໆ ແລະ ເຄື່ອງມືອື່ນໆ.
- ພົວພັນປະສານງານກັບຕ່າງປະເທດທີ່ເໝາະສົມ ເພື່ອຕ້ານ ແລະ ໂຕ້ຕອບກັບຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.

ກອງປະຊຸມຂອງຄະນະກຳມະການຄຸ້ມຄອງການປະສານງານ ແລະ ການສົ່ງຕໍ່ ຈະໄດ້ຈັດຂຶ້ນເປັນໄຕມາດ. ກອງເລຂາຂອງຄະນະກຳມະການ ຈະເປັນຜູ້ຮັບຜິດຊອບໃນການນັດໝາຍກອງປະຊຸມ, ນຳພາກອງປະຊຸມ, ບັນທຶກກອງປະຊຸມ ແລະ ໜ້າວຽກອື່ນໆເພື່ອປະສານງານໃຫ້ກອງປະຊຸມປະສົບຜົນສຳເລັດ.

ພາກທີ IV ການລາຍງານ ແລະ ການສົ່ງຕໍ່

1. ການຂໍຄວາມຊ່ວຍເຫຼືອ

ແຜນວາດຕໍ່ໄປນີ້ແມ່ນການອະທິບາຍເຖິງຂະບວນການເບື້ອງຕົ້ນ ທີ່ທຸກຂະແໜງການຕ້ອງປະຕິບັດ ເມື່ອຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ມາຂໍຄວາມຊ່ວຍເຫຼືອ. ຂັ້ນຕອນທຳອິດແມ່ນຮັບຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ, ຫຼັງຈາກນັ້ນສະໜອງການຊ່ວຍເຫລືອລາວໂດຍທັນການ ແລະ ຮີບດ່ວນ. ຂັ້ນຕໍ່ໄປແມ່ນສົ່ງຜູ້ຖືກເຄາະຮ້າຍໄປຫາຜູ້ໃຫ້ບໍລິການຊ່ວຍເຫຼືອອື່ນໆ ໂດຍອີງໃສ່ຄວາມຕ້ອງການ ແລະ ເຫັນດີຂອງເຂົາເຈົ້າ.

ຮູບ 3: ເສັ້ນທາງການຂໍຄວາມຊ່ວຍເຫຼືອທີ່ເປັນໄປໄດ້



“ ປະຕູທຳອິດທີ່ເຂົ້າໄປຂໍຄວາມຊ່ວຍເຫລືອ ແມ່ນປະຕູທີ່ຖືກຕ້ອງ ”

ແມ່ຍິງຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດຈາກຄວາມຮຸນແຮງອາດຈະໄປຂໍການຊ່ວຍເຫຼືອຈາກພາກສ່ວນຕ່າງໆຕາມທີ່ຕົນເອງພໍໃຈ ຕົວຢ່າງ: ຜູ້ຖືກເຄາະຮ້າຍອາດຈະໄປຫາຕຳຫຼວດ ຫຼື ໄປສຸກສາລາ ຫຼື ສະຫະພັນແມ່ຍິງລາວ. ເພື່ອຮັບປະກັນວ່າ **"ປະຫວັດແມ່ນປະຫວັດທີ່ຖືກຕ້ອງ"** ຜູ້ໃຫ້ບໍລິການທັງໝົດຈະຕ້ອງສາມາດສະໜອງການດູແລ ແລະ ປະຕິບັດງານ, ຮັບຮູ້ຄວາມສາມາດຂອງຕົນເອງ ແລະ ເຂົ້າໃຈພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຜູ້ໃຫ້ບໍລິການອື່ນໆ, ດັ່ງນັ້ນ **ເຂົາເຈົ້າສາມາດສະໜອງຂໍ້ມູນກ່ຽວກັບທາງເລືອກ ແລະ ການສົ່ງຕໍ່ຫາຈຸດບໍລິການອື່ນໆ.**

ບໍ່ແມ່ນຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດຈາກຄວາມຮຸນແຮງທຸກຄົນຈະຕ້ອງການຊ່ວຍເຫຼືອ. ແຕ່ສຳລັບຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດບາງຄົນ ອາດມີຄວາມຕ້ອງການການຊ່ວຍເຫຼືອ ເຊັ່ນ: ການດູແລສຸຂະພາບແບບຮີບດ່ວນ, ການກວດສອບທາງນິຕິວິທະຍາ, ການດູແລທາງດ້ານຈິດໃຈ ແລະ ການບໍລິການສັງຄົມອື່ນໆ ເຊັ່ນ: ທີ່ພັກທີ່ປອດໄພ, ການສະໜັບສະໜູນດ້ານເສດຖະກິດ, ການສະໜັບສະໜູນດ້ານວັດຖຸອຸປະກອນ ທີ່ຈະເປັນປະໂຫຍດກັບຕົນເອງ. ຂະບວນການນີ້ເອີ້ນວ່າ **"ວິທີການເອົາຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດເປັນໃຈກາງ".**

ກໍລະນີບຸກຄົນໃດໜຶ່ງໃນຂະແໜງການທີ່ໃຫ້ການບໍລິການຊ່ວຍເຫຼືອໄດ້ຮັບການແຈ້ງຄວາມ ແຕ່ຜູ້ກ່ຽວບໍ່ແມ່ນຜູ້ຊ່ຽວຊານດ້ານຄວາມຮຸນແຮງຕໍ່ແມ່ຍິງ ບຸກຄົນນັ້ນ ຄວນຕິດຕໍ່ສື່ສານກັບຜູ້ຖືກເຄາະຮ້າຍຢ່າງລະມັດລະວັງ ແລະ ສົ່ງຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດໄປຫາພາກສ່ວນທີ່ກ່ຽວຂ້ອງຕາມຄວາມຕ້ອງການຂອງເຂົາເຈົ້າ. ສູນກາງສະຫະພັນແມ່ຍິງລາວເປັນໃຈກາງໃນການຄຸ້ມຄອງ ແລະ ຕິດຕາມກໍລະນີຄະດີ. ຢ່າງໃດກໍ່ຕາມ, ຖ້າແມ່ຍິງບໍ່ຕ້ອງການທີ່ຈະຖືກສົ່ງໄປຫາສູນກາງສະຫະພັນແມ່ຍິງ ຫຼື ຜູ້ໃຫ້ບໍລິການອື່ນໆ, ລາວມີສິດທີ່ຈະປະຕິເສດ ແລະ ຍອມຮັບພຽງແຕ່ການບໍລິການທີ່ລາວຕ້ອງການ.

ຜູ້ໃຫ້ບໍລິການທຸກຂະແໜງການ ຕ້ອງປະເມີນຄວາມຕ້ອງການການດູແລສຸຂະພາບອັນຮີບດ່ວນເຊັ່ນ: ສຳລັບການໄດ້ຮັບບາດເຈັບ ຫຼື ການກວດສອບທາງນິຕິວິທະຍາ, ການປະເມີນ ແລະ ການວາງແຜນຄວາມປອດໄພ.

ບາງຂັ້ນຕອນທີ່ສຳຄັນທີ່ຄວນຈະປະຕິບັດ ສຳລັບວິທີການທີ່ເອົາຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດຊີວິດເປັນຈຸດໃຈກາງ ໃນແຕ່ລະຈຸດທີ່ເຂົາເຈົ້າເຂົ້າຫາການຊ່ວຍເຫຼືອແມ່ນ:

- **ຂໍ້ມູນກ່ຽວກັບທາງເລືອກຕ່າງໆ**: ຜູ້ໃຫ້ບໍລິການຈະຕ້ອງແຈ້ງໃຫ້ຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດຮັບຮູ້ເຖິງສິ່ງທີ່ເຂົາເຈົ້າສາມາດຊ່ວຍເຫຼືອໄດ້ ແລະ ບອກເຖິງສິ່ງທີ່ບໍ່ສາມາດສະໜອງໃຫ້ໄດ້ ຫຼື ຂໍ້ຈຳກັດຕ່າງໆໃນການໃຫ້ບໍລິການຢ່າງຈະແຈ້ງ, ເພື່ອຫຼີກເວັ້ນການສ້າງຄວາມຄາດຫວັງທີ່ຜິດ. ຂໍ້ມູນນີ້ຄວນເຊື່ອມຕໍ່ກັບລາຍຊື່ຂອງພາກສ່ວນທີ່ໃຫ້ການບໍລິການ (Gender-Based Violence Service Directory). ສຳລັບຜູ້ໃຫ້ບໍລິການທີ່ບໍ່ມີຄວາມຊ່ຽວຊານດ້ານຄວາມຮຸນແຮງຕໍ່ແມ່ຍິງ, ກໍ່ສາມາດສົ່ງຕໍ່ຫາ ສະຫະພັນແມ່ຍິງລາວ ຫຼື ຜູ້ໃຫບໍລິການອື່ນໄດ້ຕາມຄວາມຍິນຍອມຂອງຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ.

- **ການຍິນຍອມ**: ຄວນມີຂະບວນການສະເພາະທີ່ຕົກລົງຮ່ວມກັນໃນການຮັບເອົາການຍິນຍອມເຫັນດີ ແລະ ຄວນນຳໃຊ້ແບບຟອມທີ່ເປັນມາດຕະຖານລະດັບຊາດ. ຂັ້ນຕອນການຍິນຍອມ ຄວນປະກອບມີຂໍ້ມູນທີ່ຖືກຕ້ອງຕາມຄວາມຈິງ ແລະ ຄົບຖ້ວນກ່ຽວກັບການສົ່ງຕໍ່ທີ່ອາດຈະເປັນໄປໄດ້ໃນການໃຫ້ການບໍລິການ;ລວມເຖິງການຮັບຮູ້ເຖິງຄວາມສ່ຽງຫຼືຜົນກະທົບທີ່ອາດມີຈາກການແລກປ່ຽນຂໍ້ມູນກ່ຽວກັບສະພາບຂອງລາວ ແລະ ລາວຄວນໄດ້ຮັບການແຈ້ງໃຫ້ຊາບ ກ່ຽວກັບເນື້ອຫາຂອງການທີ່ຈະລາຍງານຕໍ່ຂະແໜງການອື່ນ ຕົວຢ່າງ ຂໍ້ມູນທາງການແພດຂອງລາວທີ່ຈະຖືກລາຍງານຕໍ່ເຈົ້າໜ້າທີ່ຕຳຫຼວດ. ສຳລັບເດັກ ຂັ້ນຕອນນີ້ ແມ່ນຈະໄດ້ຮັບການຍິນຍອມ ແລະ ຕົກລົງ ອີງຕາມອາຍຸຂອງເຂົາເຈົ້າ ເພາະວ່າ ການໃຫ້ຄວາມຍິນຍອມນັ້ນ ແມ່ນສາມາດເຮັດໄດ້ແຕ່ຜູ້ມີອາຍຸ 18 ປີຂຶ້ນໄປເທົ່ານັ້ນ. ພໍ່ແມ່, ຜູ້ປົກຄອງ ຫຼື ຕົວແທນຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຜ່ານ ຄະນະກຳມະການປົກປ້ອງເດັກ ທີ່ບໍ່ ແມ່ນຜູ້ກະທຳຜິດ ສາມາດໃຫ້ການຍິນຍອມໄດ້.

- **ສິດທິໃນການປະຕິເສດຮັບການບໍລິການ**: ຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດຊີວິດ ທີ່ເປັນຜູ້ໃຫຍ່ອາຍຸ 18 ປີ ຂຶ້ນໄປ ມີອິດສະຫຼະໃນການເລືອກວ່າຈະຂໍຄວາມຊ່ວຍເຫຼືອ ຫຼື ບໍ່ຂໍ, ການຊ່ວຍເຫຼືອປະເພດໃດ ແລະ ຈາກອົງການຈັດຕັ້ງໃດ (ຍົກເວັ້ນກໍລະນີຂອງເດັກ).

ການນຳໃຊ້ວິທີການນີ້ ຈະເປັນປະໂຫຍດຕໍ່ການກຳນົດເສັ້ນທາງການສົ່ງຕໍ່ ເພື່ອໃຫ້ຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດຊີວິດຈາກການໃຊ້ຄວາມຮຸນແຮງໄດ້ເຂົ້າເຖິງການບໍລິການຕ່າງໆຕາມຄວາມຕ້ອງການແລະຄວາມປາດຖະໜາຂອງເຂົາເຈົ້າ.

ຂັ້ນຕອນຕ່າງໆຢູ່ໃນເສັ້ນທາງການສົ່ງຕໍ່ແມ່ນເພື່ອປະເມີນຮ່ວມກັບຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດຊີວິດເອງ ຕໍ່ກັບຄວາມຕ້ອງການອັນຮີບດ່ວນ ແລະ ຄວາມຕ້ອງການໃນໄລຍະຍາວຂອງພວກເຂົາ. ຫຼັງຈາກນັ້ນ, ເສັ້ນທາງການສົ່ງຕໍ່ກໍຈະເຊື່ອມຕໍ່ກັບບັນຊີລາຍຊື່ການບໍລິການພ້ອມດ້ວຍການຕິດຕໍ່ຜົວພັນ (Gender-Based Violence Service Directory).

ແຕ່ລະອົງການ/ຂະແໜງການທີ່ແມ່ຍິງໄປຂໍຄວາມຊ່ວຍເຫຼືອຈະມີຂັ້ນຕອນການຄຸ້ມຄອງກໍລະນີຂອງຕົນເອງ ເພື່ອຄຸ້ມຄອງກໍລະນີ. ມາດຕະຖານສະບັບນີ້ ບໍ່ໄດ້ລວມເອົາຂັ້ນຕອນຂອງແຕ່ລະຂະແໜງການ, ແຕ່ໄດ້ອະທິບາຍເຖິງ ຂະບວນການລວມທີ່ທຸກຄົນຄວນປະຕິບັດຕາມ ແລະ ກຳນົດພາລະບົດບາດ ແລະ ຄວາມຮັບຜິດຊອບຂອງແຕ່ລະຂະແໜງການ, ເພື່ອຮັບປະກັນວ່າເມື່ອແມ່ຍິງຜູ້ໜຶ່ງ ຂໍຄວາມຊ່ວຍເຫຼືອຈາກຂະແໜງການໃດໜຶ່ງ, ຂະແໜງການນັ້ນຈະຮູ້ເຖິງບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຂະແໜງການອື່ນໆ ແລະ ສາມາດສົ່ງຕໍ່ຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ໄປຫາຂະແໜງການ ໂດຍອີງໃສ່ຄວາມຕ້ອງການຂອງພວກເຂົາ.

2. ການໃຫ້ຂໍ້ມູນຂອງແມ່ຍິງ ແລະ ເດັກຍິງທີ່ຖືກຄວາມຮຸນແຮງ

- **ການໃຫ້ຂໍ້ມູນຄວາມຮຸນແຮງໂດຍຕົວຜູ້ຖືກກະທຳ (ທີ່ເປັນຜູ້ໃຫຍ່)ຕໍ່ຄອບຄົວ ຫຼື ໝູ່ເພື່ອນ:** ເມື່ອໄດ້ຮັບຂໍ້ມູນຄວາມຮຸນແຮງການໄດ້ຮັບຂໍ້ມູນຄວາມຮຸນແຮງຕໍ່ແມ່ຍິງ ໂດຍຄອບຄົວ ຫຼື ຫມູ່ເພື່ອນຂອງລາວເປັນເລື່ອງປົກກະຕິ. ເມື່ອໄດ້ຮັບແຈ້ງຕ້ອງໄດ້ມີການສົ່ງຕໍ່ ຫຼື ແຈ້ງຕໍ່ສະຫະພັນແມ່ຍິງລາວ, ເຈົ້າໜ້າທີ່ຕຳຫຼວດ, ໜ່ວຍງານໃຫ້ການບໍລິການຊ່ວຍເຫຼືອຂອງອົງການຈັດຕັ້ງລັດທີ່ກ່ຽວຂ້ອງ, ອຳນາດການປົກຄອງ ແລະ ອົງການຈັດຕັ້ງທາງສັງຄົມ. ການສົ່ງຕໍ່ ຫຼື ແຈ້ງເຫດການທີ່ເກີດຂຶ້ນນີ້ ຕ້ອງໄດ້ຮັບການເຫັນດີຕົກລົງຈາກຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດກ່ອນ.

- **ການໃຫ້ຂໍ້ມູນຄວາມຮຸນແຮງຂອງເດັກຕໍ່ຄອບຄົວ ຫຼື ໝູ່ເພື່ອນ**: ການໃຫ້ຂໍ້ມູນຄວາມຮຸນແຮງຕໍ່ເດັກໂດຍເດັກເອງໃຫ້ຄອບຄົວ ຫຼື ໝູ່ເພື່ອນຮັບຮູ້ແມ່ນເປັນເລື່ອງປົກກະຕິ: ເມື່ອມີການໃຫ້ຂໍ້ມູນຄວາມຮຸນແຮງຕ້ອງໄດ້ມີການແຈ້ງຕໍ່ເຈົ້າໜ້າທີ່ຕຳຫລວດ, ສະຫວັດດີການສັງຄົມ ຫຼື ເຄືອຂ່າຍປົກປ້ອງເດັກ.

- **ການໃຫ້ຂໍ້ມູນໂດຍຜູ້ເຄາະຮ້າຍ ຫຼື ຜູ້ລອດຊີວິດເອງ**: ຜູ້ເຄາະຮ້າຍ ຫຼື ຜູ້ລອດຊີວິດອາດຈະໃຫ້ຂໍ້ມູນ ແລະ ຂໍການຊ່ວຍເຫຼືອໂດຍກົງຈາກຜູ້ໃຫ້ບໍລິການ.

3. ການໃຫ້ຄວາມຊ່ວຍເຫຼືອ ແລະ ແກ້ໄຂໃນພາວະສຸກເສີນ


ເມື່ອຜູ້ສະໜອງການບໍລິການສຳລັບຄວາມຮຸນຕໍ່ແມ່ຍິງ ໄດ້ຮັບການແຈ້ງ, ເຂົາເຈົ້າຕ້ອງສະໜອງສະພາບແວດລ້ອມທີ່ປອດໄພ, ເປັນມິດ, ກຳນົດຄວາມຕ້ອງການອັນຮີບດ່ວນ, ໃຫ້ຂໍ້ມູນທີ່ຊັດເຈນກ່ຽວກັບການບໍລິການ ແລະ ທາງເລືອກຕ່າງໆ ທີ່ມີຢູ່ ແລະ ສົ່ງຕໍ່ ໂດຍອີງໃສ່ການຍິນຍອມ ຂອງຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດຊີວິດ ຖ້າເປັນຜູ້ໃຫຍ່ ແລະ ຖ້າເປັນເດັກຕ້ອງມີການຮັບຮອງ ແລະ ອະນຸຍາດ ໂດຍອີງໃສ່ອາຍຸ.

4. ການຊ່ວຍເຫຼືອໃນໄລຍະຍາວ

ຫຼັງຈາກຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ໄດ້ຮັບການຊ່ວຍເຫຼືອໃນພາວະສຸກເສີນແລ້ວ ເຂົາເຈົ້າຕ້ອງໄດ້ເຂົ້າເຖິງການບໍລິການ ແລະ ການຊ່ວຍເຫຼືອໃນໄລຍະຍາວຈາກຜູ້ໃຫ້ບໍລິການທີ່ມີຄວາມຊ່ຽວຊານດ້ານຄວາມຮຸນແຮງຕໍ່ແມ່ຍິງ. ການບໍລິການນັ້ນ ຕ້ອງໄດ້ກວມເອົາ ການຊ່ວຍເຫລືອທາງຈິດຕະ-ສັງຄົມ, ທີ່ພັກຊົ່ວຄາວທີ່ປອດໄພ, ການຊ່ວຍເຫຼືອທາງດ້ານວັດຖຸ, ການຊ່ວຍເຫຼືອ ແລະ ໃຫ້ຂໍ້ມູນທາງດ້ານກົດໝາຍ, ການຮັກສາສຸຂະພາບອື່ນໆ ແລະ ການບໍລິການອື່ນໆ ຕາມຄວາມຈຳເປັນ.

ການບໍລິການເຫຼົ່ານີ້ແມ່ນຕ້ອງສະໜອງໃຫ້ດີທີ່ສຸດໂດຍຜ່ານຂະບວນການຄຸ້ມຄອງກໍລະນີ ເຊິ່ງນຳພາໂດຍຜູ້ໃຫ້ບໍລິການທີ່ມີຄວາມຊ່ຽວຊານດ້ານຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ. ພາລະບົດບາດຂອງຜູ້ໃຫ້ບໍລິການ ແມ່ນໄດ້ລະບຸໄວ້ຢູ່ໃນພາກພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຜູ້ສະໜອງການບໍລິການ. **ຈົ່ງຈົດຈຳໄວ້ວ່າ: ການບໍລິການຕ່າງໆ ແມ່ນອີງໃສ່ຄວາມຕ້ອງການຂອງແມ່ຍິງ ແລະ ເດັກ ແລະ ຄວາມປາດຖະໜາຂອງເຂົາເຈົ້າ ພ້ອມກັບການຍິນຍອມ ແລະ/ຫຼື ການຕົກລົງ ແລະ ອະນຸຍາດຂອງເຂົາເຈົ້າ.**


ຮູບທີ 4: ການໃຫ້ຂໍ້ມູນ ແລະ ການຊ່ວຍເຫຼືອແມ່ຍິງ ແລະ ເດັກຍິງ ທີ່ຖືກຄວາມຮຸນແຮງ



ຄັດມາຈາກ ຄະນະກຳມະການປະຈຳການ ໜ່ວຍງານວິຊາການ ວຽກງານບົດບາດຍິງຊາຍ ແລະ ມະນຸດສະ ທຳ. ການສ້າງຂັ້ນຕອນມາດຕະຖານການດຳເນີນງານວຽກງານຄວາມຮຸນແຮງບົນພື້ນຖານຄຸນລັກສະນະທາງເພດ (SOPs) ສຳລັບຫຼາຍຂະແໜງການ ແລະ ຢູ່ພາຍໃນອົງການຈັດຕັ້ງ ໃນການຕ້ານ ແລະ ໂຕ້ຕອບກັບຄວາມຮຸນແຮງ ບົນພື້ນຖານຄຸນລັກສະນະທາງເພດໃນຂົງເຂດມະນຸດສະທຳ. 2008.

5. ຄວາມຮັບຜິດຊອບຂອງພາກສ່ວນທີ່ໃຫ້ການບໍລິການຊ່ວຍເຫຼືອ

ແຕ່ລະຂະແໜງການມີພາລະບົດບາດແລະຄວາມຮັບຜິດຊອບໃນການສະໜອງການບໍລິການໂດຍອີງຕາມບົດບາດໜ້າທີ່ຂອງຜູ້ສະໜອງການບໍລິການເອງແລະອີງຕາມມາດຕະຖານການດຳເນີນງານຂອງແຕ່ລະຂະແໜງການໃນການໂຕ້ຕອບກັບຄວາມຮຸນແຮງຕໍ່ແມ່ຍິງ. ພາລະບົດບາດ ແລະ ຄວາມຮັບຜິດຊອບເຫຼົ່ານີ້ແມ່ນໄດ້ລະບຸໄວ້ໃນກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.



ຜູ້ໃຫ້ບໍລິການແຕ່ລະພາກສ່ວນຕ້ອງຮູ້ຈັກການບໍລິການອື່ນໆທີ່ມີຢູ່ ແລະ ມີລະບົບການສົ່ງຕໍ່ ໂດຍອີງໃສ່ຄວາມຕ້ອງການ ແລະ ຄວາມປາດຖະໜາຂອງຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ. ຂະບວນການນີ້ຈະເຊື່ອມໂຍງເຂົ້າກັບມາດຕະຖານການດຳເນີນງານຂອງແຕ່ລະຂະແໜງການເຊິ່ງໄດ້ກຳນົດລາຍລະອຽດຢ່າງຈະແຈ້ງ.

ຂະແໜງການທີ່ສະໜອງການບໍລິການ ແລະ ໂຕ້ຕອບກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງມີດັ່ງຕໍ່ໄປນີ້:

ສູນກາງສະຫະພັນແມ່ຍິງລາວ:

ສູນກາງຫະພັນແມ່ຍິງລາວ ແລະ ສະຫະພັນແມ່ຍິງ ແຕ່ລະຂັ້ນ ມີບົດບາດທີ່ເປັນເປັນໃຈກາງໃນການປະຕິບັດວຽກງານປ້ອງກັນ ແລະ ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ. ຕໍ່ກັບໜ້າທີ່ດັ່ງກ່າວນີ້, ສະຫະພັນແມ່ຍິງລາວສາມາດໄດ້ຮັບການສົ່ງຕໍ່ຈາກຜູ້ໃຫ້ບໍລິການໃດໜຶ່ງ ສຳລັບກໍລະນີຂອງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແລະ **ເຮັດໜ້າທີ່ເປັນສູນກາງຂອງໜ່ວຍງານຄຸ້ມຄອງກໍລະນີ ໂດຍອີງໃສ່ຄວາມຍິນຍອມຂອງຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ.**

- ໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກ ເພື່ອໃຫ້ແມ່ຍິງ ແລະ ເດັກໄດ້ຮັບການຊ່ວຍເຫຼືອ, ຮູ້ກ່ຽວກັບເງື່ອນໄຂ ແລະ ວິທີເຂົ້າເຖິງຂະບວນຍຸຕິທຳ.
- ໃຫ້ການຊ່ວຍເຫຼືອດ້ານການໃຫ້ຄຳປຶກສາ, ທີ່ພັກເຊົ່າຊົ່ວຄາວທີ່ປອດໄພ, ການຊ່ວຍເຫຼືອທາງກົດໝາຍ, ການສຶກສາ, ການຝຶກອົບຮົມວິຊາຊີບ ແລະ ການກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍ ແລະ ເປັນຕົວແທນໃຫ້ແກ່ຜູ້ຖືກເຄາະຮ້າຍໃນຂະບວນຍຸຕິທຳໂດຍບໍ່ເສຍຄ່າ.

- ປະສານສົມທົບ, ສະໜັບສະໜູນ ແລະ ຕິດຕາມກວດກາບັນດາກະຊວງ, ອຳນາດການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງໃນການປະຕິບັດວຽກງານປ້ອງກັນ ແລະ ຕ້ານການໃຊ້ຄວາມຮຸນແຮງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.

ຂະແໜງສາທາລະນະສຸກ

ກະຊວງສາທາລະນະສຸກມີໜ້າທີ່ ແລະ ມີພາລະບົດບາດໃນການສະໜອງການບໍລິການດ້ານສາທາລະນະສຸກ ແລະ ສະໜອງສຸຂະສຶກສາໃຫ້ແກ່ຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງທາງຈິດໃຈ, ຮ່າງກາຍ ແລະ ທາງເພດ ແລະ ສະໜອງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ແມ່ຍິງ ແລະ ເດັກ ໃນການເຂົ້າເຖິງການປິ່ນປົວສຸຂະພາບ. ອີງຕາມກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ:

- ຊີ້ນຳ ແລະ ຄຸ້ມຄອງການບໍລິການດ້ານການດູແລສຸຂະພາບ ແລະ ການສຶກສາປິ່ນປົວພະຍາດເບື້ອງຕົ້ນຕາມຄວາມຈຳເປັນໃຫ້ແກ່ຄອບຄົວ, ອົງການຈັດຕັ້ງ ແລະ ໂດຍສະເພາະ ຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງທາງດ້ານຮ່າງກາຍ, ທາງດ້ານຈິດໃຈ ແລະ ທາງເພດ.
- ສ້າງເງື່ອນໄຂທີ່ສະດວກໃຫ້ແມ່ຍິງ ແລະ ເດັກເຂົ້າເຖິງການດູແລສຸຂະພາບ.
- ສ້າງຕັ້ງ ແລະ ຄຸ້ມຄອງການບໍລິການທາງການແພດ ເພື່ອສະໜອງການຊ່ວຍເຫຼືອໃຫ້ແກ່ຜູ້ເຄາະຮ້າຍ ແລະ ເດັກທີ່ຕິດຕາມມານຳກັນ
- ປະສານງານ ແລະ ສົ່ງຕໍ່ຜູ້ລອດຊີວິດຈາກຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ລະຫວ່າງໂຮງໝໍແຂວງ ແລະ ສູນກາງ, ຕໍ່ຄືກະຊວງ ແລະ ຂະແໜງການອື່ນໆ.

ສະຖານທີ່ຮັກສາສຸຂະພາບ ອາດຈະເປັນຈຸດທຳອິດ ຫຼື ຈຸດດຽວຂອງແມ່ຍິງ ແລະ ເດັກທີ່ໄດ້ຮັບຄວາມຮຸນແຮງ ຫຼື ຖືກລ່ວງລະເມີດ ທີ່ສາມາດຕິດຕໍ່ກັບຄົນພາຍນອກ. ສະນັ້ນຜູ້ໃຫ້ບໍລິການດ້ານສຸຂະພາບຈຶ່ງໄດ້ຖືກຈັດໃຫ້ເປັນສະຖານທີ່ຍຸດທະສາດ ເພື່ອສະໜອງຂໍ້ມູນ, ການຊ່ວຍເຫຼືອ, ໃຫ້ຄຳປຶກສາ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ແລະ ຄອບຄົວຂອງພວກເຂົາ.

ສະຖານທີ່ໃຫ້ການບໍລິການດ້ານສຸຂະພາບມີດັ່ງນີ້:

ໂຮງໝໍຊຸມຊົນ:

- ສະໜອງການຊ່ວຍເຫຼືອໃນເບື້ອງຕົ້ນ.
- ໃຫ້ການປິ່ນປົວສຸຂະພາບຂອງແມ່ຍິງ ແລະ ເດັກທີ່ໄດ້ຮັບບາດເຈັບໂດຍຮີບດ່ວນ.
- ສົ່ງຕໍ່ແມ່ຍິງ ແລະເດັກໄປຮັບການບໍລິການອື່ນໆອີງຕາມຄວາມຕ້ອງການຂອງເຂົາເຈົ້າ.

ໂຮງໝໍແຂວງ:

- ໃຫ້ການປິ່ນປົວແມ່ຍິງ ແລະເດັກທີ່ໄດ້ຮັບບາດເຈັບໂດຍຮີບດ່ວນ.
- ສະໜອງການຊ່ວຍເຫຼືອໃນເບື້ອງຕົ້ນ.
- ໃຫ້ການດູແລແມ່ຍິງ ແລະ ເດັກ ທີ່ໄດ້ຮັບຄວາມຮຸນແຮງທາງເພດ, ກວມເອົາການປິ່ນປົວເພື່ອປ້ອງກັນການຕິດເຊື້ອທາງເພດສຳພັນ.
- ສະໜອງການກວດເພື່ອຊອກຫາຫຼັກຖານມາຢັ້ງຢືນທາງກົດໝາຍໃຫ້ແກ່ແມ່ຍິງ ແລະ ເດັກ ທີ່ຖືກຄວາມຮຸນແຮງ.
- ໜ້າທີ່ອື່ນໆແມ່ນປະສານສົມທົບກັບຂະແໜງການອື່ນໆ

ຂະແໜງຍຸຕິທຳ

- ໂຄສະນາ, ເຜີຍແຜ່ ກົດໝາຍ, ລະບຽບການ ກ່ຽວກັບການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຕາມຄວາມຮັບຜິດຊອບຂອງຕົນ;
- ໃຫ້ການຊ່ວຍເຫຼືອດ້ານກົດໝາຍແກ່ແມ່ຍິງ ແລະ ເດັກ ທີ່ຖືກເຄາະຮ້າຍ;
- ຈັດຝຶກອົບຮົມ ແລະ ຍົກລະດັບຄວາມຮູ້ດ້ານກົດໝາຍ ທີ່ກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃຫ້ພະນັກງານ ແລະ ການ ຈັດຕັ້ງທີ່ຂຶ້ນກັບຕົນ ເຊັ່ນ ຫ້ອງການຍຸຕິທຳເມືອງ, ສະພາທະນາຍຄວາມ, ຄະນະໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

ຄະນະກຳມະການໄກ່ເກ່ຍຂັ້ນບ້ານ

- ໜ່ວຍງານໄກ່ເກ່ຍຂັ້ນບ້ານມີຢູ່ຂັ້ນບ້ານ ໄດ້ຮັບອະນຸຍາດໃຫ້ດຳເນີນການໄກ່ເກ່ຍໃນກໍລະນີທີ່ບໍ່ແມ່ນການກະທຳຜິດທາງອາຍາ. ການໄກ່ເກ່ຍຄວນຈະດຳເນີນຂຶ້ນໂດຍການຍິນຍອມຂອງຜູ້ຖືກເຄາະຮ້າຍ ແລະ ການຍອມຮັບຜິດຂອງຜູ້ກະທຳຜິດຕໍ່ຄວາມຮຸນແຮງ. (ເບິ່ງດຳລັດວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແລະ ມາດຕະຖານການດຳເນີນງານຂອງຂະແໜງຍຸຕິທຳ)

ຂະແໜງປ້ອງກັນຄວາມສະຫງົບ

- ຕິດຕາມ, ຊອກຫາ, ເກັບກຳຂໍ້ມູນ ແລະ ດຳເນີນຄະດີຕໍ່ຜູ້ໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃຫ້ມີຄວາມຊັດເຈນ, ຖືກຕ້ອງ ແລະ ວ່ອງໄວ;
- ສຶກສາອົບຮົມ, ກ່າວເຕືອນ, ໄກ່ເກ່ຍຕໍ່ຜູ້ໃຊ້ຄວາມຮຸນແຮງທີ່ກໍ່ຜົນເສັຍຫາຍບໍ່ຫຼວງຫຼາຍ;
- ຊີ້ນຳ ແລະ ຄຸ້ມຄອງການນຳໃຊ້ວິທີການສືບສວນ-ສອບສວນ ຫຼື ມາດຕະການປົກປ້ອງຜູ່ຖືກເຄາະຮ້າຍ ເຊັ່ນ ການຈັບຕົວ, ກັກຕົວ, ກັກຂັງພາງ ຫຼື ການຫ້າມບໍ່ໃຫ້ຜູ້ໃຊ້ຄວາມຮຸນແຮງເຂົ້າໃກ້ຜູ້ຖືກເຄາະຮ້າຍ;
- ຊ່ວຍເຫຼືອ ແລະ ກອບກູ້ເອົາຜູ້ຖືກເຄາະຮ້າຍ ພ້ອມທັງປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ

ຂະແໜງໄອຍະການປະຊາຊົນ

- ຄົ້ນຄວ້າ ແລະ ສັງລວມ ກ່ຽວກັບການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນ, ວຽກງານສະຖິຕິຄະດີ, ຜູ້ຖືກຫາ ແລະ ນັກໂທດໃນທົ່ວປະເທດ.
- ພິຈາລະນາເປັນຂັ້ນລົບລ້າງ ທາງດ້ານກົດໝາຍ ຄະດີທີ່ສານອຸທອນ ຊຶ່ງຖືກຂໍລົບລ້າງໂດຍຄູ່ຄວາມ ຫຼື ຖືກຄັດຄ້ານໂດຍໄອຍະການປະຊາຊົນ.
- ພິຈາລະນາເປັນຂັ້ນຮື້ຟື້ນ ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ.

ຂະແໜງເຕັກໂນໂລຊີ ແລະ ການສື່ສານ

- ເຝົ້າລະວັງ, ຕິດຕາມກວດກາ, ແນະນຳ, ແຈ້ງເຕືອນ ແລະ ຕອບໂຕ້ ເຫດສຸກເສີນທາງລະບົບຄອມພິວເຕີ.
- ຮັບແຈ້ງຄວາມ, ແຈ້ງເຫດ, ລາຍງານ ການກະທຳຜິດທາງລະບົບຄອມພິວເຕີຕໍ່ອົງການສືບສວນ-ສອບສວນ ຫຼື ອົງການໄອຍະການປະຊາຊົນ ແລະ ຂະແໜງການທີ່ກ່ຽວຂອງ.
- ເຝົ້າລະວັງ, ຕິດຕາມກວດກາ, ແນະນຳ, ແຈ້ງເຕືອນ ແລະ ຕອບໂຕ້ ເຫດສຸກເສີນທາງລະບົບຄອມພິວເຕີ.

- ຮັບແຈ້ງຄວາມ, ແຈ້ງເຫດ, ລາຍງານ ການກະທຳຜິດທາງລະບົບຄອມພິວເຕີຕໍ່ອົງການສຶບສວນ-ສອບສວນ ຫຼື ອົງການໄອຍະການປະຊາຊົນ ແລະ ຂະແໜງການທີ່ກ່ຽວຂອງ.
- ແຈ້ງໃຫ້ຜູ້ໃຫ້ບໍລິການ ແລະ ຜູ້ຮັກສາຂໍ້ມູນ ອຳນວຍຄວາມສະດວກ ແລະ ສະໜອງຂໍ້ມູນກ່ຽວກັບການກະທຳຜິດທາງລະບົບຄອມພິວເຕີ.
- ໃຫ້ຄຳປຶກສາ ແລະ ແນະນຳວິທີປ້ອງກັນ ແລະ ການແກ້ໄຂທາງດ້ານເຕັກນິກ ເພື່ອຫຼຸດຜ່ອນການສູນເສຍຂໍ້ມູນ, ການລົບກວນຂໍ້ມູນ, ບໍ່ໃຫ້ມີການຢຸດຕິການທຳງານຂອງລະບົບຄອມພິວເຕີ, ສະກັດກັ້ນ ການກະຈາຍໄວຣັສຄອມພິວເຕີ ແລະ ການເຂົ້າທຳລາຍຂໍ້ມູນໃນລະບົບຄອມພິວເຕີ.
- ມີບົດບາດ ແລະ ຄວາມຮັບຜິດຊອບພາຍໃຕ້ກົດໝາຍວ່າດ້ວຍການປ້ອງກັນ ແລະ ສະກັດກັ້ນອາດຊະຍາກຳທາງລະບົບຄອມພິວເຕີ (ປີ 2015) ເພື່ອຕອບສະໜອງຕໍ່ເຫດການອາດຊະຍາກຳທາງອິນເຕີເນັດ ລວມທັງການໃຊ້ຄວາມຮຸນແຮງທີ່ອຳນວຍຄວາມສະດວກໂດຍເຕັກໂນໂລຊີ (TFGBV). ນີ້ອາດຈະກ່ຽວຂ້ອງກັບການອອກແຈ້ງເຕືອນ, ການປຶກສາຫາລື, ການແຈ້ງເຕືອນສຸກເສີນ ຫຼື ການຕອບສະໜອງເຫດການຢ່າງເປັນທາງການ.
- ມີອຳນາດທີ່ຈະສົ່ງຕໍ່ຄະດີອາຊະຍາກຳທາງລະບົບຄອມພິວເຕີໄປຫາຕຳຫຼວດ ຫຼື ຫ້ອງການໄອຍະການເພື່ອສືບສວນກໍລະນີ. ຜົນສະທ້ອນສຳລັບຜູ້ກະທຳຜິດອາດຈະປະກອບມີຄຳເຕືອນ, ການສຶກສາອົບຮົມ, ມາດຕະການທາງວິໄນ, ການຈ່າຍຄ່າຊົດເຊີຍທາງດ້ານການເງິນ ຫຼື ການປັບໃໝ, ແລະ ການລົງໂທດທາງອາຍາ.
- ມີອຳນາດສະກັດກັ້ນ ແລະ ປິດເວັບໄຊທ໌ ແລະ ຮູບພາບຕ່າງໆທີ່ກ່ຽວຂ້ອງກັບສື່ລາມົກອາບາຈານ ໂດຍການປະສານງານກັບບັນດາບໍລິສັດທີ່ໃຫ້ບໍລິການດ້ານອິນເຕີເນັດແກ່ ສປປ ລາວ.

ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ

- ສ້າງຕັ້ງ ແລະ ຄຸ້ມຄອງເຄືອຂ່າຍການປົກປ້ອງ ແລະ ຊ່ວຍເຫຼືອເດັກ ຫຼື ສ້າງຕັ້ງຄະນະກຳມະການໃນປົກປ້ອງ ແລະ ຊ່ວຍເຫຼືອເດັກ ເພື່ອປົກປ້ອງ ແລະ ຊ່ວຍເຫຼືອເດັກຜູ້ຖືກເຄາະຮ້າຍ.
- ສ້າງກົນໄກ ແລະ ລະບົບການປະສານງານເພື່ອສະໜອງການຊ່ວຍເຫຼືອແກ່ຜູ້ເຄາະຮ້າຍທີ່ເປັນເດັກໃຫ້ທັນເວລາ, ແລະ ປະສານສົມທົບກັບອຳນາດການປົກຄອງອື່ນໆ ເພື່ອສະໜອງ ແລະ ຕິດຕາມການປົກປ້ອງ ແລະ ຊ່ວຍເຫຼືອທີ່ຈຳເປັນ.
- ສະໜອງການຝຶກອົບຮົມວິຊາຊີບ, ພັດທະນາສີມືແຮງງານ ແລະ ຊອກຫາວຽກເຮັດງານທຳໃຫ້ແກ່ຜູ້ຖືກເຄາະຮ້າຍ.
- ຊີ້ນຳ ແລະ ຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານຄວາມຮຸນແຮງຢູ່ໃນໂຮງງານ, ວິສາຫະກິດ ແລະ ສະຖານທີ່ເຮັດວຽກອື່ນໆ.

ຂະແໜງສຶກສາທິການ ແລະ ກິລາ

- ສ້າງເງື່ອນໄຂໃຫ້ແມ່ຍິງໄດ້ເຂົ້າເຖິງການສຶກສາໃນທຸກລະດັບ, ຄົ້ນຄວ້າເອົາເນື້ອໃນກ່ຽວກັບສິດສະເໝີພາບຍິງ-ຊາຍ, ການບໍ່ຈຳແນກເພດ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ສັບຊ້ອນເຂົ້າໃນຫຼັກສູດການສຶກສາ;
- ຊີ້ນຳ ແລະ ຄຸ້ມຄອງວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຢູ່ສະຖານທີ່ລ້ຽງເດັກ, ໂຮງຮຽນ, ແລະ ສະຖານການສຶກສາອື່ນ;
- ຝຶກອົບຮົມ ແລະ ຍົກລະດັບຄວາມຮູ້ແກ່ພະນັກງານ, ຄູ ແລະ ອາຈານກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;

ຂະແໜງຖະແຫຼງຂ່າວ, ວັດທະນາທຳ ແລະ ການທ່ອງທ່ຽວ

- ໂຄສະນາ, ເຜີຍແຜ່ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແລະ ມູນເຊື້ອວັດທະນະທຳອັນດີງາມຂອງຊາດ;
- ເຜີຍແຜ່ຜົນຮ້າຍ ແລະຄວາມສ່ຽງຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;
- ສະກັດກັ້ນການຜະລິດ ແລະ ເຜີຍແຜ່ສື່ລາມົກທີ່ຂັດກັບກົດໝາຍ, ລະບຽບການ ແລະ ຮີດຄອງປະເພນີ ອັນດີງາມຂອງຊາດລາວ, ຈຳກັດການໂຄສະນາ, ເຜີຍແຜ່ສິ່ງທີ່ຈະກໍ່ໃຫ້ເກີດມີການໃຊ້ຄວາມຮຸນແຮງຕໍ່ ແມ່ຍິງ ແລະ ເດັກ;
- ຈັດຝຶກອົບຮົມ ແລະ ຍົກລະດັບຄວາມຮູ້ໃຫ້ແກ່ພະນັກງານສື່ໃນທຸກລະດັບ ທີ່ກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.

ຜູ້ສະໜອງການບໍລິການຂອງອົງການຈັດຕັ້ງທີ່ບໍ່ສັງກັດລະຖະບານ

ອົງການຈັດຕັ້ງທີ່ບໍ່ສັງກັດລະຖະບານ ໃຫ້ການບໍລິການທີ່ຫລາກຫລາຍລວມທັງທີ່ພັກຊົ່ວຄາວທີ່ປອດໄພ, ການຊ່ວຍເຫຼືອທາງຈິດຕະ-ສັງຄົມ, ສຸຂະພາບ, ການຊ່ວຍເຫຼືອທາງກົດໝາຍ ແລະ ການບໍລິການອື່ນໆ. ຕ້ອງໄດ້ກຳນົດຜູ້ສະໜອງການບໍລິການຂອງອົງການຈັດຕັ້ງທີ່ບໍ່ສັງກັດລະຖະບານຢູ່ໃນຊຸມຊົນ ແລະ ລວມເຂົ້າໃນບັນຊີລາຍຊື່ ການບໍລິການ.

6. ຂະບວນການສົ່ງຕໍ່ລະຫວ່າງພາກສ່ວນທີ່ກ່ຽວຂ້ອງ

ສ່ວນຫຼາຍແລ້ວຜູ້ໃຫ້ບໍລິການ ຈະມີຄວາມຊ່ຽວຊານໃນການບໍລິການສະເພາະດ້ານໃດໜຶ່ງ ຫຼື ມີໜ້າທີ່ສະເພາະໃດໜຶ່ງ. ຜູ້ໃຫ້ບໍລິການຕ້ອງຮັບຮູ້ເຖິງຂໍ້ຈຳກັດຂອງການບໍລິການຂອງຕົນເອງ. ພາຍຫຼັງການພິຈາລະນາກ່ຽວກັບຄວາມປອດໄພຂອງຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດຊີວິດ ໂດຍທັນທີ ແລະ ການປິ່ນປົວສຸຂະພາບອັນຮີບດ່ວນແລ້ວ, ອາດຈຳເປັນຕ້ອງໃຫ້ການບໍລິການເພີ່ມເຕີມໂດຍອີງໃສ່ການປຶກສາຫາລືກັບຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ. ການສົ່ງຕໍ່ແມ່ນຈະຕ້ອງໄດ້ພິຈາລະນາເປັນແຕ່ລະກໍລະນີ ຂຶ້ນກັບຄວາມຕ້ອງການ ແລະ ການຍິນຍອມ ຂອງຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ.

ການຍິນຍອມຕໍ່ກັບການແລກປ່ຽນຂໍ້ມູນ: ພາຍຫຼັງຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດຊີວິດ ໄດ້ຮັບແຈ້ງທາງເລືອກໃນການບໍລິການ, ໄດ້ຮັບຂໍ້ມູນກ່ຽວກັບການສົ່ງຕໍ່ແລ້ວ ຂໍ້ມູນຈະສາມາດແລກປ່ຽນກັບໜ່ວຍງານສົ່ງຕໍ່ໄດ້ກໍຕໍ່ເມື່ອຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດຊີວິດ ໃຫ້ການຍິນຍອມເທົ່ານັ້ນ. ແບບຟອມການຍິນຍອມ ຕ້ອງຂຽນໃຫ້ຄົບຖ້ວນ ແລະ ເຊັນລົງນາມ ເພື່ອຮັບປະກັນວ່າຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດຊີວິດ ໄດ້ຮັບການສະໜອງຂໍ້ມູນກ່ຽວກັບຂໍ້ມູນທີ່ຈະຖືກແລກປ່ຽນ ແລະ ແລກປ່ຽນໃຫ້ພາກສ່ວນໃດແດ່. ສຳລັບເດັກທີ່ມີອາຍຸບໍ່ຮອດເກນທີ່ຈະໃຫ້ການຍິນຍອມ, ພໍ່ແມ່ ຫຼື ຜູ້ປົກຄອງທີ່ບໍ່ໄດ້ກະທຳຜິດ ຫຼື ຖ້າບໍ່ມີ ແມ່ນໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຜ່ານຄະນະກຳມະການປົກປ້ອງເດັກ ມີຄວາມຮັບຜິດຊອບຕໍ່ການຕັດສິນໃຈໃຫ້ແກ່ເດັກ.

ປະສານງານໃນການສົ່ງຕໍ່: ອີງຕາມການຍິນຍອມເຫັນດີຂອງຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດຊີວິດ, ໃຫ້ຕິດຕໍ່ຫາໜ່ວຍງານການສົ່ງຕໍ່ເພື່ອວາງແຜນການສົ່ງຕໍ່ຜູ້ລອດຊີວິດ ເຊັ່ນ: ການນັດໝາຍວັນເວລາ, ການຈັດສັນການເດີນທາງ ຫຼື ການຂົນສົ່ງອື່ນໆ.

ການເກັບສຳເນົາເອກະສານ: ເກັບກຳສຳເນົາເອກະສານການສົ່ງຕໍ່ ແມ່ນນຳໃຊ້ປຶ້ມບັນທຶກເພື່ອບັນທຶກການສົ່ງຕໍ່ ຫຼື ຂັ້ນຕອນອື່ນໆ.

7. ເສັ້ນທາງການສົ່ງຕໍ່

ຜູ້ສະໜອງການຊ່ວຍເຫຼືອ ແມ່ຍິງທີ່ຖືກຄວາມຮຸນແຮງ ເມື່ອໄດ້ຮັບແຈ້ງກໍລະນີ ການໃຊ້ຄວາມຮຸນແຮງຈາກຄູ່ນອນ ຫຼື ໄດ້ຮັບຄວາມຮຸນແຮງທາງເພດ ຄວນມີການປະເມີນເບື້ອງຕົ້ນ ດ້ານສຸຂະພາບ, ສັງຄົມ ແລະ ຍຸຕິທຳ ແຜນວາດຂ້າງລຸ່ມ ຈະຊ່ວຍຜູ້ໃຫ້ບໍລິການໃນການຕອບໂຕ້

ແຜນວາດເສັ້ນທາງການສົ່ງຕໍ່

ສຳລັບຜູ້ໃຫຍ່, ການບໍລິການທັງຫມົດແມ່ນອີງໃສ່ການຍິນຍອມຂອງຜູ້ເຄາະຮ້າຍ / ຜູ້ລອດຊີວິດແລະການຍິນຍອມສາມາດຖອນໄດ້.

ສຳລັບເດັກ, ເດັກບໍ່ສາມາດໃຫ້ການຍິນຍອມໄດ້-ພໍ່ແມ່ ຫຼື ຜູ້ປົກຄອງທີ່ບໍ່ໄດ້ກະທຳຜິດ ຫຼື ພາກສ່ວນແຮງງານ ແລະ ສະຫວັດດີການສັງຄົມເປັນຜູ້ໃຫ້ການຍິນຍອມແທນ

ກ. ດຽວນີ້ແມ່ຍິງ ປອດໄພບໍ?

ບໍ່ປອດໄພ

ຂ. ລາວຕ້ອງການ ການປິ່ນປົວທາງເພດ ໂດຍດ່ວນບໍ?

ບໍ່ຕ້ອງການ ແຕ່ ໃຫ້ສືບຕໍ່

ຄ. ການກະທຳຮຸນແຮງນີ້ເປັນການກະ ທຳຜິດຕາມກົດໝາຍບໍ? ໂດຍສະໜອງທາງເລືອກເພື່ອການຕັດສິນໃຈ

ເຖິງແມ່ນຜູ້ຖືກເຄາະຮ້າຍຈະຕ້ອງການ ຫຼື ບໍ່ຕ້ອງການ ແຕ່ຜູ້ໃຫ້ບໍລິການຕ້ອງຄິດສະເໝີວ່າ

ງ. ແມ່ຍິງ ຕ້ອງການ ການສົ່ງ ຕໍ່ຫຍັງແດ່?

ການສົ່ງຕໍ່ສຳລັບການຊ່ວຍເຫຼືອໃນການຄຸ້ມຄອງກໍລະນີ (ການປະເມີນຄວາມຕ້ອງການ, ການສົ່ງຕໍ່ ແລະ ການຕິດຕາມ)

ການຊ່ວຍເຫຼືອທາງ ກົດໝາຍ

ການຊ່ວຍເຫຼືອທາງ ຈິດຕະ-ສັງຄົມ

ທີ່ພັກຊົ່ວຄາວທີ່ປອດ

ການປິ່ນປົວສຸຂະພາບ

ປອດໄພແລ້ວ ແຕ່ໃຫ້ສືບຕໍ່

ຕ້ອງການ

ຕ້ອງການ ດຳເນີນຄະດີ

ບໍ່ຕ້ອງການດຳເນີນຄະດີ

ການປະເມີນທາງເລືອກ ແລະ ຄວາມປອດໄພອັນຮີບດ່ວນ

ການປະເມີນຄວາມຕ້ອງການ ໃນການປິ່ນປົວອັນຮີບດ່ວນ

ຜູ້ລອດຊີວິດຕັດສິນໃຈວ່າບໍ່ຕ້ອງການ ລາຍງານ ຫຼື ຍື່ນຟ້ອງ(ຂໍ້ມູນສະໜອງ ໃຫ້ກ່ຽວກັບທາງເລືອກທີ່ມີຢູ່)

ໃຫ້ຂໍ້ມູນກ່ຽວກັບໜ່ວຍໄກ່ເກ່ຍ ຂັ້ນບ້ານ (ໃນກໍລະນີບໍ່ຮຸນ ແຮງເທົ່ານັ້ນ)

ສົ່ງຕໍ່ຫາຕຳຫຼວດ ໃນກໍລະນີຕິກຢູ່ ໃນອັນຕະລາຍ

ສົ່ງຕໍ່ຫາສູນທີ່ພັກ ຊົ່ວຄາວຂອງສະ ຫະພັນແມ່ຍິງລາວ

ທີ່ຢູ່ສະຖານທີ່ພັກ ເຊົ້າທີ່ປອດໄພ ແລະ ມີແຜນຄວາມ ປອດໄພຂອງ ບຸກຄົນນັ້ນ

ຕ້ອງການການປິ່ນ ປົວອາການບາດ ເຈັບອັນຮີບ ດ່ວນບໍ?

ການກວດພິສູດຫຼັກ ຖານເພື່ອມາຢັ້ງຢືນທາງກົດ ໝາຍໃນກໍລະນີສົງໃສວ່າ ມີການຂົ່ມຂືນທຳຮ້າເລີ ຫຼື ລ່ວງລະເມີດທາງເພດ (ສົ່ງຕໍ່ຫາໂຮງໝໍທີ່ຖືກ ມອບໝາຍ ໃຫ້ດຳເນີນການກວດ

ຕິດຕໍ່ຫາຕຳຫຼວດ ແລະ ຕຳຫຼວດສຳພາດ ເອົາຂໍ້ມູນ, ສືບສວນ, ກັກໂຕຜູ້ກະທຳຜິດ

ມີການໃຊ້ເທັກໂນໂລຊີ ອຳນວຍຄວາມສະດວກ ຫຼື ມີການໃຊ້ສື່ສັງຄົມ ເພື່ອກະທຳຄວາມຮຸນແຮງ?

ຕ້ອງການ

ສົ່ງຕໍ່ຫາໄອຍະການ ຫຼື ທະນາຍຄວາມ ເພື່ອຊ່ວຍເຫຼືອທາງດ້ານກົດໝາຍ

ຕ້ອງການ

ສົ່ງຕໍ່ສານຕັດສິນລົງໂທດ

ຕ້ອງການ

ສົ່ງຕໍ່ຫາໄອຍະການ ຫຼື ທະນາຍຄວາມ ເພື່ອຊ່ວຍເຫຼືອທາງດ້ານກົດໝາຍ

ຕ້ອງການ

ສົ່ງຕໍ່ຫາກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ເຊິ່ງມີລາຍລະອຽດໃນເອກະສານ ຊ້ອນທ້າຍທີ 2

ການໄກ່ເກ່ຍຂັ້ນບ້ານ ແມ່ນໃຫ້ໄກ່ ເກ່ຍໃນກໍລະນີບໍ່ຮຸນແຮງເທົ່າ ນັ້ນ, ໂດຍໄດ້ຮັບການຍິນຍອມ ເຫັນດີຈາກຜູ້ຖືກເຄາະຮ້າຍ/ ຜູ້ລອດຊີວິດ ບໍ່ໃຫ້ໜ່ວຍໄກ່ເກ່ຍ ຂັ້ນບ້ານ ໄກ່ເກ່ຍກໍລະນີ ຄວາມຮຸນແຮງທາງເພດ (ໃຫ້ປະຕິບັດຕາມພາລະບົດບາດ ຂອງໜ່ວຍໄກ່ເກ່ຍຂັ້ນບ້ານ) ສະບັບປີ 2021

ການຄຸ້ມຄອງກໍລະນີຜູ້ລອດຊີວິດ ສຳລັບການຊ່ວຍເຫຼືອໄລຍະຍາວ

ການຕິດຕາມ, ປະເມີນຄືນ, ແລະ ສົ່ງຕໍ່ ເພື່ອຕິດຕາມຄວາມຄືບໜ້າເປັນລາຍເດືອນ ຫຼື ຖີ່ກວ່ານັ້ນ ຖ້າຈຳເປັນ

ໂດຍອີງໃສ່ຄວາມຍິນຍອມຂອງ ຜູ້ເຄາະຮ້າຍ/ຜູ້ລອດຊີວິດ ສສຍລ ສາມາດເປັນຜູ້ຄຸ້ມຄອງກໍລະນີ ແລະ ຕ້ອງເຊື່ອມ ໄປຫາບັນຊີລາຍ ການບໍລິການ ທີ່ອະທິບາຍການບໍລິການທີ່ມີຢູ່, ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງແຕ່ລະຂະແໜງການ.

ການບໍລິການເຊື່ອມໃສ່ມາດຕະຖານການດຳເນີນງານ ການຊ່ວຍເຫຼືອຂອງແຕ່ລະຂະແໜງການ

ມາດຕະຖານການດຳເນີນງານດ້ານສຸຂະພາບ → ມາດຕະຖານການດຳເນີນງານດ້ານສັງຄົມ → ມາດຕະຖານການດຳເນີນງານດ້ານ ຍຸຕິທຳ

8. ການປົກປ້ອງ, ການຊ່ວຍເຫຼືອ ແລະ ການບໍລິການທີ່ຈຳເປັນຕໍ່ກັບກຸ່ມທີ່ມີຄວາມສ່ຽງ /ດ້ອຍໂອກາດ


ມີຄວາມຮັບຮູ້ເພີ່ມຂຶ້ນວ່າແມ່ຍິງແລະກຸ່ມຄົນທີ່ມີຄວາມຫຼາກຫຼາຍໄດ້ຮັບຄວາມທຸກຈາກການຖືກຈຳແນກ ແລະຄວາມບໍ່ສະເໝີພາບຫຼາຍຮູບແບບທີ່ແຕກຕ່າງກັນເຮັດໃຫ້ເຂົາເຈົ້າມີຄວາມສ່ຽງຕໍ່ການຖືກໃຊ້ຄວາມຮຸນແຮງຫຼາຍຂຶ້ນ. ບໍ່ຈຳກັດສະເພາະແຕ່ກຸ່ມຄົນເຫຼົ່ານີ້ ແຕ່ຍັງລວມເຖິງຄົນພິການ, ກຸ່ມຄົນຫລາກຫຼາຍທາງເພດ (LGBTIQA+), ແມ່ຍິງທີ່ເປັນ ຫຼື ໄດ້ຮັບຜົນກະທົບຈາກເຊື້ອ HIV; ແມ່ຍິງສູງອາຍຸ; ແຮງງານເຄື່ອນຍ້າຍເພດຍິງ, ພະນັກງານໂຮງງານຕັດຫຍິບ, ພະນັກງານທີ່ເຮັດວຽກໃນຂະແໜງບັນເທີງ, ແມ່ຍິງຊົນເຜົ່າຕ່າງໆ ແລະ ແມ່ຍິງທີ່ມາຈາກສາສະໜາຕ່າງໆ. ມາດຕະຖານທາງສັງຄົມ, ມົນທິນ ແລະ ການຈຳແນກ ໄດ້ເພີ່ມຄວາມສ່ຽງຕໍ່ຄວາມຮຸນແຮງ ຫຼື ສິ່ງທ້າທາຍໃນການເຂົ້າເຖິງການປົກປ້ອງ ແລະ ການບໍລິການ.

ໂດຍອີງໃສ່ຫຼັກການພື້ນຖານການໃຫ້ບໍລິການທັງໝົດມັນແມ່ນຄວາມຮັບຜິດຊອບຂອງຜູ້ໃຫ້ບໍລິການໃນລະດັບຜູ້ຈັດຕັ້ງປະຕິບັດ ແລະ ໃນລະດັບຜູ້ປະສານງານ ເພື່ອເຮັດໃຫ້ການບໍລິການສາມາດເຂົ້າເຖິງໄດ້ ແລະ ມີໃຫ້ແກ່ແມ່ຍິງທຸກກຸ່ມ.ສິ່ງສຳຄັນ,ການວິເຄາະຢ່າງຕໍ່ເນື່ອງຕ້ອງໄດ້ຮັບການດຳເນີນການເພື່ອຮັບປະກັນວ່າແມ່ຍິງສາມາດເຂົ້າເຖິງການບໍລິການ. ສິ່ງກີດຂວາງອາດຈະປະກອບມີຄ່າໃຊ້ຈ່າຍ, ພາສາ, ໄລຍະທາງ ຫຼື ປັດໃຈອື່ນໆ. ບາງຍຸດທະສາດເພື່ອກຳຈັດສິ່ງກີດຂວາງໃນການເຂົ້າເຖິງການບໍລິການລວມມີ:

- ແກ້ໄຂບັນທັດຖານທາງສັງຄົມທີ່ຈຳແນກ ທີ່ສົ່ງຜົນໃຫ້ເກີດການດູຖູກ ແລະ ການຈຳແນກຕໍ່ກຸ່ມຄົນຕ່າງໆ ໃນຊຸມຊົນ-ໂດຍຜ່ານການກະຕຸ້ນຊຸມຊົນ, ຜູ້ມີຫນ້າທີ່ຮັບຜິດຊອບ ແລະ ຜູ້ໄດ້ຮັບສິດ.
- ກຳນົດກຸ່ມຜ່ານການວິເຄາະບົດບາດຍິງ-ຊາຍ, ຄວາມພິການ ແລະ ການລວມເອົາທຸກຄົນໃນສັງຄົມ ເພື່ອເຂົ້າໃຈສະຖານະການໃນຊຸມຊົນທີ່ແຕກຕ່າງກັນຂອງແມ່ຍິງທີ່ດ້ອຍໂອກາດ ຫຼື ມີຄວາມສ່ຽງເພີ່ມຂຶ້ນເພື່ອກຳນົດ ແລະ ແກ້ໄຂອຸປະສັກຕໍ່ການບໍລິການຂອງເຂົາເຈົ້າ.
- ຮວບຮວມເອົາຂໍ້ມູນຈາກຜູ້ເຄາະຮ້າຍ/ຜູ້ລອດຊີວິດ ດ້ວຍຕົນເອງ ຕໍ່ກັບອຸປະສັກໃນການບໍລິການ ແລະ ສ້າງຍຸດທະສາດເພື່ອຕອບສະໜອງ.
- ໃຫ້ບໍລິການເຊັ່ນ: ການແປພາສາເປັນປະຈຳໃນເຂດທີ່ມີການເວົ້າຫຼາຍພາສາຫຼືມີແຮງງານເຄື່ອນຍ້າຍຫຼາຍ.
- ກຳຈັດສິ່ງກີດຂວາງທີ່ອາດມີ ຢູ່ຈຸດບໍລິການເຊັ່ນ: ໂຮງໝໍ, ສຸກສາລາ, ສິ່ງອຳນວຍຄວາມສະດວກທາງດ້ານກົດໝາຍ, ທີ່ພັກອາໄສທີ່ປອດໄພ ແລະ ອື່ນໆ ເພື່ອຮັບປະກັນການເຂົ້າເຖິງ.

9. ການນຳໃຊ້ວິທີການເອົາຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດເປັນໃຈກາງເພື່ອການສົ່ງຕໍ່

ວິທີການເອົາຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ເປັນໃຈກາງ ໝາຍຄວາມວ່າຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ສາມາດເຂົ້າໄປໃນ "ລະບົບ" ໃນຈຸດໃດກໍ່ໄດ້ຈາກຜູ້ໃຫ້ບໍລິການ. ວຽກງານທຳອິດ (ດັ່ງທີ່ອະທິບາຍກ່ອນຫນ້ານີ້ໃນຂໍ້7) ແມ່ນການກວດສອບສຸຂະພາບ ແລະ ຄວາມປອດໄພທັນທີທັນໃດ, ຫຼັງຈາກນັ້ນຈະປະເມີນຄວາມຕ້ອງການໄລຍະຍາວ. ເນື່ອງຈາກຜູ້ໃຫ້ບໍລິການທຸກຄົນບໍ່ສາມາດໃຫ້ບໍລິການທັງໝົດໄດ້, ຈຶ່ງສາມາດເບິ່ງຂໍ້ມູນໃນບັນຊີລາຍການການບໍລິການ (Gender-Based Violence Service Directory). ສສຍລ ຍັງສາມາດເຮັດໜ້າທີ່ເປັນຜູ້ປະສານງານສູນກາງ ຫຼື ຜູ້ໃຫ້ການບໍລິການ ພາຍໃຕ້ການຍິນຍອມຂອງຜູ້ເຄາະຮ້າຍ/ຜູ້ລອດຊີວິດ. ຕໍ່ໄປນີ້ແມ່ນສະຖານະການທີ່ສະແດງໃຫ້ເຫັນວິທີການນີ້.




ນາງ ມະກະລາໄດ້ຖືກຜົວລາວທຸບຕີ, ແມ່ຂອງລາວແນະນຳໃຫ້ ໄປແຈ້ງເຈົ້າໜ້າທີ່ຕຳຫຼວດ, ແລ້ວ ລາວກໍ່ໄດ້ໄປແຈ້ງເຈົ້າໜ້າທີ່ຕຳຫຼວດ.

ເຈົ້າໜ້າທີ່ຕຳຫຼວດ: ມະກະລາ, ຂອບໃຈທີ່ເຂົ້າມາຫາຂ້ອຍເພື່ອຂໍຄວາມຊ່ວຍເຫຼືອ, ຂ້ອຍຕ້ອງການບອກເຈົ້າ ກ່ຽວກັບທາງເລືອກຂອງເຈົ້າ, ແຕ່ທຳອິດຂ້ອຍຢາກໃຫ້ແນ່ໃຈວ່າເຈົ້າບໍ່ເປັນຫຍັງ. “ເຈົ້າມີການບາດເຈັບ/ມີບາດ ແຜບໍ? ເຈົ້າຕ້ອງການການດູແລທາງການແພດດຽວນີ້ບໍ?” ຫລື ເຈົ້າບໍ່ຈຳເປັນຕ້ອງໄປພົບທ່ານໝໍດຽວນີ້ບໍ່?

ມະກະລາ, ຂ້ອຍມີຂໍ້ມູນກ່ຽວກັບທາງເລືອກທາງດ້ານກົດໝາຍເທົ່ານັ້ນ, ແຕ່ມີບໍລິການອື່ນອີກທີ່ສາມາດເປັນ ປະໂຫຍດແກ່ເຈົ້າໄດ້. ສູນກາງສະຫະພັນແມ່ຍິງລາວ ມີການສະໜອງການບໍລິການດ້ານຕ່າງໆ ເຊັ່ນ: ການໃຫ້ ຄຳປຶກສາ, ທີ່ພັກເຊົາທີ່ປອດໄພ, ການສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດ ແລະ ອື່ນໆ. ເຂົາເຈົ້າຍັງສາ ມາດຊ່ວຍໃຫ້ການຕິດຕາມກໍລະນີທາງດ້ານກົດໝາຍຂອງເຈົ້າ, ຖ້າເຈົ້າໃຫ້ຂ້ອຍສົ່ງຕໍ່ກໍລະນີເຈົ້າໄປຫາເຂົາເຈົ້າ, ເຂົາເຈົ້າຈະສາມາດໃຫ້ຂໍ້ມູນ ແລະ ການຊ່ວຍເຫຼືອເພີ່ມເຕີມແກ່ເຈົ້າ. ມັນຈະດີບໍຖ້າຂ້ອຍສົ່ງກໍລະນີເຈົ້າໄປຫາ ສູນກາງສະຫະພັນແມ່ຍິງລາວ?

ນາງ ມະກະລາ ຕອບວ່າ ໂດຍ ເຫັນດີ ແລະ ເຈົ້າໜ້າທີ່ຕຳຫຼວດກໍ່ໄດ້ ສົ່ງຕໍ່ກໍລະນີຂອງລາວ ໄປຫາ ສູນກາງສະຫະ ພັນແມ່ຍິງລາວ ບ່ອນທີ່ນາງຈະໄດ້ຮັບການປະເມີນຮອບດ້ານ. ນາງ ມະກະລາ ຕັດສິນໃຈວ່າການຊ່ວຍເຫຼືອທີ່ ນາງຕ້ອງການໃນປັດຈຸບັນແມ່ນເພື່ອຕິດຕາມກໍລະນີທາງກົດໝາຍຂອງນາງ. ສູນກາງສະຫະພັນແມ່ຍິງລາວ ກ່າວວ່າ ພວກເຂົາເຈົ້າຈະຊ່ວຍເຫຼືອນາງ ແລະ ສ້າງແຜນການຊ່ວຍເຫລືອໃນເລື່ອງນີ້.

ຂ້ອຍຢາກຖາມເຈົ້າກ່ຽວກັບເຫດການທີ່ເກີດຂຶ້ນ ເຊິ່ງຈະຊ່ວຍໃຫ້ຂ້ອຍເຂົ້າໃຈວ່າເຈົ້າຈະມີທາງເລືອກໃດໄດ້ແດ່ ເພື່ອຂ້ອຍຈະສາມາດໃຫ້ຂໍ້ມູນທີ່ຖືກຕ້ອງແກ່ເຈົ້າໄດ້ (ເຈົ້າໜ້າທີ່ເອົາຂໍ້ມູນກ່ຽວກັບລາວ, ລາຍລະອຽດຂອງເຫດ ການ, ຜູ້ລ່ວງລະເມີດ). ເບິ່ງແລ້ວຄືເຈົ້າຖືກຜົວຂອງເຈົ້າຕີມາ ແລະ ນີ້ບໍ່ແມ່ນຄັ້ງທຳອິດ. ຂ້ອຍຈະບອກເຈົ້າກ່ຽວ ກັບທາງເລືອກດ້ານກົດໝາຍ. (ໃຫ້ຂໍ້ມູນກ່ຽວກັບທາງເລືອກທາງດ້ານກົດໝາຍ ແລະ ມະກະລາຕົກລົງທີ່ຈະ ຟ້ອງຮ້ອງທາງກົດໝາຍຕໍ່ຜົວຂອງລາວ)



ນາປົວໄດ້ຖືກຜົວຂອງລາວຕີແລະນີ້ບໍ່ແມ່ນຄັ້ງທຳອິດ. ລາວຢ້ານແຮງວ່າຜົວຂອງລາວຈະທຳຮ້າຍລາວຫຼາຍກວ່ານີ້ລາວຈຶ່ງໄດ້ລັກໜີ ແລະ ອອກໄປຫາ ສສຍລ. ນາງໄດ້ເຫັນໂປສເຕີຂອງ ສສຍລ ທີ່ບອກວ່າວ່າພວກເຂົາສາມາດຊ່ວຍເຫລືອແມ່ຍິງຄືກັບນາງໄດ້.

ພະນັກງານຜູ້ຮັບຜິດຊອບດ້ານຄວາມຮຸນແຮງຕໍ່ແມ່ຍິງຂອງ ສສຍລ: ຂອບໃຈທີ່ເຂົ້າມາຫາພວກເຮົາເພື່ອຂໍຄວາມຊ່ວຍເຫຼືອ. ຂ້ອຍຕ້ອງການບອກເຈົ້າກ່ຽວກັບທາງເລືອກຂອງເຈົ້າ, ແຕ່ທຳອິດຂ້ອຍຢາກໃຫ້ແນ່ໃຈວ່າເຈົ້າບໍ່ເປັນຫຍັງ. “ເຈົ້າມີການບາດເຈັບ/ບາດແຜຢູ່ໃສບໍ? ເຈົ້າຕ້ອງການການດູແລທາງການແພດດຽວນີ້ບໍ?” ຫລື ເຈົ້າບໍ່ຈຳເປັນຕ້ອງໄປພົບທ່ານໝໍດຽວນີ້ບໍ?

ຂໍໃຫ້ຂ້ອຍໄດ້ຖາມເຈົ້າກ່ຽວກັບເຫດການທີ່ເກີດຂຶ້ນ, ນີ້ຈະຊ່ວຍໃຫ້ຂ້ອຍເຂົ້າໃຈທາງເລືອກທີ່ສາມາດເປັນໄປໄດ້ຂອງເຈົ້າ ເພື່ອຂ້ອຍຈະສາມາດໃຫ້ຂໍ້ມູນທີ່ຖືກຕ້ອງແກ່ເຈົ້າໄດ້ (ພະນັກງານຮັບຂໍ້ມູນກ່ຽວກັບນາປົວ, ລາຍລະອຽດຂອງເຫດການ, ຜູ້ລ່ວງລະເມີດ).

ມີບາງສິ່ງທີ່ຂ້ອຍຄິດວ່າມັນສຳຄັນສຳລັບເຈົ້າທີ່ຈະຕ້ອງອະທິບາຍໃຫ້ເຈົ້າເຂົ້າໃຈ. ທຳອິດມັນເບິ່ງຄືວ່າເຈົ້າບໍ່ມີຄວາມປອດໄພທີ່ຈະກັບຄືນບ້ານ. ເຈົ້າມີຄອບຄົວຫຼືໝູ່ເພື່ອນທີ່ຢາກຈະລີ້ມນຳບໍ່? ຖ້າບໍ່ມີ ພວກເຮົາມີສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກ ທີ່ເຈົ້າສາມາດຢູ່ໄດ້. ໃນຂະນະທີ່ຢູ່ທີ່ນັ້ນພວກເຮົາຊ່ວຍໃຫ້ເຈົ້າໄດ້ຮຽນຮູ້ກ່ຽວກັບທາງເລືອກຂອງຕົນເອງ, ໃຫ້ບໍລິການດ້ານຕ່າງໆເຊັ່ນ: ການໃຫ້ຄຳປຶກສາ, ສະໜອງທີ່ພັກອາໄສທີ່ປອດໄພ, ແລະ ຊ່ວຍໃຫ້ເຈົ້າກຽມພ້ອມທີ່ຈະອາໄສຢູ່ໃນຊຸມຊົນຢ່າງປອດໄພ. ນາປົວໄດ້ເວົ້າວ່າແມ່ນແລ້ວ, ນາງຕ້ອງການໄປບ່ອນພັກເຊົາທີ່ປອດໄພ. ນາງໄດ້ຍອມຮັບຕໍ່ຂັ້ນຕອນຂອງສູນໃຫ້ຄຳປຶກສາແລະ ປົກປ້ອງແມ່ຍິງ ແລະ ເດັກ.

ນາປົວ, ຂ້ອຍຢາກຈະບອກຕື່ມກັບເຈົ້າວ່າ ໃນປັດຈຸບັນ, ຍ້ອນປະເພດຂອງຄວາມຮຸນແຮງທີ່ເຈົ້າໄດ້ປະສົບ, ເຈົ້າສາມາດດຳເນີນຄະດີຕາມກົດຫມາຍຕໍ່ຜົວຂອງເຈົ້າ. ຖ້າເຈົ້າຢາກເຮັດແນວນັ້ນ – ຫຼືຮຽນຮູ້ເພີ່ມເຕີມກ່ຽວກັບມັນ ຂ້ອຍສາມາດພາເຈົ້າໄປຫາເຈົ້າໜ້າທີ່ຕຳຫຼວດໄດ້. ນາປົວຕັດສິນໃຈວ່ານາງຕ້ອງການທີ່ຈະໄປຫາເຈົ້າໜ້າທີ່ຕຳຫຼວດ. ຕໍ່ມາເມື່ອວິກິດການຂອງນາປົວໄດ້ສິ້ນສຸດລົງ, ສສຍລ ໄດ້ມີການປະເມີນທີ່ເລິກເຊິ່ງຂຶ້ນຕື່ມ ແລະ ນາປົວໄດ້ຕັດສິນໃຈວ່ານາງຕ້ອງການຢ່າຮ້າງກັບຜົວ ແລະ ສສຍລ ໄດ້ສົ່ງຕໍ່ລາວໄປຫາການຊ່ວຍເຫຼືອທາງດ້ານກົດໝາຍ.

ສສຍລ ໄດ້ໃຫ້ການສະໜັບສະໜູນກໍລະນີຂອງນາປົວຕະຫຼອດເວລາ ແລະ ຊ່ວຍໃຫ້ລາວ ກັບຄືນສູ່ຊຸມຊົນໄດ້ໃນ 2-3 ເດືອນຕໍ່ມາ.

ຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ໄປຫ້ອງການຊ່ວຍເຫຼືອທາງດ້ານກົດໝາຍ ເພາະວ່ານາງຖືກຜົວຂອງນາງທຸບຕີ. ນາງຕ້ອງການການຢ່າຮ້າງ.





ທຳອິດຫ້ອງການຊ່ວຍເຫຼືອທາງດ້ານກົດໝາຍຈະກວດເບິ່ງວ່ານາງປອດໄພໃນຕອນນີ້ຫຼືບໍ່, ແລະ ນາງມີບັນຫາສຸຂະພາບອັນຮີບດ່ວນຫຼືບໍ່. ນາງກ່າວວ່ານາງປອດໄພແລະບໍ່ມີການບາດເຈັບ. ພວກເຂົາເຈົ້າບອກນາງກ່ຽວກັບທາງເລືອກທາງດ້ານກົດໝາຍຂອງນາງສຳລັບການຢ່າຮ້າງ ແລະໃນລະຫວ່າງຂະບວນການເກັບກຳຂໍ້ມູນເພື່ອຊອກຫາຫລັກຖານການຖືກທຸບຕີໂດຍຜົວຂອງນາງ. ພະນັກງານຂອງຫ້ອງການຊ່ວຍເຫລືອດ້ານກົດໝາຍໄດ້ບອກນາງກ່ຽວກັບ ສສຍລ, ກ່ຽວກັບເຈົ້າໜ້າທີ່ຕຳຫຼວດ, ກ່ຽວກັບໜ່ວຍງານໄກ່ເກ່ຍຂັ້ນບ້ານ, ໃຫ້ຄຳປຶກສາ ແລະ ການບໍລິການອື່ນໆ. ພວກເຂົາເຈົ້າແນະນຳວ່ານາງອາດຈະໄດ້ຮັບຜົນປະໂຫຍດຈາກສິ່ງເຫຼົ່ານີ້. ນາງປະຕິເສດການບໍລິການແລະເວົ້າວ່ານາງບໍ່ຕ້ອງການເວົ້າກັບຜູ້



ມິນາ ຕ້ອງການຢ່າຮ້າງ. ນາງໄດ້ຖືກທຸບຕີໂດຍຜົວຂອງນາງ. ນາງໄດ້ເຫັນໂປສເຕີກ່ຽວກັບການຊ່ວຍເຫຼືອດ້ານກົດໝາຍ ແລະກໍ່ໄປບ່ອນນັ້ນຕາມທີ່ໂປສເຕີໄດ້ໃຫ້ຂໍ້ມູນ.

ພະນັກງານຜູ້ໃຫ້ການຊ່ວຍເຫຼືອດ້ານກົດໝາຍ: ມິນາ, ຂອບໃຈທີ່ເຂົ້າມາຫາພວກເຮົາ. ໃນເມື່ອເຈົ້າຕ້ອງການຢ່າຮ້າງ, ຂໍໃຫ້ຂ້ອຍຊອກຮູ້ເພີ່ມເຕີມກ່ຽວກັບກໍລະນີຂອງເຈົ້າ. ມິນາ ບອກກັບພະນັກງານວ່ານາງຕ້ອງການຢ່າຮ້າງເພາະວ່າຜົວຂອງນາງຕີນາງ. ພະນັກງານຫ້ອງການຊ່ວຍເຫຼືອທາງດ້ານກົດໝາຍໄດ້ຢຸດຖາມ ແລະ ຄິດກ່ຽວກັບສິ່ງທີ່ລາວຄວນເຮັດ. ລາວຈື່ໄດ້ວ່າລາວຄວນກວດເບິ່ງສຸຂະພາບຂອງມິນາຢ່າງຮີບດ່ວນ ແລະ ຄວາມປອດໄພຂອງນາງ.

ພະນັກງານຜູ້ໃຫ້ການຊ່ວຍເຫຼືອດ້ານກົດໝາຍ: ມິນາ, ຂ້ອຍຕ້ອງການແນ່ໃຈວ່າເຈົ້າສະບາຍດີ ກ່ອນທີ່ພວກເຮົາຈະລົມກັນຕື່ມ. “ດຽວນີ້ເຈົ້າໄດ້ຮັບບາດເຈັບບໍ? ເຈົ້າຕ້ອງການການດູແລທາງການແພດດຽວນີ້ບໍ? ຫລື ເຈົ້າບໍ່ຈຳເປັນຕ້ອງໄປຫາໝໍດຽວນີ້ບໍ?

ພະນັກງານຜູ້ໃຫ້ການຊ່ວຍເຫຼືອດ້ານກົດໝາຍໄດ້ໃຫ້ຂໍ້ມູນກັບມິນາ ກ່ຽວກັບຂັ້ນຕອນໃນການຢ່າຮ້າງ. ແຕ່ເມື່ອງຈາກວ່າລາວໄດ້ຮັບຄວາມຮຸນແຮງ, ລາວຕ້ອງການໃຫ້ແນ່ໃຈວ່ານາງຮູ້ກ່ຽວກັບການບໍລິການອື່ນໆ. ລາວມີບັນຊີລາຍການບໍລິການ (Gender-Based Violence Directory) ແລະ ລາວໄດ້ຖາມນາງວ່າມີສິ່ງໃດແດ່ທີ່ນາງຕ້ອງການຕື່ມ, ນາງເວົ້າວ່າບໍ່ມີແລ້ວ. ແຕ່ລາວໄດ້ບອກນາງຕື່ມ ກ່ຽວກັບການບໍລິການຂອງ ສສຍລ, ການບໍລິການທາງສຸຂະພາບ, ເຈົ້າໜ້າທີ່ຕຳຫຼວດ, ການໃຫ້ຄຳປຶກສາແລະ ອື່ນໆ. ລາວບອກນາງວ່າຖ້ານາງຕ້ອງການ, ນາງ ສາມາດໄປຫາ ສສຍລ ໄດ້ເພາະວ່ານາງໄດ້ຮູ້ກ່ຽວກັບການບໍລິການທັງຫມົດ.

ມິນາ ເວົ້າວ່າບໍ່, ນາງພຽງແຕ່ຕ້ອງການການຢ່າຮ້າງ. ພະນັກງານຜູ້ໃຫ້ການຊ່ວຍເຫຼືອດ້ານກົດໝາຍໄດ້ບອກນາງວ່າຖ້າໃນອະນາຄົດນາງຕ້ອງການການບໍລິການອື່ນໆ,ລາວຍິນດີທີ່ຈະສົ່ງນາງຕໍ່ຫາຫນ່ວຍງານສະເພາະຕາມຄວາມຕ້ອງການຂອງນາງ

10. ການປັບຕົວໃນເຫດການສຸກເສີນ

ໃນສະພາວະສຸກເສີນເນື່ອງມາຈາກໄພພິບັດທຳມະຊາດ, ໂລກລະບາດ ຫຼື ມີເຫດການເກີດຂຶ້ນໂດຍບໍ່ຄາດຄິດເຊິ່ງເຮັດໃຫ້ການບໍລິການມີຄວາມຂັດຂ້ອງລວມທັງມີຄວາມສ່ຽງຕໍ່ຄວາມຮຸນແຮງເນື່ອງຈາກຄວາມກົດດັນ, ມີຄວາມວິຕົກກັງວົນ ແລະ ປັດໄຈອື່ນໆ. ເພື່ອຮັບປະກັນໃຫ້ການບໍລິການຊ່ວຍເຫຼືອໃຫ້ມີຄວາມຕໍ່ເນື່ອງ, ກົນໄກການປະສານງານ ແລະ ຜູ້ໃຫ້ບໍລິການຊ່ວຍເຫຼືອຄວນປະຕິບັດດັ່ງນີ້:

- ສ້າງແຜນການແກ້ໄຂລະດັບຊາດ ຕ້ອງຮັບປະກັນການແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ເປັນບູລິມະສິດສຳຄັນ.
- ກຳນົດການປ່ຽນແປງທີ່ມີຄວາມສ່ຽງພາໃຫ້ເກີດຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ໂດຍຜ່ານການຄາດຄະເນຄວາມສ່ຽງທີ່ອາດຈະເກີດຂຶ້ນ.
- ສ້າງແຜນຍຸດທະສາດການຫຼຸດຜ່ອນຄວາມສ່ຽງ ເພື່ອແກ້ໄຂຄວາມສ່ຽງທີ່ເພີ່ມຂຶ້ນ.
- ດຳເນີນການປະເມີນຜົນແບບວ່ອງໄວຕໍ່ກັບເສັ້ນທາງການສົ່ງຕໍ່ ແລະ ປັບປຸງ ເພື່ອຮັບປະກັນຄວາມຕໍ່ເນື່ອງຂອງການສະໜອງການບໍລິການແລະການປົກປ້ອງ.
- ສະໜັບສະໜຸນການຜັດທະນາຂີດຄວາມສາມາດ ເພື່ອແກ້ໄຂເຫດການສຸກເສີນ.
- ໃຫ້ການຊ່ວຍເຫຼືອທີ່ຈຳເປັນດ້ານເສດຖະກິດ.

ພາກທີ V ການເກັບກຳຂໍ້ມູນ ແລະ ການລາຍງານ

ຂໍ້ມູນບໍລິຫານທີ່ຖືກເກັບກຳເປັນປະຈຳໃນການໃຫ້ບໍລິການແມ່ນແຫຼ່ງຂໍ້ມູນທີ່ສຳຄັນ ທີ່ສາມາດວິເຄາະການສະໜອງຂໍ້ມູນກ່ຽວກັບການເຂົ້າເຖິງການບໍລິການ ຂອງ ຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດຊີວິດ ຈາກຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ຮູບແບບການລາຍງານຄວາມຮຸນແຮງ, ການຕອບສະໜອງ, ຄວາມພ້ອມ ແລະ ຄຸນນະພາບຂອງການບໍລິການໄດ້. ເພື່ອໃຫ້ສາມາດເກັບກຳຂໍ້ມູນທີ່ມີຄຸນນະພາບ ທີ່ສາມາດນຳໃຊ້ສຳລັບການວິເຄາະ ແລະ ການປັບປຸງລະບົບ ມັນເປັນສິ່ງສຳຄັນທີ່ຜູ້ຈັດຕັ້ງປະຕິບັດຕ້ອງຈິງທັງຫມົດທີ່ໃຫ້ບໍລິການ ເລີ່ມຕົ້ນເກັບກຳຂໍ້ມູນຂັ້ນພື້ນຖານ ເພື່ອໃຫ້ຂໍ້ມູນສາມາດຖືກວິເຄາະ ແລະ ມີການປັບປຸງລະບົບຕອບສະໜອງການບໍລິການໄດ້. ໃນເວລາດຽວກັນ, ມັນເປັນສິ່ງສຳຄັນທີ່ຕ້ອງຮັບປະກັນມາດຕະການຄວາມປອດໄພໃນການປົກປ້ອງຂໍ້ມູນ, ການຜັດທະນາລະບົບການແບ່ງປັນທີ່ມີການປ້ອງກັນຄວາມລັບ ແລະ ຄວາມເປັນສ່ວນຕົວ ໃນໄລຍະການວິເຄາະ ແລະ ການລາຍງານ.

1. ຊຸດຂໍ້ມູນພື້ນຖານ

ແຕ່ລະອົງການຈັດຕັ້ງຈະມີການຄຸ້ມຄອງກໍລະນີ ຫຼື ລະບົບການເກັບກຳຂໍ້ມູນຂອງຕົນເອງ. ເຖິງຢ່າງໃດກໍ່ຕາມ ຕ້ອງຮັບປະກັນວ່າມີການເກັບກຳຊຸດຂໍ້ມູນຂັ້ນພື້ນຖານ ເພື່ອສ້າງຄວາມເຂົ້າໃຈຕໍ່ກັບຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ທີ່ຊອກຫາການຊ່ວຍເຫຼືອ ແລະ ສົ່ງເສີມການສົມທຽບຂໍ້ມູນລະຫວ່າງອົງການຈັດຕັ້ງ ແລະ ການວິເຄາະ, ແຕ່ລະອົງການຈັດຕັ້ງຕ້ອງຕົກລົງເຫັນດີນຳກັນຕໍ່ກັບສິ່ງທີ່ຈະເກັບກຳໃນຊຸດຂໍ້ມູນພື້ນຖານດັ່ງຕໍ່ໄປນີ້:

ປະເພດຂອງຄວາມຮຸນແຮງ: ເປັນເອກກະພາບກັນໃນທຸກຂະແໜງການ ເພື່ອສາມາດເກັບກຳຂໍ້ມູນທີ່ສາມາດສົມທຽບກັນໄດ້ (ທີ່ສອດຄ່ອງກັບ ນິຕິກຳ ສາກົນ ແລະ ກົດໝາຍຂອງ ສ ປປ ລາວ), ດັ່ງນີ້:

- ຄວາມຮຸນແຮງທາງເພດ
  - ການຂົ່ມຂືນ (ລວມທັງການຂົ່ມຂືນເປັນກຸ່ມ, ການຂົ່ມຂືນຈາກຄູ່ສົມລົດ)
  - ການລວນລາມທາງເພດ (sexual harassment) ລວມມີການໃຊ້ກຳລັງຈູ່ໂຈມ ຫລື ຂົ່ມເຫງ ເພື່ອລ່ວງລະເມີດທາງເພດ (sexual aassault) (ລວມທັງການພະຍາຍາມຂົ່ມຂືນ ຫຼື ການກະທຳອື່ນໆ ເຊັ່ນ: ທ່າທາງ ຫຼື ຄຳສັບທີ່ຂຽນເປັນລັກສະນະລ່ວງລະເມີດທາງເພດ).
- ຄວາມຮຸນແຮງທາງຮ່າງກາຍ
  - ຄວາມຮຸນແຮງທາງດ້ານຮ່າງກາຍ / ການໃຊ້ກຳລັງຈູ່ໂຈມ (ລວມທັງການຕົບ, ເຕະ, ຍູ້, ທີ່ບໍ່ແມ່ນຄວາມຮຸນແຮງທາງເພດ)
- ຄວາມຮຸນແຮງທາງຊັບສິນ ແລະ ເສດຖະກິດ
  - ການລ່ວງລະເມີດທາງດ້ານເສດຖະກິດ/ ການເງິນ
  - ການປະຕິເສດຊັບພະຍາກອນ ຫຼື ການສືບທອດມູນ, ລາຍໄດ້, ການເຂົ້າເຖິງໂຮງຮຽນ, ທຳລາຍຊັບສິນ)
- ຄວາມຮຸນແຮງທາງຈິດໃຈ
  - ການລ່ວງລະເມີດທາງຈິດໃຈ /ອາລົມ (ຂົ່ມຂູ່ຈະກະທຳຄວາມຮຸນແຮງທາງດ້ານຮ່າງກາຍ ຫຼື ທາງເພດ, ການບັງຄັບໃຫ້ໂດດດ່ຽວ)
- ອື່ນໆ
  - ຄວາມຮຸນແຮງທີ່ບໍ່ແມ່ນຄວາມຮຸນແຮງບົນພື້ນຖານທາງເພດ (ຕາມທີ່ກ່າວມາຂ້າງເທິງ)

- ວັນທີເກີດເຫດຄວາມຮຸນແຮງ
- ຂໍ້ມູນກ່ຽວກັບຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ: ເພດ, ອາຍຸ, ອາຊີບ ແລະ ຄວາມສຳພັນຂອງຜູ້ລອດຊີວິດກັບຜູ້ກະທຳຜິດ, ປະເທດເກີດ, ສັນຊາດ, ສະຖານະພາບຄວາມພິການ.
- ຂໍ້ມູນກ່ຽວກັບຜູ້ກະທຳຜິດ: ກຸ່ມອາຍຸ (ຕາມການລາຍງານຂອງຜູ້ລອດຊີວິດ) ແລະ ເພດ (ຕາມລາຍງານຂອງຜູ້ລອດຊີວິດ). ຖ້າຜູ້ໃຫ້ບໍລິການ/ລະບົບບໍລິຫານ ມີການຕິດຕໍ່ກັບຜູ້ກະທຳຜິດ, ໃຫ້ເກັບກຳອາຍຸຕົວຈິງແລະເພດຂອງຜູ້ກະທຳຜິດ, ອາຊີບ, ປະເທດທີ່ເກີດ, ປະເທດທີ່ຢູ່ອາໄສແລະສະຖານະພາບຄວາມພິການ

.

- ການລົງທະບຽນ: ວັນທີຂອງການລົງທະບຽນຄວາມຮຸນແຮງ; ການຈົດທະບຽນນິຕິບຸກຄົນ /ບຸກຄົນ ແລະ ຂະແໜງງານຂອງເຂົາເຈົ້າ (ຖ້າຫາກວ່າແມ່ນຜູ້ໃຫ້ບໍລິການ)
- ການອ້າງອີງທາງພູມສັນຖານ: ບ່ອນທີ່ຄວາມຮຸນແຮງເກີດຂຶ້ນ (ເຊັ່ນ: ເມືອງ/ບ້ານ, ແຂວງ)
- ສະຖານທີ່ເກີດຄວາມຮຸນແຮງ: ຕົວຢ່າງ: ເຮືອນ, ໂຮງຮຽນ, ບ່ອນເຮັດວຽກ, ສະຖານທີ່ສາທາລະນະ, ຕ່າງປະເທດ
- ໃຫ້ລະບຸຖ້າຄວາມຮຸນແຮງໄດ້ຖືກກະທຳໂດຍການນຳໃຊ້ ຄອມພິວເຕີ (ອາດຊະຍາກຳທາງອິນເຕີເນັດ)
- ການຕອບກັບຕໍ່ການບໍລິການທີ່ສະໜອງໃຫ້ (ແມ່ນ/ບໍ່/ບໍ່ແທດເໝາະ/ຜູ້ລອດຊີວິດປະຕິເສດ/ຜູ້ລອດຊີວິດຕັດສິນໃຈກັບຄືນມາໃນພາຍຫຼັງ); ການສົ່ງຕໍ່ (ແມ່ນ/ບໍ່/ບໍ່ແທດເໝາະ/ຜູ້ລອດຊີວິດປະຕິເສດ/ການສົ່ງຕໍ່ໃຫ້ການບໍລິການໃດ).
- ຊຸດຂໍ້ມູນພື້ນຖານຈະປະກອບສ່ວນເຂົ້າໃນບົດລາຍງານແຫ່ງຊາດໃນການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ (CEDAW), ບົດລາຍງານແບບສະໝັກໃຈເປົ້າຫມາຍການພັດທະນາແບບຍືນຍົງ (SDGs), ຖະແຫລງການ ແລະ ແຜນປະຕິບັດງານປັກກິ່ງ, ແຜນດຳເນີນງານຂອງຄະນະກຳມາທິການອາຊຽນ ວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດທິຂອງແມ່ຍິງ ແລະ ເດັກ (ACWC) ເຊິ່ງມີການລາຍງານເປັນປົກກະຕິ. ຂໍໃຫ້ແນ່ໃຈວ່າຮູບແບບການລາຍງານໄດ້ກວມເອົາຕົວຊີ້ວັດທີ່ສຳຄັນຂອງບົດລາຍງານຂ້າງເທິງຕາມຄວາມເໝາະສົມ.

2. ການເກັບມ້ຽນຂໍ້ມູນ

ຂໍ້ມູນຂອງກໍລະນີທີ່ມີການລະບຸຕົວຕົນຕ້ອງເກັບຮັກສາໄວ້ຢ່າງປອດໄພ. ຖ້າຫາກວ່າຂໍ້ມູນ/ແຟ້ມປະຫວັດຂອງກໍລະນີ ເປັນເຈ້ຍເອກະສານ, ເອກະສານເຫຼົ່ານັ້ນຕ້ອງໄດ້ເກັບຮັກສາໄວ້ໃນຕູ້ທີ່ມີກຸນແຈໃສ່ໄວ້ຄົງແນ່ ແລະ ມີແຕ່ພະນັກງານທີ່ໄດ້ຮັບອະນຸຍາດເທົ່ານັ້ນຈຶ່ງສາມາດເຂົ້າເຖິງເອກະສານເຫຼົ່ານັ້ນໄດ້. ຖ້າຫາກວ່າຂໍ້ມູນ/ແຟ້ມປະຫວັດຂອງກໍລະນີໄດ້ຖືກເກັບຮັກສາໄວ້ທາງເອເລັກໂຕຣນິກ, ຕ້ອງໄດ້ມີລະບົບປ້ອງກັນຂໍ້ມູນເພື່ອປ້ອງກັນການເຂົ້າເຖິງຂໍ້ມູນໂດຍສະເພາະຂໍ້ມູນທີ່ມີການລະບຸຕົວຕົນ. ແຕ່ລະອົງການຕ້ອງໄດ້ສ້າງລະບຽບການໃນການເກັບມ້ຽນຂໍ້ມູນຂອງຕົນເອງ.

3. ການແລກປ່ຽນຂໍ້ມູນ

ຂໍ້ມູນທີ່ມີການລະບຸຕົວຕົນຂອງຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດຊີວິດ ສາມາດນຳໄປເຜີຍແຜ່ ແລະ ແລກປ່ຽນໄດ້ໃນກໍລະນີທີ່ໄດ້ຮັບການອະນຸຍາດຈາກເຂົາເຈົ້າເທົ່ານັ້ນ.

ແຟ້ມປະຫວັດຂອງຜູ້ມາຮັບການບໍລິການສາມາດນຳໄປເຜີຍແຜ່ ແລະ ແລກປ່ຽນໄດ້ເພື່ອຈຸດປະສົງວຽກງານການສົ່ງຕໍ່ເທົ່ານັ້ນ ແລະ ຕ້ອງໄດ້ຮັບການຍິນຍອມເຫັນດີຈາກຜູ້ລອດຊີວິດ.

ສຳລັບການລາຍງານຂໍ້ມູນພື້ນຖານໃນຊຸດຂໍ້ມູນທີ່ມີການເກັບ, ຂໍ້ມູນສະຖິຕິການແຍກເພດສາມາດນຳໄປເຜີຍແຜ່ ແລະ ແລກປ່ຽນໄດ້ ໂດຍບໍ່ມີຂໍ້ມູນທີ່ມີການລະບຸຕົວຕົນ. ຕົວຢ່າງ ຂໍ້ມູນກ່ຽວກັບຈຳນວນ ແລະ ປະເພດຂອງກໍລະນີ, ແຕ່ບໍ່ມີຊື່ຫຼືທີ່ຢູ່ຂອງກໍລະນີ.

ຊຸດຂໍ້ມູນພື້ນຖານຄວນຈະເຊື່ອມໂຍງກັບຖານຂໍ້ມູນທີ່ມີຢູ່ແລ້ວຂອງລັດຖະບານ. ເຖິງຢ່າງໃດກໍ່ຕາມ, ແມ່ຍິງມີສິດທີ່ຈະປະຕິເສດການບໍລິການ, ຮັບການບໍລິການຈາກຜູ້ໃຫ້ບໍລິການສະເພາະ, ດັ່ງນັ້ນຕ້ອງມີການເຄົາລົບ. ຄວາມເປັນສ່ວນຕົວຂອງຂໍ້ມູນ.

4. ການລາຍງານ

ລະບົບຖານຂໍ້ມູນ ແລະ ສະຖິຕິ ຕ້ອງໄດ້ຮັບການພັດທະນາສຳລັບແຕ່ລະອົງການເພື່ອລາຍງານຂໍ້ມູນ ທີ່ບໍ່ໄດ້ລະບຸຕົວຕົນໂດຍອີງໃສ່ຊຸດຂໍ້ມູນພື້ນຖານ. ແຕ່ລະອົງການຈັດຕັ້ງທີ່ເຂົ້າຮ່ວມຈະຕ້ອງມີການລາຍງານປະຈຳປີ ຕໍ່ກັນໄປການປະສານງານກ່ຽວກັບການສະຫຼຸບຂໍ້ມູນຂັ້ນພື້ນຖານ ທີ່ກຳນົດໄວ້ສຳລັບການວິເຄາະ.

5. ການວິເຄາະຂໍ້ມູນ

ການທຳຄວາມເຂົ້າໃຈຕໍ່ກັບຂໍ້ມູນທີ່ເກັບກຳໄດ້ໃນແຕ່ລະໄລຍະ ຈະສາມາດຊ່ວຍກຳນົດແນວໂນ້ມຂອງປະເພດຜູ້ລອດຊີວິດຈາກຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃນການຂໍການຊ່ວຍເຫຼືອ, ຄວາມຖີ່ ແລະ ຄວາມຮຸນແຮງຂອງປະເພດຄວາມຮຸນແຮງທີ່ເຂົາເຈົ້າພົບພໍ້, ຮູບແບບໃນການເຂົ້າເຖິງການບໍລິການ ເພື່ອເປັນທິດທາງໃນການປັບປຸງລະບົບການບໍລິການໃຫ້ດີຂຶ້ນໃນຕໍ່ໜ້າ. ການວິເຄາະຂໍ້ມູນທີ່ສັງລວມໄດ້ຈາກແຕ່ລະຂະແໜງການ ຈະເປັນທິດທາງໃນການພັດທະນາວຽກງານປ້ອງກັນ ແລະ ໂຕ້ຕອບກັບຄວາມຮຸນແຮງໄດ້ຢ່າງຕໍ່ເນື່ອງ.

ພາກທີ VI ການຝຶກອົບຮົມ

ຄະນະ ຄຸ້ມຄອງການປະສານງານ ແລະ ກົນໄກການສົ່ງຕໍ່ ຕ້ອງມີຄວາມເຂົ້າໃຈກ່ຽວກັບພາລະບົດບາດ ຂອງຕົນເອງ, ພາລະບົດບາດຂອງໜ່ວຍງານອື່ນໆ, ເຂົ້າໃຈເລິກເຊິ່ງເຖິງຫຼັກການ ແລະ ຂໍ້ແນະນຳໃນການປະຕິບັດທີ່ດີ ຕໍ່ກັບການໂຕ້ຕອບກັບຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ. ສິ່ງເຫຼົ່ານີ້ຮຽກຮ້ອງໃຫ້ມີການຝຶກອົບຮົມຢ່າງເປັນລະບົບ ແລະ ມີການພັດທະນາຄວາມສາມາດ. ການຝຶກອົບຮົມທີ່ຕ້ອງໄດ້ສຸມໃສ່ລວມມີ:

- ຄວາມເຂົ້າໃຈຕໍ່ກັບຄວາມຮຸນແຮງຕໍ່ແມ່ຍິງ, ຄຸນລັກສະນະທີ່ຫຼາກຫຼາຍ, ສາເຫດ ແລະ ຜົນສະທ້ອນ.
- ການແນະນຳໃຫ້ມີຄວາມເຂົ້າໃຈຕໍ່ກັບຂັ້ນຕອນມາດຕະຖານການດຳເນີນງານຂອງແຕ່ລະຂະແໜງການ.
- ການແນະນຳໃຫ້ເຂົ້າໃຈກ່ຽວກັບຊຸດການບໍລິການທີ່ຈຳເປັນ.
- ຮັບປະກັນໃຫ້ກຸ່ມທີ່ມີຄວາມສ່ຽງ ແລະ ຜູ້ດ້ອຍໂອກາດ ສາມາດເຂົ້າເຖິງຂໍ້ມູນ ແລະ ການບໍລິການ.
- ທັກສະການສື່ສານຂັ້ນພື້ນຖານ.
- ນຳໃຊ້ວິທີການເອົາຜູ້ລອດຊີວິດເປັນໃຈກາງ.
- ການປະເມີນຄວາມປອດໄພ ແລະ ການວາງແຜນ.
- ການເກັບກຳຂໍ້ມູນ ແລະ ການຄຸ້ມຄອງຂໍ້ມູນ.

ເອກະສານສ້ອມທ້າຍ 1: ແບບຟອມການລາຍງານກໍລະນີຄວາມຮຸນແຮງບົນພື້ນຖານທາງເພດແບບຫຼາຍພາກສ່ວນ

ຄຳອະທິບາຍ: ຫົກປະເພດຫຼັກຂອງການໃຊ້ຄວາມຮຸນແຮງບົນພື້ນຖານທາງເພດ

ຫົກປະເພດຫຼັກຂອງຄວາມຮຸນແຮງທາງເພດ-ທີ່ອີງໃສ່ບົດບາດຍິງຊາຍ(GBV) ໄດ້ຖືກສ້າງຂຶ້ນເພື່ອເກັບ ກຳ ຂໍ້ມູນ ແລະ ການວິເຄາະສະຖິຕິຂອງ GBV. ແຕ່ລະປະເພດຫຼັກເຫຼົ່ານີ້ ຄວນຈະຖືກໃຊ້ໃນການອ້າງອີງເຖິງ GBV ເທົ່ານັ້ນ ເຖິງແມ່ນວ່າບາງອັນອາດໃຊ້ໄດ້ກັບ ຄວາມຮຸນແຮງແບບອື່ນໆທີ່ບໍ່ອີງໃສ່ບົດບາດຍິງຊາຍ:

1. **ການຂົ່ມຂືນ:** ການບັງຄັບສອດໃສ່ (ເຖິງຈະເປັນການສອດໃສ່ຄ່ອຍໆ) ຊ່ອງຄອດ, ຮູທະວານ ຫຼື ປາກ ດ້ວຍອະໄວຍະວະເພດ ຫຼື ອະໄວຍະວະອື່ນໆຂອງຮ່າງກາຍ.ນອກຈາກນີ້ຍັງລວມເຖິງການບັງຄັບສອດໃສ່ ຊ່ອງຄອດ ຫຼື ຮູທະວານດ້ວຍວັດຖຸທີ່ບໍ່ມີການຍິນຍອມຂອງຜູ້ຖືກກະທຳ.
2. **ການໃຊ້ກຳລັງຈູ່ໂຈມ ຫລື ຂົ່ມເຫັງເພື່ອລ່ວງລະເມີດທາງເພດ (sexual assult):** ການສຳພັດທາງເພດ ທີ່ບໍ່ໄດ້ມີການຍິນຍອມໃນຮູບແບບໃດໆກໍ່ຕາມ ລວມທັງ ແລະ ບໍ່ລວມທັງການບັງຄັບສອດໃສ່. ຕົວຢ່າງ ລວມມີ: ການພະຍາຍາມຂົ່ມຂືນ ພ້ອມກັບການຈູບ, ການລູບ, ຈັບບາຍ ອະໄວຍະວະເພດ ຫຼື ກົ້ນທີ່ບໍ່ ເປັນ ທີ່ຕ້ອງການຂອງຜູ້ຖືກກະທຳ. ການຕັດອະໄວຍະເພດຍິງ (FGM/C) ແມ່ນການກະທຳຂອງຄວາມຮຸນ ແຮງ ທີ່ສົ່ງຜົນກະທົບຕໍ່ ອະໄວຍະວະເພດ, ດັ່ງນັ້ນ FGM/C ຄວນຈະຖືກຈັດເປັນປະເພດການຂົ່ມເຫັງ ທາງເພດ. ປະເພດເຫດການ ແບບນີ້ບໍ່ລວມ ເຖິງການຂົ່ມ ຂືນ, ເຊັ່ນ: ການບັງຄັບສອດໃສ່ໄດ້ເກີດຂຶ້ນ.
3. **ການໃຊ້ກຳລັງເພື່ອລ່ວງລະເມີດທາງດ້ານຮ່າງກາຍ (physical assult):** ແມ່ນຮູບແບບການກະທຳ ຄວາມຮຸນແຮງທາງຮ່າງກາຍທີ່ບໍ່ມີລັກສະນະທາງເພດ ຫຼື ບໍ່ກ່ຽວກັບເພດ. ຕົວຢ່າງລວມມີ: ການຕີ, ການຕົບ, ການບີບຄໍ, ການຕັດຝັນ, ການຍູ້, ການຈູດ, ການຍິງ ຫຼື ການນຳໃຊ້ອາວຸດຊະນິດໃດໜຶ່ງ, ການໂຈມຕີດ້ວຍກົດ (ທາງເຄມີ) ຫຼື ການກະທຳອື່ນໆທີ່ເຮັດໃຫ້ເກີດຄວາມເຈັບ ປວດ, ບໍ່ສະບາຍ ຫຼື ບາດເຈັບ. ປະເພດເຫດການນີ້ບໍ່ລວມການຕັດອະໄວຍະເພດຍິງ (FGM/C).
4. **ການບັງຄັບໃຫ້ແຕ່ງງານ:** ການແຕ່ງງານຂອງບຸກຄົນທີ່ຂັດກັບຄວາມປະສົງຂອງລາວ.
5. **ການປະຕິເສດຊັບພະຍາກອນ, ໂອກາດ ຫຼື ການບໍລິການ/ການເງິນ/ຄວາມຮຸນແຮງທາງເສດຖະກິດ:** ການ ປະຕິເສດການເຂົ້າເຖິງຊັບພະຍາກອນ ທາງເສດຖະກິດ/ຊັບສິນ ຫຼື ໂອກາດ ໃນການດຳລົງຊີວິດ, ການ ສຶກສາ, ສາທາລະນະສຸກ ຫຼື ການບໍລິການສັງຄົມອື່ນໆ. ຕົວຢ່າງລວມມີ: ແມ່ຫມ້າຍທີ່ຖືກຖອນອອກ ຈາກການໄດ້ ຮັບມໍລະດົກ, ລາຍຮັບທີ່ຖືກບັງຄັບໂດຍ ຄູ່ຮ່ວມຊີວິດ ຫຼື ສະມາຊິກໃນຄອບຄົວ, ແມ່ຍິງທີ່ ຖືກຫ້າມບໍ່ໃຫ້ໃຊ້ຢາຄຸມກຳເນີດ, ເດັກຍິງຖືກຫ້າມບໍ່ໃຫ້ເຂົ້າໂຮງຮຽນ, ແລະ ອື່ນໆ.
6. **ການລ່ວງລະເມີດທາງຈິດໃຈ / ຄວາມຮູ້ສຶກ:** ການກໍ່ໃຫ້ເກີດຄວາມເຈັບປວດທາງດ້ານຈິດໃຈ ຫຼື ທາງ ອາລົມ, ການເອົາໃຈໃສ່ຈາກບຸກຄົນໃດໜຶ່ງ ທີ່ເກີນຄວາມຕ້ອງການຂອງຜູ້ຖືກເອົາໃຈໃສ່. ຕົວຢ່າງເຊັ່ນ: ການຂົ່ມຂູ່ຈະໃຊ້ຄວາມຮຸນແຮງທາງຮ່າງກາຍ ຫຼື ທາງເພດ, ການຂົ່ມຂູ່, ສ້າງຄວາມອັບອາຍ, ການບັງ ຄັບໃຫ້ຢູ່ໂດດດ່ຽວ, ການສະກົດຮອຍຕາມ, ການຂົ່ມເຫັງ, ການເອົາໃສ່ໃຈທີ່ບໍ່ເປັນທີ່ຕ້ອງການຂອງຜູ້ ຖືກກະທຳ, ການເວົ້າ, ທ່າທາງ ຫຼື ຄຳເວົ້າທີ່ມີລັກສະນະທາງເພດ ແລະ/ຫຼື ຂົ່ມຂູ່, ການທຳລາຍສິ່ງທີ່ຮັກ ແລະ ອື່ນໆ.

1. ໄລຍະເວລາຈັດຕັ້ງປະຕິບັດກິດຈະກຳ (ຕົວຢ່າງ: 1 ມັງກອນ ຫາ 30 ເມສາ 2022):
2. ຊື່ອົງການຈັດຕັ້ງປະຕິບັດ/ກົມທີ່ຮັບຜິດຊອບ:
3. ປະເພດຄວາມຮຸນແຮງທີ່ອີງໃສ່ບົດບາດຍິງຊາຍຂອງກໍລະນີທີ່ລາຍງານ

ປະເພດຂອງຄວາມຮຸນແຮງບົນພື້ນຖານທາງເພດ	ຈຳນວນເດັກຍິງ (≤ 17 ປີ)	ຈຳນວນ ແມ່ຍິງ (≥ 18 ປີ)	ຈຳນວນເດັກຊາຍ (≤17 ປີ)	ຈຳນວນຜູ້ຊາຍ (≥18ປີ)	ຈຳນວນລວມ ເດັກຍິງ ແລະ ແມ່ຍິງ	ຈຳນວນລວມ ເດັກຊາຍ ແລະ ຜູ້ຊາຍ	ຄວາມຮຸນແຮງທາງເພດທີ່ອຳນວຍຄວາມສະດວກໂດຍເຕັກໂນໂລຊີ	ຈຳນວນຜູ້ລອດຊີວິດທີ່ມີຄວາມພິການ? (ຮ່າງກາຍ, ເບິ່ງເຫັນ, ໄດ້ຍິນ, ສຸຂະພາບຈິດ, ສະຕິປັນຍາ, ຄວາມຈຳ ແລະ ອື່ນໆ)							ຈຳນວນຜູ້ລອດຊີວິດຈາກຫຼາກຫຼາຍຊົນເຜົ່າ				ປະເພດຂອງຄວາມຮຸນແຮງໃນກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ	
								ຮ່າງກາຍ	ການເບິ່ງເຫັນ	ການໄດ້ຍິນ	ສຸຂະພາບຈິດ	ສະຕິປັນຍາ	ຄວາມຈຳ	ອື່ນໆ	ລາວ-ໄຕ	ມອນ-ຂະແມ	ມົ້ງ-ອີວ ມ້ຽນ	ຈີນ-ຕິເບດ	ການໃຊ້ຄວາມຮຸນແຮງໂດຍສະມາຊິກໃນຄອບຄົວ	ການໃຊ້ຄວາມຮຸນແຮງໂດຍບຸກຄົນອື່ນ
ຄວາມຮຸນແຮງທາງເພດ																					
ການຂົ່ມຂືນ																					
ການໃຊ້ກຳລັງຈູ່ໂຈມ ຫລື ຂົ່ມເຫງເພື່ອລວງລະເມີດທາງເພດ (Sexual assault)																					
ການລວນລາມທາງເພດ																					

(Sexual Harassment)																			
ການບັງຄັບ ໃຫ້ແຕ່ງງານ																			
ຄວາມຮຸນແຮງທາງດ້ານຮ່າງກາຍ																			
ຄວາມຮຸນແຮງດ້ານ ຮ່າງກາຍ / ການ ຈູໂຈມທຳຮ້າຍ																			
ຄວາມຮຸນແຮງທາງດ້ານການເງິນ/ສັບສົນ/ເສດຖະກິດ																			
ການລ່ວງລະເມີດ ທາງດ້ານເສດຖະ ກິດ/ການເງິນ																			
ການປະຕິເສດການ ເຂົ້າເຖິງຊັບພະຍາ ກອນ ແລະ ໂອກາດ																			
ຄວາມຮຸນແຮງທາງດ້ານອາລົມຈິດໃຈ																			
ການລ່ວງລະເມີດ ທາງດ້ານຈິດໃຈ/ ອາລົມ																			

ອື່ນໆ													
ຄວາມຮຸນແຮງທີ່ບໍ່ແມ່ນຄວາມຮຸນແຮງບົນພື້ນຖານທາງເພດ (ທີ່ບໍ່ນອນຢູ່ໃນບັນດາພຶດຕິກຳຂ້າງເທິງ)													
ລວມຍ່ອຍ													
ຈຳນວນເຫດການລາຍງານຄວາມຮຸນແຮງບົນພື້ນຖານທາງເພດທັງໝົດ													

4. ເພດຂອງຜູ້ລ່ວງລະເມີດ

ເພດຂອງຜູ້ລ່ວງລະເມີດ	**ເພດຊາຍ**	**ເພດຍິງ**	**ທັງສອງ**	**ບໍ່ສາມາດລະບຸໄດ້**
ຈຳນວນທັງຫມົດ				

5. ຄວາມສຳພັນຂອງຜູ້ລ່ວງລະເມີດ ກັບ ຜູ້ລອດຊີວິດ

ຄວາມສຳພັນຂອງ ຜູ້ລ່ວງລະເມີດ ກັບ ຜູ້ລອດຊີວິດ	**ຄູ່ຮັກ/ອະດີດຄູ່ຮັກ**	**ຄອບຄົວ** (ພໍ່ແມ່, ອ້າຍ ,ເອື້ອຍ,ນ້ອງ, ສະມາຊິກ ຄອບຄົວຂອງ ຝ່າຍຊາຍ)	**ຄົນທີ່ຮູ້ຈັກ ໃນຊຸມຊົນ** (ເພື່ອນ, ເພື່ອນບ້ານ)	**ບຸກຄົນທີ່ຮູ້ຈັກກັນ ທີ່ມີໜ້າທີ່ເບິ່ງແຍງ ຜູ້ ລອດຊີວິດ** (ຕົວຢ່າງ: ຜູ້ຄຸມງານ/ ນາຍຈ້າງ, ຄູ, ຜູ້ເບິ່ງແຍງ)	**ໝູ່ໃນບ່ອນເຮັດວຽກ /ໂຮງຮຽນ/ ການຝຶກອົບຮົມ/ ຜູ້ໃຫ້ບໍລິການ** (ເພື່ອນຮ່ວມງານ,ນັກຮຽນ)	**ບໍ່ມີຄວາມສຳພັນ** (ຄົນແປກຫນ້າ) / ບໍ່ສາມາດລະບຸໄດ້
ຈຳນວນທັງຫມົດ						

6. ການບໍລິການທີ່ສະໜອງໃຫ້ ຫຼື ການການບໍລິການສົ່ງຕໍ່ທີ່ໄດ້ເຮັດ

ປະເພດຂອງການບໍລິການ	ການບໍລິການທີ່ສະໜອງໃຫ້ໂດຍກົງ ແລະ ການສົ່ງຕໍ່ທີ່ໄດ້ເຮັດ		
	ການບໍລິການທີ່ສະໜອງໃຫ້ໂດຍກົງ	ສົ່ງຕໍ່ໃຫ້ອົງກອນ ຫຼື ພະແນກອື່ນ (ກະລຸນາລະບຸ)	ລວມ
ການໃຫ້ຄຳປຶກສາ (ສຸຂະພາບຈິດ / ການສະໜັບສະໜູນທາງດ້ານຈິດໃຈ)			
ການຊ່ວຍເຫຼືອທາງດ້ານກົດໝາຍ/ການຊ່ວຍເຫລືອລ້ຳ			
ທີ່ພັກອາໄສທີ່ປອດໄພ			
ການດູແລເດັກ			
ການດູແລທາງການແພດ			
ການຊ່ວຍເຫຼືອດ້ານເສດຖະກິດ/ການເງິນ/ຊັບສິນ			
ການສຶກສາ ແລະ ການຝຶກ ອົບຮົມ ວິຊາຊີບ			
ການສົ່ງກັບຄືນຄອບຄົວ ແລະ ສັງຄົມ			

ຮວບຮວມ/ລ້ຽບລຽງໂດຍ:

ຫົວໜ້າອົງການຮັບຜິດຊອບ/ສາຍກະຊວງ:

ເອກະສານຊ້ອນທ້າຍ 2: ການລາຍງານເມື່ອເທັກໂນໂລຍີ ຖືກນຳໃຊ້ໃນຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ



ຕົວຢ່າງການແຈ້ງຄວາມ: ນາງ ກໍ ໄດ້ຖືກບຸກຄົນ ຫຼື ກຸ່ມຄົນຕົວຍົວະ ແລະ ຫຼອກລວງ ໄປເຮັດ ວຽກຄ້າປະເວນີ ຊຶ່ງ ນາງ ກໍ ໄດ້ຕົກ ເປັນຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ຕໍ່ມານາງກໍໄດ້ເຂົ້າໄປແຈ້ງກັບ ເຈົ້າໜ້າທີ່ຕຳຫຼວດ ເພື່ອດຳເນີນຄະດີ ຕໍ່ ບຸກຄົນ ຫຼື ກຸ່ມຄົນທີ່ຕົວຍົວະ ແລະ ຫຼອກລວງຕົນເອງ ໃນກໍລະນີນີ້ ເຈົ້າໜ້າທີ່ຕຳຫຼວດເຫັນວ່າຂໍ້ມນຫຼັກຖານບໍ່ຄົບ ຖ້ວນເພາະຂໍ້ມູນການພົວພັນກັນດັ່ງກ່າວ ແມ່ນຢູ່ໃນອິນເຕີເນັດ. ສະນັ້ນ, ເຈົ້າໜ້າທີ່ຕຳຫຼວດຕ້ອງພົວພັນຂໍຂໍ້ມູນຫຼັກຖານ ຂອງ ບຸກຄົນ ຫຼື ກຸ່ມຄົນ ກະທຳຜິດ ດັ່ງກ່າວເພີ່ມຈາກ ກົມຄວາມປອດໄພໄຊເບີ ເພື່ອຄົ້ນຫາ, ຕິດຕາມ ແລະ ສັງລວມ ຫາຫຼັກຖານທີ່ກ່ຽວຂ້ອງຕ່າງໆໃນອິນເຕີເນັດ ເພື່ອສົ່ງໃຫ້ເຈົ້າໜ້າທີ່ຕຳຫຼວດປະກອບເຂົ້າໃນການສືບສວນ-ສອບສວນ.

ຕົວຢ່າງການແຈ້ງເຫດ: ນາງ ກໍ ໄດ້ຖືກບຸກຄົນ ຫຼື ກຸ່ມຄົນຕົວຍົວະ ແລະ ຫຼອກລວງ ໄປເຮັດວຽກຄ້າປະເວນີ ຊຶ່ງນາງ ກໍ ໄດ້ຕົກເປັນຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ຕໍ່ມາ ນາງ ກໍ ໄດ້ແຈ້ງເຫດເຂົ້າຫາກົມຄວາມປອດໄພໄຊເບີ ເພື່ອຂໍຄຳປຶກສາ ແລະ ຄົ້ນຫາ, ຕິດຕາມ ແລະ ສັງລວມຫາຫຼັກຖານທີ່ກ່ຽວຂ້ອງຕ່າງໆ ໃນອິນເຕີເນັດ ເພື່ອກະກຽມສົ່ງໃຫ້ເຈົ້າໜ້າທີ່ຕຳ ຫຼວດ ເມື່ອນາງ ກໍ ໄປແຈ້ງຄວາມແລ້ວ ແລະ ເຈົ້າໜ້າ ທີ່ຕ້ອງການຫຼັກຖານທີ່ກ່ຽວຂ້ອງຕ່າງໆ ໃນອິນເຕີເນັດ ທາງກົມ ຄວາມປອດໄພໄຊເບີກໍ່ສາມາດປະກອບໃຫ້ໄດ້ຢ່າງວ່ອງໄວ ເພື່ອເອົາເຂົ້າ ໃນການສືບສວນ-ສອບສວນຢ່າງທັນການ.

Technical support by:

Financial support by:

Australian Aid

ຈັດພິມຄັ້ງທຳອິດ: ຈຳນວນ 800 ສະບັບ (ພາສາລາວ)

ຈັດພິມໂດຍ:

1. ຫ້ອງການ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ
   ຖະໜົນທ່າເດື່ອ, ບ້ານບຶງຂະຫຍອງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
   ອີເມວ: ncawmcpermanentsec@gmail.com
2. ອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ